ກະຊວງພະລັງງານ ແລະ ບໍ່ແຮ່

ຍຸດທະສາດການພັດທະນາພະລັງງານໄຟຟ້າ ຂອງ ສປປ ລາວ ປີ 2021-2030

ທັນວາ 2021

(Ver. 22 Dec 2021)

ສາລະບານ

ຄຳຫຍໍ້ vii

ອະທິບາຍສັບ x

ຕາຕະລາງ xi

ຮູບພາບ xv

ບົດນຳ xvii

ພາກທີ I ສະຫຼຸບຕີລາຄາການພັດທະນາພະລັງງານໄຟຟ້າໄລຍະຜ່ານມາ 1

1.1 ຄວາມຕ້ອງການໄຟຟ້າ 2

1.2. ການຜະລິດໄຟຟ້າ 3

1.3. ລະບົບສາຍສົ່ງໄຟຟ້າ 4

ພາກທີ II ນະໂຍບາຍພະລັງງານຂອງ ສປປ ລາວ 6

2.1 ນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ 6

2.2 ຖ່ານຫີນ 6

2.3 ພະລັງງານທົດແທນ 6

2.4 ການພັດທະນາແຫຼ່ງຜະລິດພະລັງງານໄຟຟ້າ 7

2.4.1 ໄຟຟ້ານ້ຳຕົກ 7

2.4.2 ໄຟຟ້າຄວາມຮ້ອນທີ່ນຳໃຊ້ຖ່ານຫີນເປັນເຊື້ອໄຟ 8

2.4.3 ການຜະລິດໄຟຟ້າຈາກພະລັງງານທົດແທນ 9

2.4.4 ການປະສົມປະສານແຫຼ່ງຜະລິດພະລັງງານໄຟຟ້າ 9

2.5 ພັດທະນາລະບົບສາຍສົ່ງໄຟຟ້າ 10

2.6 ພັດທະນາລະບົບຈຳໜ່າຍ 12

2.7 ຄວາມໝັ້ນຄົງດ້ານພະລັງງານ 13

2.7.1 ການສຳຮອງນ້ຳມັນເຊື້ອໄຟ 13
2.7.2 ປະລິມານກຳລັງຜະລິດໄຟຟ້າສຳຮອງ 13
2.8 ການພັດທະນາຕະຫຼາດພະລັງງານ 14
2.8.1 ຕະຫຼາດພາຍໃນ 14
2.8.2 ຕະຫຼາດພາກພື້ນ 14
2.9 ນະໂຍບາຍລາຄາໄຟຟ້າ 15
2.9.1 ຂະແໜງອຸດສະຫະກຳ 16
2.9.2 ຂະແໜງກະສິກຳ ແລະ ການຄ້ຳປະກັນສະບຽງອາຫານ 16
2.9.3 ຂະແໜງໂຍທາທິການ ແລະ ຂົນສົ່ງ 17
2.10 ການອະນຸລັກ ແລະ ປະຢັດພະລັງງານ 17
ພາກທີ III ການຄາດຄະເນຄວາມຕ້ອງການໄຟຟ້າ 18
3.1 ຫຼັກການຄາດຄະເນຄວາມຕ້ອງການໄຟຟ້າ 18
3.1.1. ກໍລະນີພື້ນຖານ (BAU) 18
3.1.2. ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ (EV) 19
3.1.3. ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN) 19
3.1.4. ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ ແລະ ກໍລະນີອຸດສາຫະກຳເພີ່ມຂຶ້ນ (EV+IN) 20
3.1.5. ກໍລະນີເກີດພະຍາດລະບາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃຫ່ມ (COVID-19) 20
3.2 ການຄາດຄະເນຄວາມຕ້ອງການໄຟຟ້າແບ່ງຕາມແຂວງ 20
3.2.1 ກໍລະນີພື້ນຖານ (BAU) 20
3.2.2 ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ (EV) 22
3.2.3 ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN) 23
3.2.4 ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ ແລະ ກໍລະນີອຸດສາຫະກຳເພີ່ມຂຶ້ນ (EV+IN) 24
3.2.5 ກໍລະນີເກີດພະຍາດລະບາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃຫ່ມ (COVID-19) 25

3.3 ການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມຂະແໜງການ 25
3.3.1 ກໍລະນີພື້ນຖານ (BAU) 25
3.3.2 ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ (EV) 26
3.3.3 ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN) 26
3.4 ສະຫຼຸບ 27
ພາກທີ IV ການພັດທະນາແຫຼ່ງຜະລິດໄຟຟ້າ 30
4.1. ສະພາບລວມ 30
4.2. ທິດທາງ: 31
4.3. ເປົ້າໝາຍ 31
4.3.1. ຫຼັກການໃນການພັດທະນາໂຄງການຮັບໃຊ້ພາຍໃນ 31
4.3.2. ເງື່ອນໄຂຄັດເລືອກໂຄງການຮັບໃຊ້ພາຍໃນ 32
4.3.3. ຜົນການວິເຄາະ ແລະ ການບັນຈຸ ໂຄງການເຂົ້າໃນແຜນ 34
4.3.4. ການສຳຮອງພະລັງງານໄຟຟ້າ 48
4.3.5. ພະລັງງານຕົກເຮ່ຍໃນລະບົບ ແລະ ການບຳລຸງຮັກສາ 50
4.3.6. ການປ່ອຍມົນລະພິດ CO2 50
4.3.7. ການດຸ່ນດ່ຽງພະລັງງານ 51
4.3.8. ສະຫຼຸບລວມ 58
4.3.9. ສະເໜີທິດທາງແກ້ໄຂ 59
4.4. ການພັດທະນາແຫຼ່ງຜະລິດໄຟຟ້າເພື່ອການສົ່ງອອກ 62
ພາກທີ V ການພັດທະນາລະບົບສາຍສົ່ງໄຟຟ້າ 67
5.1. ຫຼັກການພັດທະນາລະບົບສາຍສົ່ງໄຟຟ້າ 67
5.2. ການພັດທະນາລະບົບໄຟຟ້າ 67
5.3. ສະຖານະພາບລະບົບສາຍສົ່ງໄຟຟ້າພາຍໃນປະຈຸບັນ 2020 69

5.3.1. ລະບົບສາຍສົ່ງ ແລະ ສະຖານີໄຟຟ້າ ຂອງ ຟຟລ ພາຍໃນປະເທດ....69
5.3.2. ລະບົບສາຍສົ່ງໄຟຟ້າ ເຊື່ອມຕໍ່ກັບຕ່າງປະເທດ....70
5.4. ການພັດທະນາລະບົບສາຍສົ່ງໄຟຟ້າ ແຕ່ປີ 2021 ຫາ 2030 ກໍລະນີພື້ນຖານ (BAU)....70
5.4.1. ການພັດທະນາລະບົບສາຍສົ່ງໄຟຟ້າ ໃນປີ 2021-2025....70
5.4.2. ການພັດທະນາລະບົບສາຍສົ່ງໄຟຟ້າພາຍໃນປີ 2026 ຫາ 2030 ກໍລະນີພື້ນຖານ (BAU)....78
5.5. ການພັດທະນາລະບົບຕາຂ່າຍໄຟຟ້າ 22 ກວ, 0.4 ກວ ແລະ ໝໍ້ແປງໄຟຟ້າ 2021-2025.....88
5.5.1. ແຂວງຜົ້ງສາລີ....88
5.5.2. ແຂວງຫົວພັນ....90
5.5.3. ແຂວງອຸດົມໄຊ.....92
5.5.4. ແຂວງຫຼວງນ້ຳທາ....93
5.5.5. ແຂວງບໍ່ແກ້ວ....94
5.5.6. ແຂວງຫຼວງພະບາງ....95
5.5.7. ແຂວງຊຽງຂວາງ....96
5.5.8. ແຂວງວຽງຈັນ....97
5.5.9. ແຂວງໄຊສົມບູນ....98
5.5.10. ແຂວງໄຊຍະບູລີ....99
5.5.11. ແຂວງບໍລິຄຳໄຊ....100
5.5.12. ແຂວງຄຳມ່ວນ....100
5.5.13. ແຂວງສະຫວັນນະເຂດ....101
5.5.14. ແຂວງຈຳປາສັກ....102
5.5.15. ແຂວງສາລະວັນ....103
5.5.16. ແຂວງເຊກອງ....104
5.5.17. ແຂວງອັດຕະປື....105

5.5.18. ແຂວງນະຄອນຫຼວງວຽງຈັນ 105

ພາກທີ VI ການຄາດຄະເນມູນຄ່າການລົງທຶນ 107

6.1. ພາກແຫຼ່ງຜະລິດພະລັງງານໄຟຟ້າ 107

ກໍລະນີທີ 1:ກໍລະນີພື້ນຖານ (BAU) 107

ກໍລະນີທີ 2: ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ (BAU) 110

ກໍລະນີທີ 3: ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN) 111

ກໍລະນີທີ 4: ກໍລະນີມີສົ່ງເສີມການນຳໃຊ້ລົດໄຟຟ້າ ແລະ ອຸດສາຫະກຳເພີ່ມຂຶ້ນ (EV+IN) 113

6.1.1. ສະຫຼຸບ: 115

6.2. ພາກສາຍສົ່ງໄຟຟ້າ 117

.6.2.1 ສະຫຼຸບໂຄງການສາຍສົ່ງເຂົ້າແຜນການ 5 ປີ ເທື່ອທີ IX (2021-2025). 117

.6.2.2 ສະຫຼຸບໂຄງການສາຍສົ່ງປີ 2026-2030. 119

.6.2.3 ສະຫຼຸບການພັດທະນາສາຍສົ່ງໄຟຟ້າໃນໄລຍະ 2021-2030. 121

6.3. ພາກສະຖານີໄຟຟ້າ 123

6.3.1. ສະຫຼຸບການພັດທະນາສະຖານີໄຟຟ້າ ປີ 2021-2025. 123

6.3.2. ສະຫຼຸບການພັດທະນາສະຖານີໄຟຟ້າ ປີ 2026-2030 124

6.3.3. ສະຫຼຸບລວມການພັດທະນາສະຖານີໄຟຟ້າ ປີ 2021-2030 125

6.4. ສະຫຼຸບຜົນການວິເຄາະລະບົບໄຟຟ້າ ແລະ ການສາຍສົ່ງອອກຕ່າງປະເທດປີ 2021-2030. 126

6.4.1. ຜົນການວິເຄາະລະບົບຮັບໃຊ້ພາຍທີ່ສາມາດສົ່ງອອກຕ່າງປະເທດໃນປີ 2021-2025 126

6.4.2. ຜົນການວິເຄາະລະບົບຮັບໃຊ້ພາຍໃນທີ່ສາມາດສົ່ງອອກຕ່າງປະເທດໃນປີ 2026-2030 128

6.4.3. ສະຫຼຸບສາຍສົ່ງລະຫວ່າງລາວ ກັບ ຕ່າງປະເທດ ລະຫວ່າງປີ 2021-2030 130

ພາກທີ VII ສະຫຼຸບ 135

ພາກທີ VIII ມາດຕະການຈັດຕັ້ງປະຕິບັດ 137

8.1. ກົນໄກປະສານງານ: 137

8.2. ມາດຕະການໃນການຈັດຕັ້ງປະຕິບັດ: 137
8.3. ເຜີຍແຜ່ຂໍ້ມູນ-ຂ່າວສານ 137
8.4. ແຫຼ່ງທຶນສຳລັບການຈັດຕັ້ງປະຕິບັດ 138
ເອກະສານອ້າງອີງ
ເອກະສານຊ້ອນທ້າຍ (Appendixes) A
ເອກະສານຊ້ອນທ້າຍ (Appendixes) B
ເອກະສານຊ້ອນທ້າຍ (Appendixes) C

ຄຳຫຍໍ້

AAGR	Average Annual Growth Rate
ASEAN	Association of Southeast Asia Nation
B/C	Benefit and Cost
BAU	Business as Usual
BOT	Build- Operate -Transfer
CA	Concession Agreement
cct-km	Three Phase Circuit Kilometer Length
COD	Commercial Operation Date
DSM	Demand Side Management
EDL	Electricite Du Laos
EDL-GEN	Electricite Du Laos-Generation
EDLT	Electricite Du Laos-Transmission
EE&C	Energy Efficiency and Conservation
EGAT	Electricity Generating Authority of Thailand
EPC	Engineering Procurement Construction
EV	Electric Vehicle
FS	Feasibility Study
GDP	Gross Domestic Product
GMS	Greater Mekong subregion
GWh	Gigawatt hours

IAEA	International Atomic Energy Agency
IN	Industry
IPP	Independent Power Producer
IPP(d)	Independent Power Producer for Domestic
IPP(e)	Independent Power Producer for Export
IRR	Internal Rate of Return
JICA	Japan International Cooperation Agency
JV	Joint Venture
kV	kilovolt
LCOE	Levelized Cost of Energy
LEAP	Long-Range Energy Alternative Planning System
MEM	Ministry of Energy and Mines
DEPP	Department of Energy Policy and Planning
MOU	Memorandum of Understanding
MVA	Mega Volt Amp
MW	Megawatt
NB	Net Benefit
NCC	National Control Center
NPDS	National Power Development Strategy
PDP	Power Development Plan
PPA	Power Purchase Agreement

PPP	Public-Private Partnership
PwC	PricewaterhouseCoopers
RCC	Regional Control Center
RCF	Regulating Capacity Factor
SPP	Small Power Producer
USAID	United States Agency for International Development
A/F	Actural/Forecast
F	Forecast

ອະທິບາຍສັບ

Actual	ຄ່າປະຈຸບັນ
Balance	ການດຸ່ນດ່ຽງໄຟຟ້າ
Base Load	ຄວາມຕ້ອງການໄຟຟ້າຂັ້ນພື້ນຖານ
Bio gas	ການຜະລິດອາຍແກັດຈາກມູນສັດ
Demand	ຄວາມຕ້ອງການໄຟຟ້າ
Energy Share	ສ່ວນແບ່ງພະລັງງານ
Forecasting	ການຄາດຄະເນຄວາມຕ້ອງການໄຟຟ້າໃນອະນາຄົດ
Peak Load	ຄວາມຕ້ອງການໄຟຟ້າສູງສຸດ
Plant Factor	ຄວາມອາດສາມາດໃນການຜະລິດ
Reservoir type	ເຂື່ອນໄຟຟ້າທີ່ມີອ່າງເກັບນ້ຳ
Run-off the river	ເຂື່ອນໄຟຟ້າເປັນແບບຝາຍນ້ຳລົ້ນ
Single buyer	ຜູ້ຮັບຊື້ໄຟຟ້າແຕ່ພຽງຜູ້ດຽວ
Solar Power	ພະລັງງານແສງຕາເວັນ
Power Supply	ການສະໜອງໄຟຟ້າ

ຕາຕະລາງ

ຕາຕະລາງ 3- 1: ຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມແຂວງກໍລະນີ(BAU)..... 21
ຕາຕະລາງ 3- 2: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າແບ່ງຕາມແຂວງ (BAU).....22
ຕາຕະລາງ 3- 3: ຄວາມຕ້ອງການພະລັງງານໄຟຟ້າກໍລະນີ (EV).....22
ຕາຕະລາງ 3- 4: ຄວາມຕ້ອງການກຳລັງໄຟຟ້າສູງສຸດກໍລະນີ (EV).....23
ຕາຕະລາງ 3- 5: ຄວາມຕ້ອງການພະລັງງານໄຟຟ້າກໍລະນີ (IN) 23
ຕາຕະລາງ 3- 6: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າກໍລະນີ (IN).....24
ຕາຕະລາງ 3- 7: ຄວາມຕ້ອງການພະລັງງານໄຟຟ້າກໍລະນີ (EV+IN).....24
ຕາຕະລາງ 3- 8: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າກໍລະນີ (EV+IN).....24
ຕາຕະລາງ 3- 9: ການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າກໍລະນີ(COVID-19).....25
ຕາຕະລາງ 3- 10: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າກໍລະນີ(COVID-19).....25
ຕາຕະລາງ 3- 11: ຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມຂະແໜງການກໍລະນີ (BAU).....26
ຕາຕະລາງ 3- 12: ຄວາມຕ້ອງການພະລັງງານໄຟຟ້າກໍລະນີ (EV).....26
ຕາຕະລາງ 3- 13: ຄວາມຕ້ອງການພະລັງງານໄຟຟ້າກໍລະນີ (IN).....27
ຕາຕະລາງ 3- 14: ສົມທຽບການຄາດຄະເນຄວາມຕ້ອງການພະລັງງານແຕ່ກໍລະນີສຶກສາ.....27
ຕາຕະລາງ 3- 15: ສົມທຽບການຄາດຄະເນຄວາມຕ້ອງການກຳລັງໄຟຟ້າແຕ່ກໍລະນີສຶກສາ.....28
ຕາຕະລາງ 3- 16: ສົມທຽບການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າກັບພາກສ່ວນຕ່າງໆ.....29
ຕາຕະລາງ 4- 1: ສັດສ່ວນພະລັງງານໄຟຟ້າ ຮອດປີ 2020 (BAU).....34
ຕາຕະລາງ 4- 2: ສັດສ່ວນພະລັງງານໄຟຟ້າ ຮອດປີ 2025 (BAU).....35
ຕາຕະລາງ 4- 3: ສັດສ່ວນພະລັງງານໄຟຟ້າ ຮອດປີ 2030 (BAU).....35
ຕາຕະລາງ 4- 4: ກຳລັງຕິດຕັ້ງລາຍເດືອນ (MW) “BAU”.....36
ຕາຕະລາງ 4- 5: ກຳລັງຕິດຕັ້ງລາຍເດືອນ (GWh) “BAU”.....36
ຕາຕະລາງ 4- 6: ສັດສ່ວນພະລັງງານໄຟຟ້າ ຮອດປີ 2025(EV).....39
ຕາຕະລາງ 4- 7: ສັດສ່ວນພະລັງງານໄຟຟ້າ ຮອດປີ 2030 (EV).....40
ຕາຕະລາງ 4- 8: ກຳລັງຕິດຕັ້ງລາຍເດືອນ (MW) “EV”.....40
ຕາຕະລາງ 4- 9: ກຳລັງການຜະລິດລາຍເດືອນ (GWh) “EV”.....41
ຕາຕະລາງ 4- 10: ສັດສ່ວນພະລັງງານໄຟຟ້າ ຮອດປີ 2025 (IN).....42
ຕາຕະລາງ 4- 11: ສັດສ່ວນພະລັງງານໄຟຟ້າ ຮອດປີ 2030 (IN).....42
ຕາຕະລາງ 4- 12: ກຳລັງຕິດຕັ້ງລາຍເດືອນ (MW) “IN”.....43

ຕາຕະລາງ 4- 13: ກຳລັງຕິດຕັ້ງລາຍເດືອນ (GWh) “IN”.....43
ຕາຕະລາງ 4- 14: ສັດສ່ວນພະລັງງານໄຟຟ້າ ຮອດປີ 2025 (EV+IN).....45
ຕາຕະລາງ 4- 15: ສັດສ່ວນພະລັງງານໄຟຟ້າ ຮອດປີ 2030 (EV+IN).....45
ຕາຕະລາງ 4- 16: ກຳລັງຕິດຕັ້ງລາຍເດືອນ (MW) “EV+IN”.....46
ຕາຕະລາງ 4- 17: ກຳລັງການຜະລິດລາຍເດືອນ (GWh) “EV+IN”.....46
ຕາຕະລາງ 4- 18: ພະລັງງານສຳຮອງລາຍເດືອນ (GWh) “ BAU”.....48
ຕາຕະລາງ 4- 19: ພະລັງງານສຳຮອງລາຍເດືອນ (GWh) “ EV ”.....49
ຕາຕະລາງ 4- 20: ພະລັງງານສຳຮອງລາຍເດືອນ (GWh) “ IN ”.....49
ຕາຕະລາງ 4- 21: ພະລັງງານສຳຮອງລາຍເດືອນ (GWh) “EV+IN”.....50
ຕາຕະລາງ 4- 22: ພະລັງງານຕົກເຮ່ຍໃນລະບົບ.....50
ຕາຕະລາງ 4- 23: ການດຸ່ນດ່ຽງພະລັງງານ.....52
ຕາຕະລາງ 4- 24: ການດຸ່ນດ່ຽງພະລັງງານ (GWh).....53
ຕາຕະລາງ 4- 25: ການດຸ່ນດ່ຽງພະລັງງານ (GWh) “ EV ”.....53
ຕາຕະລາງ 4- 26: ການດຸ່ນດ່ຽງພະລັງງານ “ EV ”.....54
ຕາຕະລາງ 4- 27: ການດຸ່ນດ່ຽງພະລັງງານ “ IN ”.....54
ຕາຕະລາງ 4- 28: ການດຸ່ນດ່ຽງພະລັງງານ “ IN ”.....54
ຕາຕະລາງ 4- 29: ການດຸ່ນດ່ຽງພະລັງງານ “ EV+IN”.....55
ຕາຕະລາງ 4- 30: ການດຸ່ນດ່ຽງພະລັງງານ “ EV+IN ”.....55
ຕາຕະລາງ 4- 31: ຄາດຄະເນການສົ່ງອອກ ແລະ ນຳເຂົ້າ ພະລັງງານໄຟຟ້າ (GWh).....56
ຕາຕະລາງ 4- 32: ຄາດຄະເນພະລັງງານໄຟຟ້າເຫຼືອ (GWh).....57
ຕາຕະລາງ 5- 1: ສະພາບຂອງສາຍສົ່ງໃນປະຈຸບັນ.....69
ຕາຕະລາງ 5- 2: ສະພາບຂອງສະຖານີໄຟຟ້າໃນປະຈຸບັນ.....69
ຕາຕະລາງ 5- 3: ສະພາບການເຊື່ອຕໍ່ກັບຕ່າງປະເທດໃນປະຈຸບັນ.....70
ຕາຕະລາງ 5- 4: ຕາຕະລາງສະຫຼຸບຜົນການວິເຄາະການໄຫຼກຳລັງໄຟຟ້າໃນພາກເໜືອ ຮອດປີ 2025.....70
ຕາຕະລາງ 5- 5: ຕາຕະລາງສະຫຼຸບຜົນການວິເຄາະການໄຫຼກຳລັງໄຟຟ້າຫາເຂດນະຄອນຫຼວງ ປີ 2025.....71
ຕາຕະລາງ 5- 6: ສະຫຼຸບການດຸ່ນດ່ຽງກຳລັງໄຟຟ້າເຂດພາກກາງ ປີ 2025.....72
ຕາຕະລາງ 5- 7: ສະຫຼຸບການດຸ່ນດ່ຽງກຳລັງໄຟຟ້າເຂດພາກໃຕ້ປີ 2025.....73
ຕາຕະລາງ 5- 8: ສະຫຼຸບຄວາມຍາວສາຍສົ່ງໄຟຟ້າໃນປີ 2021ຫາ2025.....74
ຕາຕະລາງ 5- 9: ໂຄງການສາຍສົ່ງຂອງ ຟຟລ ໃນປີ 2021 ຫາ 2025.....75
ຕາຕະລາງ 5- 10: ໂຄງການສາຍສົ່ງທີ່ຕິດພັນກັບແຫຼ່ງຜະລິດໄຟຟ້າໃນປີ 2021 ຫາ 2025.....76

ຕາຕະລາງ 5- 11 ສະຫຼຸບການພັດທະນາກໍ່ສ້າງສະຖານີໄຟຟ້າໃນປີ 2021-2025.....78
ຕາຕະລາງ 5- 12: ການດຸ່ນດ່ຽງກຳລັງໄຟຟ້າເຂດພາກເໜືອ ຂອງປີ 2030.....79
ຕາຕະລາງ 5- 13: ສະຫຼຸບຄວາມຍາວສາຍສົ່ງໄຟຟ້າໃນປີ 2026 ຫາ 2030.....84
ຕາຕະລາງ 5- 14: ສະຫຼຸບການພັດທະນາກໍ່ສ້າງສາຍສົ່ງໄຟຟ້າຂອງ ຟຟລ ໃນປີ 2026 ຫາ 2030.....85
ຕາຕະລາງ 5- 15 :ສະຫຼຸບການພັດທະນາກໍ່ສ້າງສາຍສົ່ງຕິດພັນກັບແຫຼ່ງຜະລິດໄຟຟ້າ ໃນປີ 2026 ຫາ 2030.....86
ຕາຕະລາງ 5- 16:ສະຫຼຸບການພັດທະນາການກໍ່ສ້າງສະຖານີໄຟຟ້າ ໃນປີ 2026 ຫາ 2030.....87
ຕາຕະລາງ 5- 17 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຜົ້ງສາລີ 2021-2025.....88
ຕາຕະລາງ 5- 18 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຫົວພັນ 2021-2025.....90
ຕາຕະລາງ 5- 19 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງອຸດົມໄຊ 2021-2025.....92
ຕາຕະລາງ 5- 20 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຫຼວງນ້ຳທາ 2021-2025.....93
ຕາຕະລາງ 5- 21 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງບໍ່ແກ້ວ 2021-2025.....94
ຕາຕະລາງ 5- 22 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຫຼວງພະບາງ 2021-2025.....95
ຕາຕະລາງ 5- 23 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຊຽງຂວາງ 2021-2025.....96
ຕາຕະລາງ 5- 24 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງວຽງຈັນ 2021-2025.....97
ຕາຕະລາງ 5- 25 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງໄຊສົມບູນ 2021-2025.....98
ຕາຕະລາງ 5- 26 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງໄຊຍະບູລີ 2021-2025.....99
ຕາຕະລາງ 5- 27 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງບໍລິຄຳໄຊ 2021-2025.....100
ຕາຕະລາງ 5- 28 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຄຳມ່ວນ 2021-2025.....100
ຕາຕະລາງ 5- 29 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງສະຫວັນນະເຂດ 2021-2025.....101
ຕາຕະລາງ 5- 30 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງຈຳປາສັກ 2021-2025.....102
ຕາຕະລາງ 5- 31 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງສາລະວັນ 2021-2025.....103
ຕາຕະລາງ 5- 32 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງເຊກອງ 2021-2025.....104
ຕາຕະລາງ 5- 33 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງອັດຕະປື 2021-2025.....105
ຕາຕະລາງ 5- 34 :ການພັດທະນາລະບົບຕາຂ່າຍໄຟຟ້າແຂວງນະຄອນຫຼວງວຽງຈັນ 2021-2025.....105
ຕາຕະລາງ 5- 35 :ຕາງຕະລາງສະຫຼຸບການພັດທະນາກໍ່ສ້າງລະບົບຕາຂ່າຍ 2021-2025.....106
ຕາຕະລາງ 6- 1 :ມູນຄ່າການລົງທຶນບັນດາໂຄງການແຫຼ່ງຜະລິດໄຟຟ້າ ກໍລະນີພື້ນຖານ (BAU).....108
ຕາຕະລາງ 6- 2 :ມູນຄ່າການລົງທຶນບັນດາໂຄງການແຫຼ່ງຜະລິດໄຟຟ້າ ກໍລະນີ (EV).....110
ຕາຕະລາງ 6- 3 :ມູນຄ່າການລົງທຶນບັນດາໂຄງການແຫຼ່ງຜະລິດໄຟຟ້າ ກໍລະນີ (IN).....112
ຕາຕະລາງ 6- 4 :ມູນຄ່າການລົງທຶນບັນດາໂຄງການແຫຼ່ງຜະລິດໄຟຟ້າ ກໍລະນີ (EV+IN).....113
ຕາຕະລາງ 6- 5 :ລວມມູນຄ່າການລົງທຶນສາຍສົ່ງທີ່ຕິດພັນກັບການປັບປຸງລະບົບຮັບໃຊ້ພາຍໃນຂອງ ຟຟລ 2021-2025.....118

ຕາຕະລາງ 6- 6: ລວມມູນຄ່າການລົງທຶນສາຍສົ່ງທີ່ຕິດພັນກັບແຫຼ່ງຜະລິດ 2021-2025.....118
ຕາຕະລາງ 6- 7: ລວມມູນຄ່າການລົງທຶນສາຍສົ່ງທັງໝົດພາຍໃນໄລຍະ 2021-2025.....119
ຕາຕະລາງ 6- 8: ສະຫຼຸບຄວາມຍາວສາຍສົ່ງທີ່ຕິດພັນກັບລະບົບຂອງໄຟຟ້າລາວ ໃນໄລຍະປີ 2026 ຫາ 2030.....120
ຕາຕະລາງ 6- 9: ສະຫຼຸບຄວາມຍາວສາຍສົ່ງທີ່ຕິດພັນກັບແຫຼ່ງຜະລິດ ໃນໄລຍະປີ 2026 ຫາ 2030.....120
ຕາຕະລາງ 6- 10: ລວມມູນຄ່າການລົງທຶນສາຍສົ່ງທັງໝົດພາຍໃນໄລຍະ 2026 ຫາ 2030.....121
ຕາຕະລາງ 6- 11: ສະຫຼຸບແຜນການກໍ່ສ້າງສາຍສົ່ງໄຟຟ້າ ໃນປີ2021 ຫາ 2030 ຂອງ ຟຟລ.....122
ຕາຕະລາງ 6- 12:ສະຫຼຸບແຜນການກໍ່ສາຍສົ່ງທີ່ຕິດພັນກັບແຫຼ່ງຜະລິດ ໃນປີ2021 ຫາ 2030 ຂອງ ຟຟລ.....122
ຕາຕະລາງ 6- 13:ສະຫຼຸບແຜນການກໍ່ສາຍສົ່ງທັງໝົດໃນປີ 2021 ຫາ 2030.....123
ຕາຕະລາງ 6- 14 :ສະຫຼຸບການຜັດທະນາກໍ່ສ້າງສະຖານີໄຟຟ້າໄລຍະ 2025 ຫາ 2021.....124
ຕາຕະລາງ 6- 15 :ສະຫຼຸບການຜັດທະນາກໍ່ສ້າງສະຖານີໄຟຟ້າໄລຍະ 2025 ຫາ 2021.....125
ຕາຕະລາງ 6- 16 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ໄທ ໃນໄລຍະປີ 2021-2025.....126
ຕາຕະລາງ 6- 17 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ກຳປູເຈຍ ໃນໄລຍະປີ 2021-2025.....126
ຕາຕະລາງ 6- 18 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ສປ ຈີນ ໃນໄລຍະປີ 2021-2025.....127
ຕາຕະລາງ 6- 19 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ມຽນມາ ໃນໄລຍະປີ 2021-2025.....127
ຕາຕະລາງ 6- 20 :ການສົ່ງໄຟຟ້າຈາກລາວ-ໄທ-ມາເລເຊຍ-ສິງກະໂປ ໃນໄລຍະປີ2021-2025.....127
ຕາຕະລາງ 6- 21 :ສະຫຼຸບການດຸ່ນດ່ຽງທັງໝົດລະບົບຮັບໃຊ້ພາຍໃນປີ 2025.....128
ຕາຕະລາງ 6- 22 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ໄທ ໃນໄລຍະປີ 2026-2030.....128
ຕາຕະລາງ 6- 23 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ກຳປູເຈຍ ໃນໄລຍະປີ 2026-2030.....129
ຕາຕະລາງ 6- 24 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ສປ ຈີນ ໃນໄລຍະປີ 2026-2030.....129
ຕາຕະລາງ 6- 25 :ການວິເຄາະແຜນການສົ່ງໄຟຟ້າຈາກ ລາວ ຫາ ມຽນມາ ໃນໄລຍະປີ 2026-2030.....129
ຕາຕະລາງ 6- 26 :ການສົ່ງໄຟຟ້າຈາກລາວ-ໄທ-ມາເລເຊຍ-ສິງກະໂປ ໃນໄລຍະປີ2026-2030.....130
ຕາຕະລາງ 6- 27 :ຕາຕະລາງສະຫຼຸບການດຸ່ນດ່ຽງທັງໝົດລະບົບຮັບໃຊ້ພາຍໃນປີ 2030.....130
ຕາຕະລາງ 6- 28 :ແຜນສາຍສົ່ງໄຟຟ້າລະຫວ່າງລາວ ອອກ ຫວຽດນາມໂດຍກົງ ຂອງ IPP ໃນລະຫວ່າງປີ 2021-2030.....131
ຕາຕະລາງ 6- 29 :ແຜນສາຍສົ່ງໄຟຟ້າລະຫວ່າງລາວ ອອກ ຫວຽດນາມໂດຍກົງ ຂອງ IPP 2021-2030 (ຕໍ່).....132
ຕາຕະລາງ 6- 30 :ແຜນສາຍສົ່ງໄຟຟ້າລະຫວ່າງລາວ ອອກ ໄທ ໂດຍກົງ ຂອງ IPP ໃນລະຫວ່າງປີ 2021-2030.....133
ຕາຕະລາງ 6- 31 :ແຜນສາຍສົ່ງໄຟຟ້າລະຫວ່າງລາວອອກກຳປູເຈຍໂດຍກົງຂອງ IPP ໃນລະຫວ່າງປີ 2021-2030.....133
ຕາຕະລາງ 6- 32 :ແຜນສາຍສົ່ງໄຟຟ້າລະຫວ່າງລາວ ອອກ ຈີນ ຂອງ EDLT ໃນລະຫວ່າງປີ 2021-2030.....134
ຕາຕະລາງ 6- 33 :ແຜນສາຍສົ່ງໄຟຟ້າລະຫວ່າງລາວ ອອກ ມຽນມາ ຂອງ EDLT ໃນລະຫວ່າງປີ 2021-2030.....134
ຕາຕະລາງ 6- 34 :ແຜນສາຍສົ່ງໄຟຟ້າລະຫວ່າງລາວ ອອກ ຕ່າງປະເທດທັງໝົດ ຂອງ IPP ໃນລະຫວ່າງປີ 2021-2030.....134

ຮູບພາບ

ຮູບທີ 3- 1: ເສັ້ນສະແດງອັດຕາສ່ວນການເພີ່ມຂຶ້ນຂອງພາຫະນະນຳໃຊ້ໄຟຟ້າ.....21
ຮູບທີ 3- 2: ເສັ້ນສະແດງການເພີ່ມຂຶ້ນຂອງຄວາມຕ້ອງການໄຟຟ້າ.....30
ຮູບທີ 4- 1: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2021 (BAU).....38
ຮູບທີ 4- 2: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2025 (BAU).....39
ຮູບທີ 4- 3: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2030 (BAU).....39
ຮູບທີ 4- 4: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2020 40
ຮູບທີ 4- 5: ສະຖານະພາບແຫຼ່ງສະໜອງໄຟຟ້າ.....41
ຮູບທີ 4- 6: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2021 (EV) 43
ຮູບທີ 4- 7: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2025 (EV) 43
ຮູບທີ 4- 8: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2030 (EV) 43
ຮູບທີ 4- 9: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2021 (IN).....46
ຮູບທີ 4- 10: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2025 (IN)..... 46
ຮູບທີ 4- 11: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2030 (IN)..... 46
ຮູບທີ 4- 12: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2021 (EV+IN).....49
ຮູບທີ 4- 13: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2025 (EV+IN).....49
ຮູບທີ 4- 14: ດຸ່ນດ່ຽງກຳລັງຕິດຕັ້ງ ແລະ ກຳລັງການຜະລິດໄຟຟ້າ ປີ2030 (EV+IN).....49
ຮູບທີ 4- 15 :ດຸ່ນດຽງພາຍໃນ, ການສົ່ງອອກ ແລະ ພະລັງງານເຫຼືອ.....52
ຮູບທີ 4- 16 :ແຜນການສົ່ງອອກ, ນຳເຂົ້າ, ພະລັງງານໄຟຟ້າເຫຼືອ.....56
ຮູບທີ 4- 17: ການດຸ່ນດ່ຽງ ກຳລັງການສະໜອງ ແລະ ຄວາມຕ້ອງການໄຟຟ້າ ໃນປີ 2025 ກໍລະນີສົ່ງເສີມອຸດສາຫະກຳ ແລະ ສົ່ງອອກຕ່າງປະເທດໃນລະດູຝົນ.....60
ຮູບທີ 4- 18: ການດຸ່ນດ່ຽງ ກຳລັງການສະໜອງ ແລະ ຄວາມຕ້ອງການໄຟຟ້າ ໃນປີ 2030 ກໍລະນີສົ່ງເສີມອຸດສາຫະກຳ ແລະ ການສົ່ງອອກຕ່າງປະເທດໃນລະດູຝົນ.....61
ຮູບທີ 5- 1: ການແບ່ງເຂດຄຸ້ມຄອງລະບົບໄຟຟ້າຂອງລາວ 2021-2030.....68
ຮູບທີ 5- 2: ລະບົບສາຍສົ່ງພາກເໜືອ ພາຍໃນປີ2030.....80
ຮູບທີ 5- 3: ລະບົບສາຍສົ່ງໄຟຟ້າເຂດນະຄອນຫຼວງວຽງຈັນໃນປີ2030.....81
ຮູບທີ 5- 4: ລະບົບສາຍສົ່ງໄຟຟ້າຂອງເຂດພາກກາງ ຂອງປີ2030.....82
ຮູບທີ 5- 5: ລະບົບສາຍສົ່ງໄຟຟ້າຂອງເຂດພາກໃຕ້ຂອງປີ2030.....83
ຮູບທີ 5- 6 : ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຜົ້ງສາລີ.....89

ຮູບທີ 5- 7 : ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຫົວພັນ.....91
ຮູບທີ 5- 8 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງອຸດົມໄຊ.....92
ຮູບທີ 5- 9 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຫຼວງນ້ຳທາ.....93
ຮູບທີ 5- 10 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງບໍ່ແກ້ວ.....94
ຮູບທີ 5- 11 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຫຼວງພະບາງ.....95
ຮູບທີ 5- 12 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຊຽງຂວາງ.....96
ຮູບທີ 5- 13 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງວຽງຈັນ.....97
ຮູບທີ 5- 14 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງໄຊສົມບູນ.....98
ຮູບທີ 5- 15 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງໄຊຍະບູລີ 99
ຮູບທີ 5- 16 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຄຳມ່ວນ.....100
ຮູບທີ 5- 17 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຄຳມ່ວນ.....101
ຮູບທີ 5- 18 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງຈຳປາສັກ.....102
ຮູບທີ 5- 19 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງສາລະວັນ.....103
ຮູບທີ 5- 20 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງເຊກອງ.....104
ຮູບທີ 5- 21 :ແຜນທີ່ຂະຫຍາຍຕາຂ່າຍໄຟຟ້າ ແຂວງເຊກອງ.....105

ບົດນຳ

ການພັດທະນາພະລັງງານໄຟຟ້າ ໃນໄລຍະຜ່ານມາ ພາຍໃຕ້ການຊີ້ນຳຂອງ ກົມການເມືອງສູນກາງພັກ, ຄະນະ ເລຂາທິການສູນກາງພັກ ແລະ ການຄຸ້ມຄອງຂອງລັດຖະບານ ເຫັນວ່າການພັດທະນາ ຂອງຂະແໜງການພະລັງງານໄຟຟ້າ ຂອງ ສປປ ລາວ ມີບາດກ້າວຂະຫຍາຍຕົວຢ່າງກ້າວກະໂດດ ເຊິ່ງໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາ ພື້ນຖານໂຄງລ່າງ ແລະ ເສດຖະກິດ-ສັງຄົມຂອງປະເທດ ໂດຍສະເພາະແມ່ນການພັດທະນາແຫຼ່ງພະລັງງານໄຟຟ້າ ແລະ ການ ພັດທະນາລະບົບສາຍສົ່ງ ເພື່ອຮັບໃຊ້ພາຍໃນ ແລະ ການສົ່ງອອກຕ່າງປະເທດ. ຄຽງຄູ່ກັນນັ້ນ, ຄວາມຮຽກຮ້ອງຕ້ອງການໃນ ການພັດທະນາ ພາຍໃຕ້ເງື່ອນໄຂການຫັນປ່ຽນໃໝ່ ແມ່ນມີຄວາມຈຳເປັນໃນການສ້າງຍຸດທະສາດການພັດທະນາໄຟຟ້າ ຂອງ ສປປ ລາວ ປີ 2021-2030 ເພື່ອເຮັດໃຫ້ການພັດທະນາໄຟຟ້າ ບັນລຸຜົນສຳເລັດຕາມລະດັບຄາດໝາຍ.

ສະນັ້ນ, ເພື່ອເປັນການຈັດຕັ້ງຜັນຂະຫຍາຍ ກົດໝາຍວ່າດ້ວຍໄຟຟ້າສະບັບປັບປຸງ ປີ 2017 ກະຊວງພະລັງງານ ແລະ ບໍ່ແຮ່ ຈຶ່ງໄດ້ສ້າງຍຸດທະສາດການພັດທະນາພະລັງງານໄຟຟ້າ ຂອງ ສປປ ລາວ, 2021-2030 ໂດຍໄດ້ປະສານສົມທົບກັບ ຝຝລ, ກົມກອງອ້ອມຂ້າງກະຊວງ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ, ທົບທວນ ແລະ ປຶກສາຫາລື ແນໃສ່ການສ້າງແຜນຮັບປະກັນ ໃຫ້ມີຄວາມສອດຄ່ອງກັບ ວິໄສທັດ, ນະໂຍບາຍ ພະລັງງານ ຂອງ ສປປ ລາວ ດ້ານຕ່າງໆ, ແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ IX (2021-2025) ແລະ ແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ.

ຍຸດທະສາດການພັດທະນາພະລັງງານໄຟຟ້າຂອງ ສປປ ລາວ ປະກອບດ້ວຍ 8 ພາກໃຫຍ່ຄື: ພາກທີ I ພາກສະຫຼຸບຕີ ລາຄາການພັດທະນາພະລັງງານໄຟຟ້າໄລຍະຜ່ານມາ, ພາກທີ II ນະໂຍບາຍພະລັງງານ ຂອງ ສປປລາວ, ພາກທີ III ການຄາດ ຄະເນຄວາມຕ້ອງການໄຟຟ້າ, ພາກທີ IV ແຜນພັດທະນາແຫຼ່ງຜະລິດໄຟຟ້າ, ພາກທີ V ແຜນພັດທະນາລະບົບສາຍສົ່ງ, ພາກ ທີ VI ຄາດຄະເນມູນຄ່າການລົງທຶນ, ພາກທີ VII ສະຫຼຸບ ແລະ ພາກທີ VIII ມາດຕະການຈັດຕັ້ງປະຕິບັດ.

ຈຸດປະສົງຫຼັກຂອງການວາງຍຸດທະສາດການພັດທະນາພະລັງງານໄຟຟ້າຂອງ ສປປ ລາວ ປີ 2021-2030 ແມ່ນ ເພື່ອ **ປັບປຸງລະບົບພະລັງງານໃຫ້ມີຄວາມໝັ້ນຄົງ ມີຄວາມພ້ອມໃນການສະໜອງໄຟຟ້າ ໃຫ້ພຽງພໍຕໍ່ຄວາມຕ້ອງການພາຍໃນ ແລະ ສົ່ງອອກຕ່າງປະເທດ"** ສ້າງລາຍຮັບ ແລະ ຂັບເຄື່ອນເສດຖະກິດໃຫ້ຂະຫຍາຍຕົວ ໂດຍຕ້ອງຮັບປະກັນ ການພັດທະນາ ລະບົບພະລັງງານໄຟຟ້າ ໃຫ້ມີສະຖຽນລະພາບ, ມີຄວາມໜ້າເຊື່ອຖື, ໝັ້ນຄົງ ແລະ ຜູ້ຊົມໃຊ້ສາມາດເຂົ້າເຖິງດ້ວຍລາຄາທີ່ ເ ໝາະສົມ ແລະ ເປັນທຳ. ສະນັ້ນ, ເພື່ອດັດສົມບັນຫາໄລຍະຜ່ານມາ, ທິດທາງການວາງແຜນພັດທະນາໄຟຟ້າຕໍ່ໜ້າ ຈຳເປັນ ຕ້ອງໄດ້ ❶ ຄັດເລືອກການພັດທະນາແຫຼ່ງຜະລິດທີ່ມີຄຸນນະພາບ, ຕົ້ນທຶນຕ່ຳ, ຜົນຜະລິດສູງ ແລະ ການຜະລິດມີຄວາມ ສອດຄ່ອງກັບຕະຫຼາດຄວາມຕ້ອງການໄຟ ທັງພາຍໃນ ແລະ ການສົ່ງອອກຕ່າງປະເທດ, ❷ ຄັດເລືອກການວາງແຜນ ຂະຫຍາຍລະບົບສາຍສົ່ງໄຟຟ້າໃຫ້ສອດຄ່ອງກັບ ແຜນການຂະຫຍາຍແຫຼ່ງຜະລິດ ແລະ ແຜນຄວາມຕ້ອງການໄຟຟ້າພາຍໃນ

ແລະ ຕ່າງປະເທດ ຮັບປະກັນ ລະບົບມີຄວາມສະຖຽລະພາບ, ລຸດຜ່ອນການສູນເສຍພະລັງງານ, ຕົ້ນທຶນຕ່ຳ, ລະບົບມີຄວາມໝັ້ນຄົງ, ໜ້າເຊື່ອຖື ແລະ ມີຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

ລັດຖະມົນຕີ

ທ່ານ ປອ. ດາວວົງ ພອນແກ້ວ

ພາກທີ I ສະຫຼຸບຕີລາຄາການພັດທະນາພະລັງງານໄຟຟ້າໄລຍະຜ່ານມາ

ການພັດທະນາແຫຼ່ງຜະລິດພະລັງງານໄຟຟ້ານັບແຕ່ປີ 1970 ຮອດປະຈຸບັນ ເຫັນໄດ້ວ່າມີຈັງຫວະການຂະຫຍາຍຕົວສູງຫຼາຍ ໂດຍມີອັດຕາການຂະຫຍາຍຕົວສະເລ່ຍ ປະມານ 17%/ປີ ເຫດຜົນຂອງການຂະຫຍາຍຕົວສູງແມ່ນ ເນື່ອງຈາກການເລັ່ງພັດທະນາແຫຼ່ງຜະລິດໄຟຟ້າ ເພື່ອການສົ່ງອອກ ສ້າງລາຍຮັບນຳມາພັດທະນາພື້ນຖານໂຄງລ່າງຂອງປະເທດ. ການພັດທະນາກ່ອນປີ 2012 ແຫຼ່ງຜະລິດໄຟຟ້າຕົ້ນຕໍແມ່ນມາຈາກເຂື່ອນໄຟຟ້າພະລັງງານນ້ຳ, ຮອດທ້າຍປີ 2015 ສປປ ລາວ ຈຶ່ງໄດ້ມີການພັດທະນາແຫຼ່ງຜະລິດພະລັງງານໄຟຟ້າຄວາມຮ້ອນຈາກຖ່ານຫີນ ແຫຼ່ງທຳອິດ ທີ່ແຂວງໄຊຍະບູລີ ມີກຳລັງຕິດຕັ້ງ 1.878 MW. ມາຮອດທ້າຍປີ 2020 ມີແຫຼ່ງຜະລິດທັງໝົດ 82 ໂຄງການ ລວມກຳລັງຕິດຕັ້ງ 10.091 MW, ສາມາດຜະລິດພະລັງງານໄຟຟ້າໄດ້ປະມານ 53.196,94 ລ້ານກິໂລວັດໂມງ ໃນນັ້ນແຫຼ່ງຜະລິດໄຟຟ້າມາຈາກເຂື່ອນໄຟຟ້າພະລັງງານນ້ຳກວມເອົາ 80,41%, ມາຈາກພະລັງງານໄຟຟ້າຖ່ານຫີນ 18,61%, ມາຈາກພະລັງງານຊີວະມວນ ແລະ ມາຈາກພະລັງງານແສງຕາເວັນ 0,98%, ສາມາດສົ່ງອອກພະລັງງານກວມເອົາປະມານ 72%, ສຳລັບອັດຕາສ່ວນແຫຼ່ງຜະລິດທີ່ສາມາດສະໜອງພະລັງງານໄຟຟ້າພາຍໃນປະເທດ ແມ່ນມາຈາກເຂື່ອນໄຟຟ້າພະລັງງານນ້ຳ 91,49%, ມາຈາກພະລັງງານຄວາມຮ້ອນຖ່ານຫີນ 3,17% (ໂຮງໄຟຟ້າຄວາມຮ້ອນຖ່ານຫີນຫົງສາລິກໄນ ທີ່ໄດ້ສະໜອງໃຫ້ລະບົບຂອງລັດວິສາຫະກິດໄຟຟ້າລາວ 100 MW), ມາຈາກພະລັງງານຊີວະມວນ ແລະ ມາຈາກພະລັງງານແສງຕາເວັນ 5,34%.

ການພັດທະນາລະບົບສາຍສົ່ງຂອງ ສປປ ລາວ ຮອດປະຈຸບັນສາມາດຈຳແນກອອກເປັນ 2 ລະບົບສົ່ງ ຄື: ລະບົບສາຍສົ່ງພາຍໃນປະເທດ ແລະ ລະບົບສາຍສົ່ງເພື່ອສົ່ງພະລັງງານອອກຕ່າງປະເທດ, ສະເພາະລະບົບສົ່ງອອກຕ່າງປະເທດສາມາດແຍກອອກເປັນ 2 ລະບົບຄື: ລະບົບສາຍສົ່ງຜ່ານລະບົບຂອງ ຟຟລ ແລະ ລະບົບສາຍສົ່ງຈາກຜູ້ພັດທະນາ IPP ຫາ ປະເທດເພື່ອນບ້ານໂດຍກົງ. ຮອດປະຈຸບັນ ລະບົບສາຍສົ່ງພາຍໃນ ສາມາດເຊື່ອມຕໍ່ເຂົ້າກັນ ແຕ່ພາກ ເໜືອ ຫາ ນະຄອນຫຼວງ, ພາກເໜືອ ຫາ ພາກກາງ, ນະຄອນຫຼວງ ຫາ ພາກກາງ ແລະ ພາກກາງ ຫາ ພາກໃຕ້ ໃນລະດັບແຮງດັນ 115 kV ແລະ 230 kV, ລະບົບສາຍສົ່ງອອກຕ່າງປະເທດ ສາມາດເຊື່ອມຕໍ່ກັບ ປະເທດໄທ, ຫວຽດນາມ, ກຳປູເຈຍ, ມຽນມາ, ຈີນ ແລະ ເຊື່ອມຕໍ່ກັບປະເທດມາເລເຊຍ ໂດຍຜ່ານໄທ ໃນລະດັບແຮງດັນ ແຕ່ 22 kV ຫາ 500 kV. ການເຊື່ອມຕໍ່ລະບົບສາຍສົ່ງພາຍໃນ ແລະ ຕ່າງປະເທດ ເຮັດໃຫ້ ສປປ ລາວ ສາມາດຊື້-ຂາຍແລກປ່ຽນພະລັງງານກັບຕ່າງປະເທດ , ມີທັງການສົ່ງອອກ ແລະ ຂະນະດຽວກັນ ກໍ່ມີການນຳເຂົ້າໄຟຟ້າຈາກຕ່າງປະເທດຈຳນວນໜຶ່ງ ໃນຊ່ວງລະດູແລ້ງ ສາເຫດຂອງການນຳເຂົ້າ ແມ່ນເນື່ອງມາຈາກ ແຫຼ່ງຜະລິດໄຟຟ້າທີ່ສະໜອງພາຍໃນປະເທດ ສ່ວນໃຫ່ຍແມ່ນເປັນເຂື່ອນໄຟຟ້າຂະໜາດນ້ອຍ ບໍ່ສາມາດກັກເກັບນ້ຳເພື່ອຜະລິດໄຟຟ້າໃນລະດູແລ້ງໄດ້ຢ່າງພຽງພໍ.

ຈາກການຕີລາຄາເຫັນໄດ້ວ່າ ການພັດທະນາ ແຫຼ່ງຜະລິດໄຟຟ້າ ແລະ ພື້ນຖານໂຄງລ່າງທີ່ກ່ຽວຂ້ອງ ເຮັດໃຫ້ ມີການລົງທຶນ ຢ່າງມະຫາສານ ເຊິ່ງເປັນຜົນດີຕໍ່ຜູ້ປະກອບການທຸກໆຂະແໜງການພາຍໃນປະເທດ ມີການຂະຫຍາຍຕົວ ສົ່ງຜົນ ໃຫ້ເສດຖະກິດໂດຍລວມຂອງປະເທດ ມີລັກສະນະຂະຫຍາຍຕົວສູງພໍສົມຄວນ. ແຕ່ ໃນຂະນະດຽວກັນ ກໍ່ມີຫຼາຍບັນຫາທີ່ເປັນສິ່ງທ້າທາຍ ທີ່ຕ້ອງໄດ້ມີມາດຕະການປັບປຸງແກ້ໄຂຢ່າງຮັດກຸມ ແລະ ເລັ່ງດ່ວນ ໃນໄລຍະຕໍ່ໜ້າ ໂດຍ ສາມາດສັງລວມໄດ້ 2 ບັນຫາຄົງຄ້າງຄື: **i) ບັນຫາລະບົບໄຟຟ້າພາຍໃນ:** ມາຮອດປະຈຸບັນ ຟຟລ ຂາດສະພາບຄ່ອງດ້ານການເງິນ ເນື່ອງຈາກມີໜີ້ສິນເກີນລາຍຮັບ, ສາເຫດທີ່ເຮັດໃຫ້ ຟຟລ ມີໜີ້ສິນ ແມ່ນເນື່ອງຈາກ ❶ ຟຟລ ມີສັນຍາຊື້-ຂາຍໄຟຟ້າແບບ

ຜູກມັດ (Take or Pay) ກັບຜູ້ພັດທະນາເຂື່ອນໄຟຟ້າຫຼາຍໂຄງການ ຕ້ອງຮັບພາລະຄ່າໃຊ້ຈ່າຍໃນກໍລະນີມີພະລັງງານເຫຼືອໂດຍບໍ່ຈຳເປັນ, ❷ ລາຄາສົ່ງອອກພະລັງງານຂອງ ຟຟລ ສ່ວນຫຼາຍແມ່ນຕ່ຳກວ່າລາຄາຮັບຊື້ຈາກແຫຼ່ງຜະລິດ, ❸ ການລົງທຶນ ໃນພາກແຫຼ່ງຜະລິດ ແລະ ພາກສາຍສົ່ງ ຈຳນວນໜຶ່ງ ບໍ່ເສດຖະກິດ, ❹ ການຮັບຊື້ໄຟຈາກແຫຼ່ງຜະລິດ ບໍ່ສອດຄ່ອງກັບຄວາມຕ້ອງການ ຍ້ອນແຫຼ່ງຜະລິດສ່ວນໃຫ່ຍເປັນເຂື່ອນໄຟຟ້າ ທີ່ບໍ່ມີອ່າງເກັບນ້ຳ ເຮັດໃຫ້ ລະດູຝົນມີພະລັງງານເຫຼືອ ແຕ່ໃນຊ່ວງລະດູແລ້ງຜະລິດໄຟຟ້າບໍ່ພຽງພໍຕໍ່ຄວາມຕ້ອງການ ຕ້ອງໄດ້ນຳເຂົ້າຈາກຕ່າງປະເທດ, ໃນກໍລະນີນຳເຂົ້າຫຼາຍກວ່າການສົ່ງອອກ ຟຟລ ແມ່ນຈະໄດ້ຈ່າຍຄ່າກະແສໄຟໃນລາຄາລູກຄ້າລາຍໃຫ່ຍ; **ii) ບັນຫາລະບົບໄຟຟ້າສົ່ງອອກໂດຍກົງຂອງ IPP:** ❶ ການເຮັດສັນຍາສຳປະທານກັບໂຄງການ ສົ່ງອອກໂດຍກົງຍັງບໍ່ເປັນລະບົບຄົບຊຸດ ເຮັດໃຫ້ຍາກຕໍ່ການສ້າງລະບົບເຊື່ອມຕໍ່ລະບົບສົ່ງພາຍໃນຂອງ ຟຟລ ກັບລະບົບສົ່ງອອກໂດຍກົງຂອງ IPP ເຮັດໃຫ້ຕ້ອງລົງທຶນສ້າງລະບົບສາຍສົ່ງໃໝ່ ທັງເປັນການສິ້ນເປືອງງົບປະມານ ແລະ ຊັບພະຍາກອນທຳມະຊາດ ທັງໆທີ່ສາມາດນຳໃຊ້ລະບົບສົ່ງຮ່ວມກັນໄດ້ ນອກຈາກນັ້ນ ❷ ໂຄງການຂະໜາດໃຫ່ຍ, ມີຄຸນນະພາບ ສ່ວນໃຫ່ຍສົ່ງອອກເປັນຕົ້ນຕໍ ໂດຍບໍ່ໄດ້ຄຳນຶງການສະໜອງພາຍໃນເທົ່າທີ່ຄວນ.

1.1 ຄວາມຕ້ອງການໄຟຟ້າ

ການຊົມໃຊ້ພະລັງງານໄຟຟ້າຂອງ ສປປ ລາວ ໃນໄລຍະຜ່ານມາ ນັບຕັ້ງແຕ່ປີ 2000 ຫາ 2020 ມີອັດຕາການຂະຫຍາຍຕົວສະເລ່ຍປະມານ 13%/ປີ, ໃນໄລຍະແຕ່ປີ 2000 ຫາ 2012 ຂະແໜງການທີ່ມີອັດຕາສ່ວນການຊົມໃຊ້ພະລັງງານໄຟຟ້າຫຼາຍກວ່າໝູ່ ແມ່ນຂະແໜງທີ່ຢູ່ອາໄສ, ຫຼັງຈາກນັ້ນ ນັບແຕ່ປີ 2013 ຫາ 2018 ເຫັນວ່າຂະແໜງອຸດສາຫະກຳ ໄດ້ມີແນວໂນ້ມຂະຫຍາຍຕົວສູງຂຶ້ນ ເຮັດໃຫ້ຂະແໜງການດັ່ງກ່າວ ກາຍເປັນຂະແໜງການ ທີ່ມີອັດຕາສ່ວນການນຳໃຊ້ພະລັງງານຫຼາຍກວ່າໝູ່. ໃນປີ 2020 ຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າທັງໝົດທົ່ວປະເທດ 7.779 ລ້ານກິໂລວັດໂມງ/ປີ ໂດຍມີອັດຕາຂະຫຍາຍຕົວເພີ່ມຂຶ້ນ 18% ທຽບໃສ່ປີ 2019, ການນຳໃຊ້ກຳລັງໄຟຟ້າສູງສຸດທົ່ວປະເທດ ແມ່ນ 1.299 MW ເກີດຂຶ້ນໃນເດືອນ ມີຖຸນາ ຊຶ່ງມີອັດຕາການຂະຫຍາຍຕົວເພີ່ມຂຶ້ນປະມານ 6% ທຽບໃສ່ປີ 2019.

- ❖ ຂະແໜງການທີ່ມີການນຳໃຊ້ພະລັງງານໄຟຟ້າ ຫຼາຍກວ່າໝູ່ແມ່ນ:
  - ຂະແໜງອຸດສາຫະກຳ 4.289 ລ້ານກິໂລວັດໂມງ/ປີ, ກວມເອົາ 55%.
  - ຂະແໜງທີ່ຢູ່ອາໃສ 2.530 ລ້ານກິໂລວັດໂມງ/ປີ, ກວມເອົາ 33%.
  - ຂະແໜງທຸລະກິດ 836 ລ້ານກິໂລວັດໂມງ/ປີ, ກວມເອົາ 11%.
  - ຂະແໜງກະສິກຳ 124 ລ້ານກິໂລວັດໂມງ/ປີ, ກວມເອົາ 2%.
- ❖ ອັດຕາການ ຊົມໃຊ້ໄຟຟ້າທົ່ວປະເທດ ສາມາດບັນລຸໄດ້ຄື:
  - ຈຳນວນເມືອງທີ່ມີໄຟຟ້າໃຊ້ທົ່ວປະເທດແມ່ນບັນລຸ 100% ໃນຈຳນວນ 148 ເມືອງ.

- ຈຳນວນບ້ານທີ່ມີໄຟຟ້າໃຊ້ທັງໝົດທົ່ວປະເທດແມ່ນບັນລຸ 93,3% ໃນຈຳນວນບ້ານທັງໝົດແມ່ນ 8.450 ບ້ານ ແລະ ຈຳນວນບ້ານທີ່ມີໄຟຟ້າໃຊ້ແລ້ວມີ 7.866 ບ້ານ.
- ຈຳນວນຄົວເຮືອນທີ່ມີໄຟຟ້າໃຊ້ແມ່ນບັນລຸ 95%.

1.2. ການຜະລິດໄຟຟ້າ

ສປປ ລາວ ເປັນປະເທດທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນຊັບພະຍາກອນແຫຼ່ງນ້ຳເປັນຈຳນວນຫຼວງຫຼາຍ ບວກກັບສະພາບທາງດ້ານພູມສັນຖານທີ່ເປັນພູເຂົາຈຶ່ງເຮັດໃຫ້ມີເງື່ອນໄຂໃນການພັດທະນາເປັນແຫຼ່ງຜະລິດພະລັງງານໄຟຟ້ານ້ຳຕົກ. ການພັດທະນາໂຄງການແຫຼ່ງຜະລິດໄຟຟ້າ ໃນ ສປປ ລາວ ແມ່ນໄດ້ເລີ່ມແຕ່ປີ 1970 ເປັນຕົ້ນມາ, ແຫຼ່ງຜະລິດໄຟຟ້າ ພາຍໃນ ສປປ ລາວ ແມ່ນປະກອບມີການລົງທຶນຂອງພາກລັດ, ພາກລັດຮ່ວມກັບເອກະຊົນ ແລະ ເອກະຊົນເປັນຜູ້ລົງທຶນ, ສ່ວນໂຄງການທີ່ຮ່ວມລົງທຶນແມ່ນ ລັດວິສາຫະກິດເຂົ້າຮ່ວມເປັນຂາຮຸ້ນຕາງໜ້າໃຫ້ກັບລັດຖະບານ. ປະຈຸບັນອັດຕາສ່ວນການຜະລິດ ເພື່ອສົ່ງອອກ ແລະ ຮັບໃຊ້ພາຍໃນ ຂອງ (IPP(e), IPP(d) ກວມເອົາ 91,12%, ໃນຂະນະ 8,88% ແມ່ນຄຸ້ມຄອງໂດຍ ບໍລິສັດຜະລິດໄຟຟ້າລາວມະຫາຊົນ ແລະ ລັດວິສາຫະກິດໄຟຟ້າລາວ. ຮອດທ້າຍປີ 2020 ທົ່ວປະເທດມີກຳລັງຕິດຕັ້ງລວມກັນທັງໝົດ 10.091 MW.

<u>ກຳລັງຕິດຕັ້ງແບ່ງຕາມຜູ້ຜະລິດໄຟຟ້າ</u>

❖ ລັດວິສາຫະກິດໄຟຟ້າລາວ (EDL)	2,5	MW ຫຼືເທົ່າ 0,02%
❖ ບໍລິສັດຜະລິດໄຟຟ້າລາວມະຫາຊົນ (EDL-GEN)	918	MW ຫຼືເທົ່າ 9,10%
❖ ຜູ້ພັດທະນາເອກະຊົນຮັບໃຊ້ພາຍໃນ (IPPd)	2,244	MW ຫຼືເທົ່າ 22,24%
❖ ຜູ້ພັດທະນາເອກະຊົນເພື່ອສົ່ງອອກ (IPPe)	6,892	MW ຫຼືເທົ່າ 68,30%
❖ ຜູ້ພັດທະນາເອກະຊົນຮັບໃຊ້ພາຍໃນ (SPP)	35	MW ຫຼືເທົ່າ 0,34%
<u>ລວມ</u>	<u>10,091 MW</u>	

<u>ປະກອບມີແຫຼ່ງຜະລິດໄຟຟ້າດັ່ງນີ້</u>

❖ ເຂື່ອນໄຟຟ້ານ້ຳຕົກ (Hydropower)	8,114	MW ຫຼືເທົ່າ 80,41%
❖ ໄຟຟ້າຄວາມຮ້ອນຖ່ານຫີນ (Coal Power Plant)	1,878	MW ຫຼືເທົ່າ 18,61%
❖ ໄຟຟ້າຊີວະມວນ (Biomass)	43	MW ຫຼືເທົ່າ 0,42%
❖ ໄຟຟ້າແສງຕາເວັນ (Solar farm)	57	MW ຫຼືເທົ່າ 0,56%
<u>ລວມ</u>	<u>10,091 MW</u>	

<u>ໃນນັ້ນ, ຮັບໃຊ້ພາຍໃນ ແລະໄຟຟ້າສົ່ງອອກມີ</u>

❖ ຮັບໃຊ້ພາຍໃນ (Domestic)	3,085	MW ຫຼື ເທົ່າ 30,57%
❖ ສົ່ງອອກ (Export)	7,006	MW ຫຼື ເທົ່າ 69,43%
<u>ລວມ</u>	<u>10,091 MW</u>	

ໃນນັ້ນ, ການແລກປ່ຽນພະລັງງານ (Power Exchange) ໃນລະບົບຂອງໄຟຟ້າລາວມີດັ່ງນີ້:

ຕະຫຼອດ 10 ປີຜ່ານມານັບແຕ່ປີ (2011-2020) ລັດວິສະຫະກິດໄຟຟ້າລາວ ໄດ້ມີການຊື້-ຂາຍ ແລກປ່ຽນ ພະລັງງານໄຟຟ້າກັບບັນດາປະເທດໄກ້ຄຽງ ເປັນຕົ້ນ ເຊັ່ນ: ລະດູຝົນ ເຮົາຜະລິດໄດ້ຫຼາຍເກີນຄວາມຕ້ອງການແມ່ນໄດ້ສົ່ງ ອອກ ສ່ວນລະດູແລ້ງເຮົາຜະລິດໄດ້ໜ້ອຍຈຳເປັນຕ້ອງໄດ້ນຳເຂົ້າມາດຸ່ນດ່ຽງໃຫ້ແກ່ຄວາມຕ້ອງການພາຍໃນ ນອກຈາກນັ້ນ ຍັງໄດ້ນຳເຂົ້າມາຮັບໃຊ້ເຂດລຽບຕາມຊາຍແດນ ທີ່ລະບົບຕາຂ່າຍໄຟຟ້າຂອງລາວ ບໍ່ທັນເຂົ້າເຖິງ, ໂດຍມີລາຍລະອຽດດັ່ງນີ້:

- ໄລຍະ 10 ປີຜ່ານມາ ການນຳເຂົ້າ ທັງໝົດ 11.212 ລ້ານກິໂລວັດໂມງ, ສະເລ່ຍການນຳເຂົ້າແຕ່ລະປີ ປະມານ 1.121 ລ້ານກິໂລວັດໂມງ/ປີ.
- ໄລຍະ 10 ປີຜ່ານມາສົ່ງອອກ ພະລັງງານໄຟຟ້າຈາກລະບົບຂອງໄຟຟ້າລາວທັງໝົດ 13.646 ລ້ານກິໂລ ວັດໂມງ, ສະເລ່ຍການສົ່ງອອກແຕ່ລະປີປະມານ 1.365 ລ້ານກິໂລວັດໂມງ/ປີ.

ການນຳເຂົ້າພະລັງງານໄຟຟ້າ ໃນລະບົບສາຍສົ່ງໄຟຟ້າແຮງດັນສູງ ມີຢູ່ເຂດນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ບໍລິຄຳໄຊ ແລະ ອີກຈຳນວນໜຶ່ງແມ່ນລະບົບຈຳໜ່າຍໄຟຟ້າແຮງດັນກາງ ທີ່ຕິດກັບຊາຍແດນປະເທດ ເພື່ອນບ້ານ ເປັນຕົ້ນແມ່ນ ບ້ານທີ່ຕິດກັບຊາຍແດນຫວຽດນາມ, ສປ ຈີນ ແລະ ໄທ.

1.3. ລະບົບສາຍສົ່ງໄຟຟ້າ

ການພັດທະນາລະບົບສາຍສົ່ງ ແລະ ຈຳໜ່າຍໄຟຟ້າ ແມ່ນປັດໄຈພື້ນຖານໜຶ່ງຂອງຂະແໜງພະລັງງານໄຟຟ້າ ທີ່ມີ ຄວາມສຳຄັນຢ່າງຍິ່ງຕໍ່ກັບການຂັບເຄື່ອນເສດຖະກິດຂອງປະເທດ ເພື່ອໃຫ້ບັນລຸເປົ້າໝາຍຕາມແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ວາງອອກເປັນແຕ່ລະໄລຍະ, ເປັນຂົວຕໍ່ໃນການລຳລຽງນຳສົ່ງພະລັງງານໄຟຟ້າຈາກ ແຫຼ່ງຜະລິດໄຟຟ້າ ຫາ ສະຖານີໄຟຟ້າ ແລະ ລະບົບຈຳໜ່າຍ ເພື່ອນຳສົ່ງພະລັງງານດັ່ງກ່າວ ໃຫ້ແຕ່ລະຂະແໜງການໄດ້ຊົມໃຊ້ຢ່າງທົ່ວເຖິງ, ພ້ອມ ດຽວກັນນັ້ນ ຍັງມີຄວາມຮັບຜິດຊອບຕໍ່ສັງຄົມເຊັ່ນ: ຄວາມສະຖຽນລະພາບ, ຄວາມໝັ້ນຄົງຂອງລະບົບ ໃຫ້ມີຄວາມຍືນຍົງ ສາມາດນຳໃຊ້ໄດ້ຍາວນານ. ໃນໄລຍະສິບປີຜ່ານມາ ລັດຖະບານໄດ້ສຸມໃສ່ການບຸກເບີກແຫຼ່ງຜະລິດໄຟຟ້າ ເພື່ອໃຫ້ຮັບປະ ກັນການຊົມໃຊ້ໄຟຟ້າພາຍໃນປະເທດເພີ່ມຂຶ້ນ ແລະ ການສົ່ງອອກຂາຍຕ່າງປະເທດ, ຕໍ່ກັບບັນຫາດັ່ງກ່ວານີ້ ໄດ້ສົ່ງຜົນສະ ທ້ອນໂດຍກົງຕໍ່ການພັດທະນາລະບົບສາຍສົ່ງ ແລະ ລະບົບຈຳໜ່າຍໄຟຟ້າ ມັນຮຽກຮ້ອງໃຫ້ມີການລົງທຶນຢ່າງໃຫ່ຍຫຼວງ ຕໍ່ ກັບການພັດທະນາລະບົບສາຍສົ່ງ ແລະ ຈຳໜ່າຍໄຟຟ້າເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງ. ດັ່ງນັ້ນ ໃນໄລຍະ ປີ 2010 ຫາ 2016 ເພື່ອວາງແຜນຮັບມືກັບການກ້າວກະໂດດຂຶ້ນຂອງການລົງທຶນ ການພັດທະນາແຫຼ່ງຜະລິດໄຟຟ້າ, ການ ວາງແຜນພັດທະນາລະບົບສາຍສົ່ງໄຟຟ້າ ແລະ ລະບົບຈຳໜ່າຍ ຂອງ ຂະແໜງການທີ່ກ່ຽວຂ້ອງຈຶ່ງໄດ້ວາງໜ້າທີ່ຮັບຜິດຊອບ ຄື:

- ພາກສ່ວນທີ 1 ແມ່ນ ກະຊວງພະລັງງານ ແລະ ບໍ່ແຮ່ ມີໜ້າທີ່ຮັບຜິດຊອບໃນການຊຸກຍູ້ສົ່ງເສີມ ການຂາຍໄຟຟ້າ ອອກຕ່າງປະເທດ, ພ້ອມດຽວກັນນັ້ນກໍ່ປະກອບຄຳເຫັນຕໍ່ແຜນພັດທະນາໄຟຟ້າ ແລະ ລະບົບຈຳໜ່າຍຂອງ ລັດວິ ສາຫະກິດໄຟຟ້າລາວ (ຟຟລ) ເພື່ອໃຫ້ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມທີ່ວາງອອກໃນແຕ່ລະໄລ ຍະ.
- ພາກສ່ວນທີ 2 ແມ່ນ ຟຟລ ແລະ ບໍລິສັດຜະລິດໄຟຟ້າລາວມະຫາຊົນ (EDL- Gen), ເຊິ່ງ EDL- Gen ມີ ໜ້າທີ່ລົງທຶນພາກແຫຼ່ງຜະລິດໄຟຟ້າ ແລະ ຟຟລ ມີພາລະບົດບາດໃນການຄຸ້ມຄອງ ແລະ ສ້າງແຜນເຊື່ອມຕໍ່ລະ ບົບສາຍສົ່ງໄຟຟ້າໃຫ້ທົ່ວເຖິງ, ພ້ອມດຽວກັນນັ້ນ ກໍ່ຮັບປະກັນໃຫ້ມີຄວາມໝັ້ນຄົງ ແລະ ຄວາມສະຖຽນລະພາບ ຂອງລະບົບໃນຂອບເຂດທົ່ວປະເທດ.

ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ສະພາບການລົງທຶນກໍ່ສ້າງສາຍສົ່ງຂອງ ຝຟລ ຜ່ານມາ ສ່ວນໃຫຍ່ແລ້ວແມ່ນ ບໍ່ເປັນໄປຕາມແຜນພັດທະນາໄຟຟ້າ (PDP) ຂອງ ຝຟລ ທີ່ວາງແຜນໄວ້, ໂຄງການສາຍສົ່ງຂອງ ຝຟລ ສ່ວນໃຫຍ່ ແມ່ນ ແບກຫາບພາລະທາງດ້ານການລົງທຶນຢ່າງໃຫ່ຍຫຼວງ ໂດຍສະເພາະແມ່ນ ຕິດພັນກັບການສ້າງສາຍສົ່ງໄປຮັບເອົາພະລັງງານ ຈາກແຫຼ່ງຜະລິດໄຟຟ້າ ທີ່ ຝຟລ ມີສັນຍາຊື້ຂາຍໄຟຟ້າ (PPA) ກັບ ບໍລິສັດເອກະຊົນ ແລະ ນອກຈາກນັ້ນການລົງທຶນໃນ ການສ້າງລະບົບສາຍສົ່ງ 115 kV, 230 kV ແລະ 500 kV ໃນກອບເງິນກູ້ທີ່ລັດຖະບານໄດ້ກູ້ຢືມມານຳໃຊ້ໃນໄລຍະຜ່ານ ມາ ແມ່ນບໍ່ໄດ້ມີການແຂ່ງຂັນປະມູນ ເຮັດໃຫ້ມູນຄ່າໂຄງການຂ້ອນຂ້າງສູງ, ການປັບປຸງສາຍສົ່ງ ແລະ ສະຖານີ ໂດຍທີ່ ບໍ່ຄຳນຶງເຖິງຄວາມແນ່ນອນຂອງຕະຫຼາດ ຫຼື ຄາດຄະເນຄວາມຕ້ອງການສູງເກີນໄປ ເຮັດໃຫ້ໂຄງການກໍ່ສ້າງສາຍສົ່ງ - ສະຖານີ ໄລຍະຜ່ານມາຍັງບໍ່ມີປະສິດທິພາບ ແລະ ປະສິດທິຜົນດີເທົ່າທີ່ຄວນ.

ດັ່ງນັ້ນ ຕົກມາຮອດປີ 2017 ກົດໝາຍວ່າດ້ວຍໄຟຟ້າສະບັບປັບປຸງ ຂອງ ສປປ ລາວ ໄດ້ຖືກຮັບຮອງ ເຊິ່ງໄດ້ລະບຸ ຊັດເຈນ ໃນມາດຕາ 10 ກ່ຽວກັບການພັດທະນາຂອງຂະແໜງພະລັງງານໄຟຟ້າ ຕ້ອງມີແຜນພັດທະນາພະລັງງານແຫ່ງຊາດ ເພື່ອເປັນບ່ອນອີງໃຫ້ແກ່ ຝຟລ ແລະ ບໍລິສັດຜະລິດໄຟຟ້າລາວ-ມະຫາຊົນ (EDL- Gen) ນຳໄປຈັດຕັ້ງປະຕິບັດ. ດັ່ງນັ້ນ ກະຊວງພະລັງງານ ແລະ ບໍ່ແຮ່ ໃນນາມຜູ້ຮັບຜິດຊອບໃນການວາງແຜນພັດທະນາພະລັງງານໄຟຟ້າ ຈຶ່ງໄດ້ສຶກສາ, ຄົ້ນຄ້ວາ ສ້າງຍຸດທະສາດການພັດທະນາໄຟຟ້າ ຂອງ ສປປ ລາວ ປີ 2021-2030 ຂຶ້ນມາ, ໂດຍການຄົ້ນຄ້ວາສັງລວມເອກະສານສຶກ ສາຕ່າງໆເຊັ່ນ: ການສຶກສາແຜນແມ່ບົດສາຍສົ່ງໄຟຟ້າທົ່ວປະເທດ ໂດຍ JICA, ການສຶກສາໂຄງສ້າງຂອງຂະແໜງການໄຟ ຟ້າໂດຍ ບໍລິສັດທີ່ປຶກສາ PWC ໄດ້ເນັ້ນໃສ່ປັດໄຈພື້ນຖານການວາງແຜນພັດທະນາສາຍສົ່ງຄືນໃໝ່ຄື: ການແບ່ງເຂດການ ຊົມໃຊ້ໄຟຟ້າ, ກຳນົດຄວາມຕ້ອງການຊົມໃຊ້ໄຟແຕ່ລະເຂດ, ຄິດໄລ່ປະລິມານການໄຫຼຂອງພະລັງງານໃນລະບົບແຕ່ປີ 2020 ຫາ 2030, ກຳນົດມູນຄ່າການຊຶດເຊີຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ໄລ່ລຽງມູນຄ່າໂຄງການໂດຍອີງໃສ່ ຫົວໜ່ວຍລາຄາກາງ ທີ່ທາງກະຊວງພະລັງງານ ແລະ ບໍ່ແຮ່ໄດ້ກຳນົດໄວ້.

ພາກທີ II ນະໂຍບາຍພະລັງງານຂອງ ສປປ ລາວ

ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ສຶບທົບ ກັບພາກສ່ວນທີ່ກ່ຽວຂ້ອງ ສຶກສາຄົ້ນຄວ້າ ຮ່າງນະໂຍບາຍພະລັງງານ ຂອງ ສປປ ລາວ ຂຶ້ນເລີ່ມຕັ້ງແຕ່ ປີ 2016 ເປັນຕົ້ນມາ ແລະ ມີການຈັດກອງປະຊຸມເປີດກວ້າງກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຄັ້ງວັນທີ 4 ກໍລະກົດ 2017 ທີ່ ຫໍປະຊຸມແຫ່ງຊາດ ແລະ ໄດ້ປັບປຸງເນື້ອໃນຕາມຄວາມຄິດເຫັນຈາກທຸກຂະແໜງການຢ່າງເປັນເອກະພາບ. ນະໂຍບາຍພະລັງງານຂອງ ສປປ ລາວ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ຈາກລັດຖະບານ ໃນວັນທີ 08 ກໍລະກົດ 2020 ປະກອບດ້ວຍ ນະໂຍບາຍພະລັງງານ 10 ດ້ານຄື: ນະໂຍບາຍດ້ານນ້ຳມັນເຊື້ອໄຟ ແລະ ອາຍແກ๊ສ, ດ້ານຖ່ານຫີນ, ດ້ານພະລັງງານທົດແທນ, ດ້ານການພັດທະນາແຫຼ່ງຜະລິດພະລັງງານໄຟຟ້າ, ດ້ານພັດທະນາລະບົບສາຍສົ່ງໄຟຟ້າ, ດ້ານພັດທະນາລະບົບຈຳໜ່າຍໄຟຟ້າ, ດ້ານຄວາມໝັ້ນຄົງດ້ານພະລັງງານ, ດ້ານການພັດທະນາຕະຫຼາດພະລັງງານ,ດ້ານນະໂຍບາຍລາຄາໄຟຟ້າ ແລະ ດ້ານການອະນຸລັກ ແລະ ປະຢັດພະລັງງານ ຊຶ່ງດ້ານທີ່ຕິດພັນກັບຍຸດທະສາດການພັດທະນາພະລັງງານໄຟຟ້າຂອງ ສປປ ລາວ ໄດ້ສະຫຼຸບສັງລວມດັ່ງລຸ່ມນີ້.

2.1 ນ້ຳມັນເຊື້ອໄຟ ແລະ ອາຍແກ๊ສ

ສ້າງກົນໄກເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ອາຍແກ๊ສ ໂດຍການຫັນປ່ຽນການນຳໃຊ້ ແລະ ການສົ່ງເສີມໃຫ້ມີການນຳໃຊ້ລົດໄຟຟ້າໃນຂະແໜງຄົມມະນາຄົມໃຫ້ຫຼາຍຂຶ້ນ.

2.2 ຖ່ານຫີນ

ການນຳໃຊ້ຖ່ານຫີນພາຍໃນປະເທດ ເພື່ອສ້າງໂຮງງານຜະລິດໄຟຟ້າຄວາມຮ້ອນ ຕ້ອງເລືອກໃຊ້ຖ່ານຫີນທີ່ ມີຄ່າຄວາມຮ້ອນເທົ່າກັບ ຫຼື ຕ່ຳກວ່າ 5.000kcal/kg, ຕ້ອງນຳໃຊ້ເຂົ້າໃນໂຮງງານຜະລິດໄຟຟ້າກັບທີ່ (Mine Mouth) ເພື່ອຮັບປະກັນທາງດ້ານເສດຖະກິດ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນການເຄື່ອນຍ້າຍຖ່ານຫີນ, ຮັບປະກັນໃຫ້ມີການຄວບຄຸມມົນລະພິດຢ່າງເຂັ້ມງວດ ໂດຍຕ້ອງປະຕິບັດຕາມມາດຕະຖານການຄວບຄຸມມົນລະພິດແຫ່ງຊາດ, ການນຳໃຊ້ຖ່ານຫີນເປັນພະລັງງານຄວາມຮ້ອນ ຕ້ອງເປັນຂະບວນການຜະລິດທີ່ສະອາດ (Clean Coal Technology) ໃນທຸກຂະບວນການເລີ່ມແຕ່ ກ່ອນການເຜົາໄໝ້, ໄລຍະເຜົາໄໝ້ ແລະ ຫຼັງການເຜົາໄໝ້ ເພື່ອການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ.

2.3 ພະລັງງານທົດແທນ

ສົ່ງເສີມໃຫ້ມີການນຳໃຊ້ພະລັງງານທົດແທນ ເຊັ່ນ ຊີວະມວນ, ໄຟຟ້ານ້ຳຕົກຂະໜາດນ້ອຍ, ແສງຕາເວັນ, ລົມ ແລະ ອື່ນໆ ເພື່ອຜະລິດເປັນພະລັງງານໄຟຟ້າ ນຳໃຊ້ໃນຄົວເຮືອນ ຫຼື ຊຸມຊົນ ດ້ວຍຕົນເອງ ໂດຍສະເພາະເຂດຊົນນະບົດທີ່ບໍ່ມີລະບົບຕາຂ່າຍໄຟຟ້າເຂົ້າເຖິງ. ຍຸດທະສາດການພັດທະນາພະລັງງານທົດແທນ ຂອງ ສປປ ລາວ (ເລກທີ 324/ລບ, ລົງວັນທີ 11/10/2011) ເປັນບ່ອນອີງທີ່ສຳຄັນຕໍ່ກັບຫົວຂໍ້ນີ້ ເພື່ອໃຫ້ບັນລຸຜົນສຳເລັດໃນການຈັດຕັ້ງປະຕິບັດ ນະໂຍບາຍພະລັງງານ ຂອງ ສປປ ລາວ.

2.4 ການພັດທະນາແຫຼ່ງຜະລິດພະລັງງານໄຟຟ້າ

ຂະຫຍາຍແຫຼ່ງຜະລິດໃຫ້ສອດຄ່ອງກັບ ແຜນຄວາມຕ້ອງການພະລັງງານໄຟຟ້າພາຍໃນ ແລະ ແຜນການຮ່ວມມືກັບພາກພື້ນ, ພັດທະນາແຫຼ່ງຜະລິດໄຟຟ້າບົນພື້ນຖານກົນໄກຕະຫຼາດພະລັງງານ, ຄວາມຕ້ອງການພາຍໃນ ແລະ ພາກພື້ນ, ຮັບປະກັນຜົນປະໂຫຍດໃຫ້ແກ່ພາກລັດ ແລະ ໄດ້ມາດຕະຖານທາງດ້ານເສດຖະກິດ-ເຕັກນິກ, ສິ່ງແວດລ້ອມ ແລະ ສັງຄົມ.

ທ່າແຮງບົ່ມຊ້ອນທີ່ມີຢູ່ພາຍໃນປະເທດ ເພື່ອການພັດທະນາເປັນແຫຼ່ງຜະລິດໄຟຟ້າ ເປັນຕົ້ນແມ່ນ ໄຟຟ້ານ້ຳຕົກ, ການພັດທະນາໄຟຟ້າຄວາມຮ້ອນທີ່ນຳໃຊ້ຖ່ານຫີນ ແລະ ແຫຼ່ງພະລັງງານທົດແທນ ຕ້ອງມີການປະສົມປະສານແຫຼ່ງຜະລິດຕາມທ່າແຮງ ແລະ ຕົ້ນທຶນການຜະລິດ, ຊຸກຍູ້ການພັດທະນາໃຫ້ບັນລຸໄດ້ຕາມສັດສ່ວນຂອງການຜະລິດໄຟຟ້າທັງໝົດ ໃນນັ້ນ ໄຟຟ້ານ້ຳຕົກ [1]75%; ໄຟຟ້າຄວາມຮ້ອນຈາກການນຳໃຊ້ຖ່ານຫີນ [1]14% ແລະ ໄຟຟ້າຈາກພະລັງງານທົດແທນ [1]11% ພັດທະນາໃຫ້ມີຄວາມຍືນຍົງ ແລະ ສະໜອງໃຫ້ລະບົບຢ່າງມີຄວາມສະເຖຍລະພາບ.

[[1] ຕົວເລກດັດແກ້ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 22/ສພຊ, ລົງວັນທີ 16/11/2021]

2.4.1 ໄຟຟ້ານ້ຳຕົກ

ການພັດທະນາໄຟຟ້ານ້ຳຕົກ ເປັນທ່າແຮງຕົ້ນຕໍໃນການຜະລິດພະລັງງານໄຟຟ້າ ເຊິ່ງເປັນພະລັງງານທີ່ສະອາດ ແລະ ມີຕົ້ນທຶນທີ່ສາມາດແຂ່ງຂັນກັບແຫຼ່ງຜະລິດໄຟຟ້າອື່ນໆໄດ້, ຕິດພັນກັບການພັດທະນາພື້ນຖານໂຄງລ່າງ, ຈັດສັນອາຊີບຄົງທີ່ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ຖືກຜົນກະທົບໃຫ້ດີຂຶ້ນ. ການພັດທະນາໄຟຟ້ານ້ຳຕົກແບບມີອ່າງເກັບນ້ຳ ແມ່ນເພື່ອຮັບປະກັນໃຫ້ແກ່ການຜະລິດໄຟຟ້າ, ສາມາດຕ້ານແລ້ງ, ຕ້ານຖ້ວມ, ແລະ ນຳໃຊ້ນ້ຳເຂົ້າໃນຂະແໜງການອື່ນໆ ຢ່າງມີປະສິດທິຜົນ. ບັນດາໂຄງການຕາມລຳແມ່ນ້ຳຂອງຕ້ອງປະຕິບັດຕາມສົນທິສັນຍາແມ່ນ້ຳຂອງ 1995.

ຍ້ອນເງື່ອນໄຂທາງດ້ານທີ່ຕັ້ງພູມສັນຖານຂອງປະເທດ ທີ່ມີພູຜາສູງຊັນ, ມີປ່າໄມ້ທີ່ອຸດົມສົມບູນ ໄດ້ເຮັດໃຫ້ ສປປ ລາວ ມີທ່າແຮງ ໃນການພັດທະນາໄຟຟ້ານ້ຳຕົກ, ສະນັ້ນ ຕາມການສຶກສາຂອງອົງການແມ່ນ້ຳຂອງສາກົນ ໄດ້ສະແດງໃຫ້ເຫັນວ່າ ປະເທດລາວມີທ່າແຮງໃນການພັດທະນາແຫຼ່ງພະລັງງານໄຟຟ້າ ຈາກນ້ຳຕົກປະມານ 26.000 MW, ມີເນື້ອທີ່ອ່າງໂຕ່ງກວມເອົາ 35% ຂອງ ອ່າງໂຕ່ງແມ່ນ້ຳຂອງທັງໝົດ ແລະ ກາຍເປັນທ່າແຮງຕົ້ນຕໍ່ໃນການເສີມສ້າງຄວາມໝັ້ນຄົງທາງດ້ານພະລັງງານໄຟຟ້າໃຫ້ແກ່ລະບົບ ເພື່ອສະໜອງໄຟຟ້າໃຫ້ແກ່ ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ແລະ ສົ່ງອອກຂາຍຕ່າງປະເທດ.

ການພັດທະນາພະລັງງານໄຟຟ້ານ້ຳຕົກ ຍັງຕ້ອງຊັ່ງຊາຜົນປະໂຫຍດອື່ນໆຢ່າງເໝາະສົມ ເຊັ່ນ: ເປັນພະລັງງານທີ່ສະອາດ, ບໍ່ມີມົນລະພິດ, ຕົ້ນທຶນຕ່ຳ, ຊ່ວຍຕ້ານແລ້ງ, ຕ້ານຖ້ວມ ແລະ ສ້າງເງື່ອນໄຂໃຫ້ແກ່ການພັດທະນາ ຂອງຂະແໜງການອື່ນເປັນຕົ້ນແມ່ນ ການປະມົງ, ການເດີນເຮືອ, ການທ່ອງທ່ຽວ ແລະ ການບໍລິໂພກອື່ນໆ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ຕາມເປົ້າໝາຍຂອງລັດຖະບານທີ່ກຳນົດໄວ້ຮອດປີ 2020 ໄດ້ວາງຄາດໝາຍສູ້ຊົນພັດທະນາແຫຼ່ງພະລັງງານໄຟຟ້ານ້ຳຕົກ ໃຫ້ມີກຳລັງຕິດຕັ້ງທັງໝົດ ຫຼາຍກວ່າ 10.000 MW; ຮອດປີ 2025 ໃຫ້ສຳເລັດຫຼາຍກວ່າ 12.000 MW; ຮອດປີ 2030 ໃຫ້ສຳເລັດຫຼາຍກວ່າ 20.000 MW. ຈຳເປັນຕ້ອງມີນະໂຍບາຍໃນການສ້າງກົນໄກເພີ່ມຕື່ມ ເຊິ່ງເຫັນໄດ້ ຕາມແນວທາງການຈັດຕັ້ງປະຕິບັດ ທີ່ເໝາະສົມ, ຄວາມຕ້ອງການພະລັງງານໄຟຟ້າຈາກພາຍໃນປະເທດ ແລະ ຕ່າງປະເທດ, ຄວາມຕ້ອງການໃນແຕ່ລະໄລຍະຂອງລະດູການຜະລິດເຊັ່ນ: ໄຟຟ້ານ້ຳຕົກ, ໄຟຟ້າຄວາມຮ້ອນຈາກຖ່ານຫີນ ແລະ ໄຟຟ້າຈາກພະລັງງານທົດແທນ ເພື່ອຮັບປະກັນໃຫ້ມີການປະສົມປະສານແຫຼ່ງຜະລິດໄຟຟ້າຫຼາຍຂຶ້ນ.

ເພື່ອຍົກສູງປະສິດທິພາບ ໃນການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ສູງ ການພັດທະນາໄຟຟ້ານ້ຳຕົກ ຕ້ອງປະຕິບັດຕາມຍຸດທະສາດ ແລະ ແຜນພັດທະນາພະລັງງານໄຟຟ້າ ຂອງ ສປປລາວ ທີ່ກຳນົດໄວ້ໃນແຕ່ລະໄລຍະ. ການພັດທະນາໄຟຟ້ານ້ຳຕົກ ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໜ້ອຍທີ່ສຸດ ແລະ ມີຜົນປະໂຫຍດສູງສຸດ, ໂດຍໃຫ້ການພັດທະນາ ດຳເນີນໄປຕາມຂັ້ນຕອນຄື: ຕ້ອງມີການສຶກສາສຳຫຼວດ ບົດວິພາກເສດຖະກິດ-ເຕັກນິກ ຕາມບົດແນະນຳ ທີ່ກະຊວງພະລັງງານ ແລະ ບໍ່ແຮ່ ວາງອອກ, ສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ຕາມລະບຽບການ ແລະ ຂັ້ນຕອນ ທີ່ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ວາງອອກຢ່າງລະອຽດ ເພື່ອສົມທຽບຜົນໄດ້ຜົນເສຍ ຈາກການພັດທະນາໃນແຕ່ລະໂຄງ ການ.

ສິ່ງເສີມການພັດທະນາໄຟຟ້ານ້ຳຕົກແບບມີອ່າງເກັບນ້ຳ ເພື່ອຮັບປະກັນການຕອບສະໜອງພະລັງງານໄຟຟ້າ ໃຫ້ແກ່ຄວາມຕ້ອງການພາຍໃນປະເທດຕະຫຼອດປີ, ໂດຍສະເພາະແມ່ນ ໂຄງການໄຟຟ້ານ້ຳຕົກທີ່ມີອ່າງກັກເກັບນ້ຳຂະໜາດໃຫ່ຍ ຕ້ອງມີແຜນການຜະລິດຢ່າງເປັນລະບົບ ເພື່ອເພີ່ມການສະໜອງໄຟຟ້າໃນລະດູແລ້ງໃຫ້ຫຼາຍຂຶ້ນ ແລະ ຮັບປະກັນການສະໜອງໄຟຟ້າໃນຊ່ວງທີ່ມີຄວາມຕ້ອງການໄຟຟ້າສູງສຸດ (Peak Load).

ການພັດທະນາໄຟຟ້ານ້ຳຕົກ ຕາມລຳແມ່ນ້ຳຂອງ ຈະຕ້ອງປະຕິບັດຕາມສົນທິສົນຍາແມ່ນ້ຳຂອງ 1995 ຢ່າງເຂັ້ມງວດ ແລະ ປະຕິບັດຕາມຂັ້ນຕອນຢ່າງເຄັ່ງຄັດ, ພາວະວິໄສ ແລະ ສົມເຫດສົມຜົນ.

2.4.2 ໄຟຟ້າຄວາມຮ້ອນທີ່ນຳໃຊ້ຖ່ານຫີນເປັນເຊື້ອໄຟ

ການພັດທະນາໄຟຟ້າຄວາມຮ້ອນທີ່ນຳໃຊ້ຖ່ານຫີນເປັນເຊື້ອໄຟ ຕ້ອງເລືອກເຟັ້ນເຕັກໂນໂລຊີທີ່ທັນສະໄໝເປັນມິດຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂຮງໄຟຟ້າຄວາມຮ້ອນ ຕ້ອງພັດທະນາເພື່ອຕອບສະໜອງພະລັງງານໄຟຟ້າຕາມຄວາມຕ້ອງການພື້ນຖານ (Base Load).

ການພັດທະນາໄຟຟ້າຄວາມຮ້ອນທີ່ນຳໃຊ້ຖ່ານຫີນເປັນເຊື້ອໄຟ ຖືວ່າມີຄວາມຈຳເປັນອີກດ້ານໜຶ່ງເພື່ອຊ່ວຍ ສ້າງຄວາມສົມດຸນໃນການສະໜອງໄຟຟ້າຕາມຄວາມຕ້ອງການພື້ນຖານ (Base Load) ເຮັດໃຫ້ລະບົບການສະໜອງໄຟຟ້າມີຄວາມສະເຖຍລະພາບ ຍ້ອນພະລັງງານໄຟຟ້າຄວາມຮ້ອນທີ່ນຳໃຊ້ຖ່ານຫີນເປັນເຊື້ອໄຟ ເຮັດໃຫ້ສາມາດຜະລິດໄດ້ຕະຫຼອດປີ .

ການພັດທະນາໂຮງໄຟຟ້າຄວາມຮ້ອນຖ່ານຫີນ ໃນທຸກໆແຫ່ງພາຍໃນປະເທດ ຕ້ອງມີການສຶກສາບົດວິພາກ ທາງດ້ານປະລິມານ ແລະ ຄຸນນະພາບ, ຊັ້ງຊາ ແລະ ເລືອກເຟັ້ນການນຳໃຊ້ຖ່ານຫີນໃຫ້ເກີດຜົນປະໂຫຍດສູງສຸດ ນຳໃຊ້ເຂົ້າໃນວຽກງານອື່ນທີ່ເໝາະສົມ, ໂດຍກຳນົດຕາມຄ່າຄວາມຮ້ອນ ແລະ ປະເພດຂອງຖ່ານຫີນ, ຖ່ານຫີນທີ່ນຳໃຊ້ເຂົ້າໃນການຜະລິດໄຟຟ້າ ຕ້ອງມີຄ່າຄວາມຮ້ອນເທົ່າກັບ ຫຼື ຕ່ຳກວ່າ 5.000 kcal/kg ແລະ ສ້າງໂຮງງານຜະລິດໄຟຟ້າຕິດກັບບໍ່ຖ່ານຫີນ (Mine Mouth) ເພື່ອຮັບປະກັນດ້ານຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນການເຄື່ອນຍ້າຍຖ່ານຫີນ, ຮັບປະກັນໃຫ້ມີການຄວບຄຸມມົນລະພິດຢ່າງເຂັ້ມງວດ ໂດຍຕ້ອງປະຕິບັດຕາມມາດຕະຖານການຄວບຄຸມມົນລະພິດແຫ່ງຊາດ, ຮັບປະກັນລາຄາໄຟຟ້າທີ່ຜະລິດຈາກໂຮງໄຟຟ້າຄວາມຮ້ອນ ຈະຕ້ອງບໍ່ໃຫ້ສູງກວ່າ ລາຄາໄຟຟ້າທີ່ຜະລິດຈາກໂຮງໄຟຟ້ານ້ຳຕົກ.

ການນຳເຂົ້າຖ່ານຫີນ ເພື່ອຮັບໃຊ້ໃນການຜະລິດໄຟຟ້າ ຕ້ອງເປັນຖ່ານຫີນທີ່ມີຄຸນນະພາບສູງ (ຄ່າຄວາມຮ້ອນສູງກວ່າ 5000 kcal/kg ຂຶ້ນໄປ), ຕ້ອງສະແດງໃຫ້ຜົນປະໂຫຍດສູງກວ່າ ການພັດທະນາໄຟຟ້ານ້ຳຕົກ ເພື່ອການສົ່ງອອກ ແລະ ຕ້ອງມີຄ່າກຳມະຖັນໄດ້ຕາມມາດຕະຖານຂອງສິ່ງແວດລ້ອມແຫ່ງຊາດ.

ການພັດທະນາໄຟຟ້າຄວາມຮ້ອນຕ້ອງສາມາດປະກອບສ່ວນ ເຂົ້າໃນແຜນການສະໜອງພະລັງງານໄຟຟ້າພາຍໃນ ແລະ ສົ່ງອອກ ພ້ອມນີ້ເພື່ອເປັນການເພີ່ມຄວາມສະຖຽນລະພາບໃນການສະໜອງໄຟຟ້າ .

ຄ່າປະລິມານຂອງທາດປົນເປື້ອນໃນອາກາດ ທີ່ອະນຸຍາດປ່ອຍອອກຕ້ອງປະຕິບັດຕາມ ມາດຕະຖານດ້ານສິ່ງແວດລ້ອມແຫ່ງຊາດ. ບັນດາເຕັກໂນໂລຊີ ໃນການພັດທະນາໂຮງໄຟຟ້າຄວາມຮ້ອນຖ່ານຫີນ ຕ້ອງນຳໃຊ້ຂະບວນການທີ່ສະອາດ (Clean Coal Technology) ເລີ່ມຕົ້ນແຕ່ຂະບວນການ ກ່ອນການເຜົາໄໝ້ (Pre-Combustion), ໄລຍະເຜົາໄໝ້ (Combustion) ແລະ ຫຼັງການເຜົາໄໝ້ (Post-Combusiton).

2.4.3 ການຜະລິດໄຟຟ້າຈາກພະລັງງານທົດແທນ

ການພັດທະນາພະລັງງານທົດແທນເພື່ອຜະລິດໄຟຟ້າ ຕ້ອງຫຼີກລ້ຽງຈາກຂົງເຂດທີ່ນອນໃນ ແຜນພັດທະນາດ້ານກະສິກຳ ແລະ ປ່າໄມ້, ເຂດປ່າສະຫງວນ ແລະ ເຂດຍຸດທະສາດການທະຫານ ເປັນຕົ້ນແມ່ນໄຟຟ້າແສງຕາເວັນ (Solar Farm) ທີ່ຕ້ອງການພື້ນທີ່ຫຼາຍ ແລະ ສົ່ງເສີມບັນດາຟາມລ້ຽງສັດຫັນເອົາມູນສັດເພື່ອຜະລິດໄບໂອແກ໊ດ (Bio gas) ເພື່ອກ້າວໄປສູ່ການຜະລິດເປັນໄຟຟ້າຮັບໃຊ້ໃນຟາມ ແລະ ຂາຍເຂົ້າສູ່ລະບົບ ທັງເປັນການຫຼຸດຜ່ອນກິ່ນ.

ການຜະລິດໄຟຟ້າຈາກພະລັງງານທົດແທນ ເປັນອີກແຫຼ່ງທາງເລືອກໜຶ່ງ ໃນການສະໜອງໄຟຟ້າເຂົ້າສູ່ລະບົບ ເພື່ອຊ່ວຍແຫຼ່ງຜະລິດໄຟຟ້າປະເພດອື່ນໆ, ເພື່ອເພີ່ມປະສິດທິພາບການສະໜອງພະລັງງານໃຫ້ມີຄວາມໝັ້ນຄົງ, ເພື່ອຮັບໃຊ້ໃຫ້ແກ່ຜູ້ພັດທະນາເອງ ແລະ ສົ່ງຂາຍເຂົ້າສູ່ລະບົບ ແລະ ຍັງຊ່ວຍຫຼຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ໂດຍສະເພາະມົນລະພິດທາງອາກາດ (CO2 Emission) ທີ່ມາຈາກການນຳໃຊ້ພະລັງງານຖ່ານຫີນ ແລະ ນ້ຳມັນເຊື້ອໄຟ.

ການພັດທະນາພະລັງງານທົດແທນ ບໍ່ວ່າຈະຮັບໃຊ້ໃຫ້ແກ່ຜູ້ພັດທະນາເອງ ຫຼື ສົ່ງຂາຍເຂົ້າລະບົບໄຟຟ້າ ຕ້ອງມີຂໍ້ມູນທີ່ຫຼາກຫຼາຍ ເພື່ອເລືອກເຟັ້ນເຕັກໂນໂລຊີ, ໃຫ້ໄດ້ລາຄາທີ່ສົມເຫດສົມຜົນ ແລະ ສະໜອງພະລັງງານໄຟຟ້າຢ່າງສະໝ່ຳສະເໝີ ພ້ອມທັງສອດຄ່ອງກັບຄວາມສາມາດ ໃນການລົງທຶນ ແຕ່ລະໄລຍະ.

ການພັດທະນາພະລັງງານທົດແທນ ທີ່ມາຈາກພະລັງງານໄຟຟ້າແສງຕາເວັນ (Solar Farm) ທີ່ມີຄວາມຕ້ອງການພື້ນທີ່ຫຼາຍ ແມ່ນບໍ່ອະນຸຍາດໃຫ້ດຳເນີນການພັດທະນາ ໃສ່ເຂດດິນກະສິກຳ, ປ່າໄມ້, ກົນປຸກສ້າງ. ການພັດທະນາພະລັງງານທົດແທນ ທີ່ມາຈາກເສດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອກະສິກຳ ແມ່ນການຫັນປ່ຽນສິ່ງເສດເຫຼືອຈາກສາທາລະນະ ມາເປັນພະລັງງານໄຟຟ້າ, ເຊິ່ງການພັດທະນາພະລັງງານທົດແທນ ທີ່ມາຈາກລົມ, ແສງຕາເວັນ ແລະ ເສດຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອກະສິກຳຕ່າງໆ ຕ້ອງສຶກສາທ່າແຮງຢ່າງລະອຽດ ໃນແຕ່ລະຂົງເຂດຂອງປະເທດ ຕາມຄວາມອາດສາມາດຕົວຈິງ. ເພື່ອເພີ່ມປະສິດທິພາບຂອງການສະໜອງພະລັງງານໄຟຟ້າເຂົ້າສູ່ລະບົບ ແລະ ຮັບປະກັນຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ສິ່ງແວດລ້ອມ-ສັງຄົມ.

ເພື່ອສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດ ນະໂຍບາຍໃຫ້ມີຜົນສຳເລັດ ຈຳເປັນຈະຕ້ອງມີນະໂຍບາຍໃນການສ້າງກົນໄກ ໃນການພັດທະນາຢ່າງເໝາະສົມ.

2.4.4 ການປະສົມປະສານແຫຼ່ງຜະລິດພະລັງງານໄຟຟ້າ

ແຫຼ່ງຜະລິດພະລັງງານໄຟຟ້າ ຕ້ອງພັດທະນາມາຈາກຫຼາຍແຫຼ່ງແບບປະສົມປະສານ ເປັນຕົ້ນແມ່ນໄຟຟ້ານ້ຳຕົກ, ໄຟຟ້າຄວາມຮ້ອນຖ່ານຫີນ, ໄຟຟ້າຈາກແສງຕາເວັນ, ໄຟຟ້າຈາກລົມ ແລະ ອື່ນໆ ບົນພື້ນຖານຕົ້ນທຶນການຜະລິດຕ່ຳ, ໃຫ້ໄດ້ຕາມສັດສ່ວນ [1]75% ມາຈາກໄຟຟ້ານ້ຳຕົກ, [1]14% ມາຈາກໂຮງໄຟຟ້າຄວາມຮ້ອນຖ່ານຫີນ ແລະ [1]11% ມາຈາກແຫຼ່ງພະລັງງານທົດແທນ.

ການປະສົມປະສານແຫຼ່ງຜະລິດພະລັງງານໄຟຟ້າ ຂອງ ສປປລາວ ແມ່ນ ເພື່ອສ້າງຄວາມໝັ້ນຄົງໃນການສະໜອງພະລັງງານໄຟຟ້າໃຫ້ແກ່ລະບົບ ເຊິ່ງໄດ້ຈາກບັນດາທ່າແຮງຂອງແຫຼ່ງຜະລິດທີ່ແຕກຕ່າງກັນດັ່ງນີ້:

ໄຟຟ້ານ້ຳຕົກ ແມ່ນມີທ່າແຮງ ໃນການຜະລິດໄຟຟ້າໃນຊ່ວງລະດູຝົນ, ໄຟຟ້າຄວາມຮ້ອນຈາກຖ່ານຫີນສາມາດຜະລິດໄຟຟ້າໄດ້ຕະຫຼອດປີ, ໄຟຟ້າແສງຕາເວັນສາມາດຜະລິດໄຟຟ້າ ໃນຊ່ວງມີແສງຕາເວັນ ທີ່ສາມາດຜະລິດເປັນພະລັງງານໄດ້ ໂດຍທົ່ວໄປປະລິມານແສງຕາເວັນທີ່ໄດ້ຮັບຕໍ່ວັນ ຢູ່ໃນລະດັບ 3,5-5,5 kWh/m2/day ແລະ ພະລັງງານໄຟຟ້າຈາກລົມ ສາມາດຜະລິດໃນຊ່ວງທີ່ມີລົມ ໃນລະດັບຄວາມແຮງທີ່ຜະລິດໄຟຟ້າໄດ້.

ການປະສົມປະສານການຜະລິດ ແມ່ນເພື່ອສ້າງຄວາມກົມກຽວບັນດາແຫຼ່ງຜະລິດພະລັງງານໄຟຟ້າ ທີ່ຢູ່ພາຍໃນປະເທດໃຫ້ມີຈັງຫວະການຜະລິດ ຫຼື ສ້າງຄວາມສົມດຸນຂອງການສະໜອງໄຟຟ້າ ໃຫ້ມີຄວາມສະໝ່ຳສະເໝີ ເພື່ອສະໜອງພະລັງງານໄຟຟ້າໃຫ້ແກ່ຜູ້ຊົມໃຊ້ໄດ້ຕະຫຼອດປີ ໂດຍສະເພາະແມ່ນການສະໜອງໄຟຟ້າໃຫ້ໂຮງງານອຸດສາຫະກຳ ແມ່ນມີຄວາມຈຳເປັນຕ້ອງມີພະລັງງານໄຟຟ້າທີ່ມີຄຸນນະພາບ, ມີແຮງດັນທີ່ສະໝ່ຳສະເໝີ ແລະ ມີຄວາມໝັ້ນຄົງ ຈຶ່ງຮຽກຮ້ອງໃຫ້ມີແຜນການ ໃນການຄວບຄຸມການຜະລິດຢ່າງລະອຽດ, ມີການບໍລິຫານຈັດການນ້ຳ, ມີການປະສານງານ ລະຫວ່າງ ຜູ້ສັ່ງການກັບ ຜູ້ຜະລິດ ແລະ ຜູ້ຊົມໃຊ້, ການກຳນົດຊ່ວງການຜະລິດຂອງບັນດາແຫຼ່ງໃຫ້ຈະແຈ້ງ ແລະ ມີມາດຕະການໃນການຄຸ້ມຄອງໃຫ້ເຂັ້ມງວດ.

ແຜນການຂະຫຍາຍ ແລະ ກຳລັງສຳຮອງ (Reserve) ຂອງແຫຼ່ງຜະລິດ ຕ້ອງສອດຄ່ອງກັບຄວາມຕ້ອງການພະລັງງານໄຟຟ້າ ໃນແຕ່ລະໄລຍະ, ການວາງແຜນແຫຼ່ງຜະລິດໄຟຟ້າ ຕ້ອງມີການປະສົມປະສານຫຼາຍປະເພດ, ມີການແລກປ່ຽນຊື້-ຂາຍ ກັບບັນດາປະເທດໃກ້ຄຽງ ແລະ ປະຕິບັດຕາມຫຼັກການຄື:

- ❖ ໂຮງໄຟຟ້າຄວາມຮ້ອນ, ເຂື່ອນໄຟຟ້ານ້ຳຕົກ ຕ້ອງມີຄວາມອາດສາມາດໃນການຜະລິດ (Plant Factor) ຫຼາຍກວ່າ 70%, ເພື່ອຕອບສະໜອງຄວາມຕ້ອງການປົກກະຕິ (Base Load).
- ❖ ການຜະລິດໄຟຟ້າຈາກສິ່ງເສດເຫຼືອຈາກເສດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອກະສິກຳ ເພື່ອຕອບສະໜອງຄວາມຕ້ອງການປົກກະຕິ (Base Load).
- ❖ ການຜະລິດໄຟຟ້າຈາກແສງຕາເວັນ ແລະ ລົມ ແມ່ນເຊື່ອມເຂົ້າລະບົບໄຟຟ້າ ຕາມຄວາມອາດສາມາດຕົວຈິງ ຕ້ອງມີລະບົບຄວບຄຸມ ໂດຍບໍ່ໃຫ້ມີການກະທົບກັບການສະໜອງໄຟຟ້າ.
- ❖ ໂຄງການໄຟຟ້ານ້ຳຕົກແບບມີອ່າງເກັບນ້ຳຂະໜາດໃຫຍ່ ຕ້ອງມີແຜນການຜະລິດຢ່າງເປັນລະບົບ, ມີການຄຸ້ມຄອງວາງແຜນການບໍລິຫານນ້ຳ, ເພື່ອໃຫ້ສາມາດຜະລິດພະລັງງານໄຟຟ້າສົ່ງຈ່າຍເຂົ້າລະບົບ ໃນເວລາທີ່ເກີດຄວາມຕ້ອງການໄຟຟ້າສູງສຸດ (Peak Load).
- ❖ ການແລກປ່ຽນ ຊື້-ຂາຍໄຟຟ້າ ກັບບັນດາປະເທດໃກ້ຄຽງ ແມ່ນບົນພື້ນຖານການຮ່ວມມືດ້ານພະລັງງານ ແລະ ເພື່ອການເພິ່ງພາເຊິ່ງກັນ ແລະ ກັນ.

[[1] ຕິວເລກດັດແກ້ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 22/ສພຊ, ລົງວັນທີ 16/11/2021]

2.5 ພັດທະນາລະບົບສາຍສົ່ງໄຟຟ້າ

ການວາງແຜນພັດທະນາລະບົບສາຍສົ່ງ ແລະ ສະຖານີ ເພື່ອສະໜອງການຊົມໃຊ້ໃຫ້ທົ່ວເຖິງໃນຂອບເຂດທົ່ວປະເທດ ແລະ ເຊື່ອມຕໍ່ລະບົບສົ່ງອອກກັບລະບົບຮັບໃຊ້ພາຍໃນເປັນອັນດຽວກັນ ເພື່ອກ້າວເປັນຈຸດໃຈກາງໃນການເຊື່ອມໂຍງອະນຸພາກພື້ນ. ຜ່ານມາການລົງທຶນ ແມ່ນເນັ້ນໃສ່ພາກສາຍສົ່ງແຮງດັນສູງ ດ້ວຍຫຼາຍຮູບແບບ ສັນຍາຮັບເໝົາກໍ່ສ້າງ

“Engineering Procurement Construction” (EPC). ຊຶ່ງມາຮອດປະຈຸບັນນີ້ ລັດຖະບານ ແມ່ນບໍ່ເຫັນດີໃຫ້ພັດທະນາສາຍສົ່ງໃນຮູບແບບ EPC ແລ້ວ, ນະໂຍບາຍສົ່ງເສີມການລົງທຶນໃສ່ການພັດທະນາລະບົບສາຍສົ່ງ ດ້ວຍຮູບແບບ “ Build- Operate -Transfer” (BOT), JV, PPP ແລະ ອື່ນໆ. ເພື່ອຫຼຸດຜ່ອນພາລະຂອງພາກລັດ ແລະ ຈະມີກົນໄກ ໃນການສ້າງເງື່ອນໄຂ ສະໜັບສະໜູນໃຫ້ແກ່ພາກເອກະຊົນ ເຂົ້າມາລົງທຶນ ໃນການພັດທະນາຕາມວິທີ ທີ່ໄດ້ກ່າວມານັ້ນ ເພື່ອເລັ່ງໃສ່ ການພັດທະນາລະບົບສາຍສົ່ງ ໃຫ້ເຊື່ອມຕໍ່ເຂົ້າກັນໄດ້ຢ່າງເປັນລະບົບ ທັງພາຍໃນປະເທດ ແລະ ພາກພື້ນ ໃຫ້ເປັນອັນດຽວກັນ.

ສຸມໃສ່ພັດທະນາການເຊື່ອມຕໍ່ ໃຫ້ຮອງຮັບ ການຊື້-ຂາຍໄຟຟ້າ ຈາກລະບົບສູ່ລະບົບ ໃນອະນຸພາກພື້ນແມ່ນ້ຳຂອງ, ອາຊຽນ. ໂດຍໃຫ້ມີຄວາມສອດຄ່ອງ ກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ເພື່ອໃຫ້ຂະແໜງພະລັງງານໄຟ ຟ້າ ຊຸກຍູ້ການຫັນເປັນອຸດສາຫະກຳທັນສະໄໝ ແລະ ເພື່ອສົ່ງອອກພະລັງງານໄຟຟ້າໃຫ້ກັບປະເທດເພື່ອນບ້ານ ແລະ ພາກພື້ນ ແນໃສ່ສ້າງລາຍຮັບແບບຍືນຍົງໃຫ້ແກ່ລັດຖະບານ.

ລະບົບສາຍສົ່ງເປັນສ່ວນສຳຄັນອີກດ້ານໜຶ່ງ ໃນການພັດທະນາພະລັງງານໄຟຟ້າທີ່ໄດ້ລົງທຶນ, ສະນັ້ນ ການພັດທະນາລະບົບສາຍສົ່ງ ແມ່ນຮັບປະກັນການເຊື່ອມຕໍ່ ສ່ວນທີ່ມີແລ້ວ ແລະ ສ່ວນທີ່ສືບຕໍ່ພັດທະນາ ໃຫ້ເຊື່ອມໂຍງກັນຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ ແລະ ເຊື່ອມຕໍ່ລະບົບສົ່ງອອກ ກັບລະບົບຮັບໃຊ້ພາຍໃນເປັນອັນດຽວກັນ ແລະ ຮັບປະກັນໃນການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດຕາມແຜນໄລຍະກາງ ແລະ ໄລຍະຍາວ. ການວາງແຜນພັດທະນາສາຍສົ່ງແບບລະອຽດ ແລະ ມີການທົບທວນຄືນໂຄງການສາຍສົ່ງ ທີ່ໄດ້ຮັບການອະນຸມັດຜ່ານມາເຖິງຄວາມຈຳເປັນ ແລະ ແຜນທີ່ຈະພັດທະນາແຕ່ລະໄລຍະ ເພື່ອແນ່ໃສການລົງທຶນທີ່ມີປະສິດທິພາບ ແລະ ປະສິດທິຜົນ ເຊິ່ງຈະຕ້ອງໄດ້ມີການຈັດລຽງບູລິມະສິດໂຄງການໃດທີ່ມີປະສິດທິຜົນສູງ, ກາງ ແລະ ຕ່ຳ ແລະ ການສ້າງສາຍສົ່ງຈາກແຫຼ່ງຜະລິດໄຟຟ້າ ຫາ ສະຖານີຮັບຊື້ໄຟຟ້າ ຂອງ ຟຟລ ແມ່ນມອບໃຫ້ຜູ້ພັດທະນາໂຄງການເປັນຜູ້ຮັບຜິດຊອບ ໂດຍລວມມູນຄ່າການກໍ່ສ້າງສາຍສົ່ງ ເຂົ້າກັບມູນຄ່າການກໍ່ສ້າງແຫຼ່ງຜະລິດໄຟຟ້າເລີຍ ແລະ ໃຫ້ ຟຟລ ຫັນມາສ້າງຄວາມເຂັ້ມແຂງໃຫ້ກັບລະບົບສາຍສົ່ງ ແລະ ສະຖານີ ເພື່ອຮອງຮັບການສະໜອງໃຫ້ການຊົມໃຊ້ພາຍໃນໃຫ້ພຽງພໍ ແລະ ມີຄວາມໝັ້ນຄົງເປັນຫຼັກ.

ການພັດທະນາລະບົບສາຍສົ່ງຂອງ ສປປລາວ ຕ້ອງນອນຢູ່ໃນ ແຜນພັດທະນາພະລັງງານໄຟຟ້າ ຂອງ ສປປລາວ ປີ 2021-2030, ຕ້ອງຮັບປະກັນລະບົບສາຍສົ່ງໃຫ້ເຊື່ອມຕໍ່ກັນຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ. ໂດຍສະເພາະການສ້າງລະບົບສາຍສົ່ງແຫ່ງຊາດ 500 kV ແຕ່ເໜືອເຖິງໃຕ້ ຊຶ່ງຈະໄດ້ມີການຄົ້ນຄ້ວາສຶກສາເບິ່ງແຫຼ່ງຜະລິດ ແລະ ລະບົບການໄຫຼຂອງໄຟຟ້າໄປຍັງຜູ້ຊົມໃຊ້ ເພື່ອຂະຫຍາຍລະບົບສາຍສົ່ງ 230 kV ເຂົ້າເຖິງແຂວງ ແລະ ຂົງເຂດອຸດສາຫະກຳ, ລະບົບສາຍສົ່ງ 115 kV ເຂົ້າເຖິງເມືອງ ແລະ ສາມາດເຊື່ອມຕໍ່ກັບປະເທດເພື່ອນບ້ານ, ສ້າງໃຫ້ ສປປລາວ ກາຍເປັນສູນກາງ ແລະ ທາງຜ່ານຂອງການແລກປ່ຽນພະລັງງານໄຟຟ້າໃນອະນຸພາກພື້ນ GMS ແລະ ASEAN, ການພັດທະນາສາຍສົ່ງຕ້ອງເປັນການຊຸກຍູ້ນະໂຍບາຍ ການຊື້-ຂາຍໄຟຟ້າ ໃນຮູບແບບລະບົບສູ່ລະບົບ Grid to Grid ເພື່ອສະໜອງໃຫ້ແກ່ການຊົມໃຊ້ພາຍໃນ ແລະ ສົ່ງອອກຂາຍຕ່າງປະເທດ. ການພັດທະນາລະບົບສາຍສົ່ງ ແລະ ສະຖານີ ຕ້ອງຮັບປະກັນການເພີ່ມຂຶ້ນຂອງຄວາມຕ້ອງການໄຟຟ້າ, ຮັບປະກັນທາງດ້ານເຕັກນິກກໍ່ສ້າງ, ຮັບປະກັນທາງດ້ານຄຸນນະພາບ, ມີຄວາມໝັ້ນຄົງ, ຄວາມປອດໄພ ແລະ ຍືນຍົງທາງດ້ານໂຄງສ້າງ.

ລັດຖະບານເປັນຜູ້ຄຸ້ມຄອງລະບົບສາຍສົ່ງແຫ່ງຊາດ ແລະ ສະຖານີ ໂດຍມອບໃຫ້ ຟຟລ ຫຼື ສ້າງຕັ້ງເປັນລັດວິສາຫະກິດສາຍສົ່ງແຫ່ງຊາດ (EDLT) ເປັນຜູ້ຮັບຜິດຊອບໃນການບໍລິຫານຈັດການ, ຄຸ້ມຄອງ ແລະ ບຳລຸງຮັກສາ, ໃນການເກັບ

ຄ່າບໍລິການສົ່ງຜ່ານພະລັງງານໄຟຟ້າ (Wheeling Charge) ແລະ ຄ່າພະລັງງານຕົກເຮ່ຍ (Loss) ຈາກປະ ເທດລາວ ໄປ ຍັງປະເທດທີ 3, ເຊິ່ງການເກັບຄ່າບໍລິການ ຕ້ອງມີລະບຽບການສະເພາະ ໃນການເກັບຄ່າຜ່ານລະບົບຕ່າງຫາກ.

ສະຖານີໄຟຟ້າ ແລະ ສູນບັນຊາລະບົບໄຟຟ້າແຫ່ງຊາດ (NCC), RCC, ສະຖານີໄຟຟ້າ ແມ່ນເປັນບ່ອນ ຍົກ ຫຼື ຫຼຸດແຮງດັນໃນການສົ່ງພະລັງງານ ແລະ ເປັນບ່ອນແຈກຢາຍພະລັງງານ ໃນຫຼາຍລະດັບແຮງດັນ ເພື່ອສະໜອງໃຫ້ການນຳ ໃຊ້ພາຍໃນ ຫຼື ສົ່ງອອກ. ສູນບັນຊາລະບົບໄຟຟ້າແຫ່ງຊາດ ແມ່ນມີໜ້າທີ່ ຄາດຄະເນຄວາມຕ້ອງການນຳໃຊ້ພະລັງງານ ໃນ ໄລຍະສັ້ນ ແລະ ໄລຍະກາງ ເພື່ອວາງແຜນການຜະລິດໃຫ້ດຸ່ນດ່ຽງ, ວາງແຜນຈັດຊື້ພະລັງງານ, ສົ່ງອອກ ແລະ ນຳເຂົ້າ, ຕິດຕາມລະ ບົບໄຟຟ້າທົ່ວປະເທດ ແລະ ແກ້ໄຂບັນຫາຂັດຂ້ອງຂອງລະບົບ, ການຄວບຄຸມການສະໜອງພະລັງງານ ຈາກ ແຫຼ່ງພະລັງງານ ຫາ ສະຖານີ ແລະ ແຈກຢາຍໄຟຟ້າ ໃຫ້ໂຫຼດນຳໃຊ້ ເພື່ອໃຫ້ລະບົບໄຟຟ້າ ມີຄວາມສະເຖຍລະພາບ ແລະ ໝັ້ນຄົງ. ເຊື່ອມຕໍ່ລະບົບຕາຂ່າຍໄຟຟ້າພາຍໃນປະເທດໃຫ້ເປັນລະບົບອັນດຽວ ສາມາດດຸ່ນດ່ຽງກະແສໄຟຟ້າຈາກສູນບັນຊາ ໄຟຟ້າລວມ ເພື່ອສະໜອງຄວາມຕ້ອງການຂອງຜູ້ນຳໃຊ້ ຈາກແຂວງລົງສູ່ເມືອງ ແລະ ເຂດຫ່າງໄກ ໂດຍໃຫ້ມີການດຸ່ນດ່ຽງ ລະຫວ່າງ ລະດູແລ້ງ ແລະ ຝົນ ໃຫ້ມີຄວາມພຽງພໍ. ໃນນັ້ນ ທຸກແຂວງຕ້ອງມີສະຖານີແຈກຈ່າຍໄຟດ້ວຍລະບົບ 115 kV.

2.6 ພັດທະນາລະບົບຈຳໜ່າຍ

ການພັດທະນາລະບົບຈຳໜ່າຍໄຟຟ້າ ໃຫ້ກວມທົ່ວທຸກເຂດແຂວງ ຮັບປະກັນການຂະຫຍາຍໄຟຟ້າສູ່ຊຸມຊົນ ໃຫ້ ໄຟຟ້າກາຍເປັນພື້ນຖານໂຄງລ່າງ ໃນການສ້າງເສດຖະກິດຢູ່ຊຸມຊົນຍັບເຂົ້າໃກ້ຕົວເມືອງ. ສົ່ງເສີມການເຊື່ອມຕໍ່ລະບົບຈຳ ໜ່າຍໄຟຟ້າໃຫ້ທົ່ວເຖິງ ແລະ ຕ້ອງຮັບປະກັນຄຸນນະພາບຂອງການກໍ່ສ້າງ, ມີຄວາມປອດໄພ, ຖືກຕ້ອງຕາມມາດຕະຖານ ເຕັກນິກທີ່ກຳນົດໄວ້, ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

ການພັດທະນາລະບົບຈຳໜ່າຍໄຟຟ້າ ຕ້ອງນອນໃນແຜນ ພັດທະນາໄຟຟ້າພະລັງງານ, ສົ່ງເສີມການເຊື່ອມໂຍງ ລະບົບຕາຂ່າຍໄຟຟ້າ ໃນຂອບເຂດທົ່ວປະເທດ, ການພັດທະນາລະບົບຈຳໜ່າຍ ຕ້ອງຮັບປະກັນການສະໜອງພະລັງງານ ໄຟຟ້າໃຫ້ແກ່ການຊົມໃຊ້ໃຫ້ພຽງພໍ, ເປັນປົກກະຕິ, ທົ່ວເຖິງ ແລະ ມີຄວາມປອດໄພ. ເພື່ອຮັບໃຊ້ແກ່ການພັດທະນາ ເສດຖະກິດ-ສັງ ຄົມ, ຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄົວເຮືອນໃນຂອບເຂດທົ່ວປະເທດ.

ການພັດທະນາລະບົບຈຳໜ່າຍ ແມ່ນເພື່ອເລັ່ງໃສ່ແກ້ໄຂໃນເຂດທີ່ບໍ່ທັນມີໄຟຟ້ານຳໃຊ້ ໂດຍສະເພາະແມ່ນເຂດຫ່າງ ໄກສອກຫຼີກ ເພື່ອສະໜອງໃຫ້ແກ່ປະຊາຊົນໄດ້ມີໄຟຟ້າຊົມໃຊ້ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ລັດຖະ ບານ ໄດ້ວາງຄາດໝາຍສູ້ຊົນໃຫ້ບັນລຸ 95% ໃນປີ 2020, 98%ໃນປີ 2025 ແລະ 100% ໃນປີ 2030.

ລະບົບຈຳໜ່າຍ ສຳລັບຕົວເມືອງເຂດທີ່ມີຊຸມຊົນແອອັດ, ອາຄານໜາແໜ້ນ ຈະຕ້ອງໄດ້ພິຈາລະນາ ພັດທະນາລະ ບົບຈຳໜ່າຍແບບຝັງດິນ. ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານໂຄງສ້າງ, ເພື່ອຮັບປະກັນຄວາມປອດໄພ, ຄວາມເປັນລະ ບຽບຮຽບຮ້ອຍ ແລະ ຈີບງາມ. ການກຳນົດແລວສາຍຕ້ອງມີຄວາມເໝາະສົມ, ປະຢັດ, ຖືກຕ້ອງຕາມມາດຕະຖານເຕັກນິກ ຂອງການກໍ່ສ້າງ ແລະ ຄຸນນະພາບ ຖືກຕ້ອງຕາມມາດຕະຖານທາງດ້ານເຕັກນິກທີ່ກຳນົດໄວ້.

ລະບົບຈຳໜ່າຍ ສຳລັບເຂດນອກເມືອງ ແລະ ຊຸມຊົນຈະຕ້ອງໄດ້ພິຈາລະນາ ຮັບປະກັນຄວາມພຽງພໍ ຂອງການ ສະໜອງໄຟຟ້າ, ຄວາມໝັ້ນຄົງທາງດ້ານໂຄງສ້າງ, ທາງດ້ານທີ່ຕັ້ງຂອງຖານໃຫ້ມີຄວາມປອດໄພ, ການກຳນົດແລວສາຍ ຕ້ອງມີຄວາມເໝາະສົມ, ປະຢັດ, ຖືກຕ້ອງຕາມມາດຕະຖານເຕັກນິກຂອງການກໍ່ສ້າງ ແລະ ດ້ານຄຸນນະພາບ.

2.7 ຄວາມໝັ້ນຄົງດ້ານພະລັງງານ

ການສຳຮອງນ້ຳມັນເຊື້ອໄຟຕ້ອງໃຫ້ສາມາດສະໜອງກຸ້ມ 60 ວັນ ໃນປີ 2025 ແລະ 90 ວັນໃນປີ 2030 ເພື່ອຮັບ ປະກັນໃນກໍລະນີສຸກເສີນທີ່ເກີດຂຶ້ນຈາກໄພທຳມະຊາດ ແລະ ກໍລະນີອື່ນໆ, ການສຳຮອງປະລິມານຜະລິດໄຟຟ້າຕ້ອງໃຫ້ ບັນລຸໄດ້ໃນຂອບເຂດ 15% ຂອງຄວາມຕ້ອງການສູງສຸດ ຕາມແຜນຄວາມຕ້ອງການພະລັງງານໄຟຟ້າແຕ່ລະໄລຍະ.

2.7.1 ການສຳຮອງນ້ຳມັນເຊື້ອໄຟ

ການສ້າງຄັງແຮສຳຮອງນ້ຳມັນເຊື້ອໄຟ ຕ້ອງໃຫ້ສອດຄ່ອງກັບແຜນຄວາມຕ້ອງການນ້ຳມັນ ໃນແຕ່ລະໄລຍະ ແລະ ຮັບປະກັນໃຫ້ມີນ້ຳມັນເຊື້ອໄຟນຳໃຊ້ໃນກໍລະນີສຸກເສີນ ຫຼື ເກີດໄພທຳມະຊາດ.

ນ້ຳມັນເຊື້ອໄຟເປັນພະລັງງານອີກປະເພດໜຶ່ງ ທີ່ມີຄວາມຈຳເປັນ ແລະ ຂາດບໍ່ໄດ້ ທີ່ນຳໃຊ້ເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງປະເທດ ກໍ່ຄືການນຳໃຊ້ເຂົ້າໃນວຽກງານຂົນສົ່ງເປັນຫຼັກ, ການສ້າງຄວາມໝັ້ນຄົງນັ້ນ ໝາຍເຖິງ ການສ້າງອ່າງເກັບນ້ຳມັນເຊື້ອໄຟ ທີ່ມີການນຳເຂົ້າ ແລະ ຈຳໜ່າຍ ສ້າງສົມດຸນຂອງການເກັບກັກນ້ຳມັນໃນອ່າງ ໃຫ້ສາມາດ ສະໜອງໃຫ້ກຸ້ມ 60 ວັນ ໃນແຜນການໄລຍະ 2015-2025 ແລະ 90 ວັນ ໃນແຜນການ 2025-2030 ໃນກໍລະນີສຸກ ເສີນ.

ມາຮອດປີ 2015 ສປປລາວ ຍັງບໍ່ທັນມີຄັງແຮສຳຮອງນ້ຳມັນເຊື້ອໄຟຂອງລັດຖະບານ, ໄລຍະຜ່ານມາ ຍັງແມ່ນ ການວາງເງື່ອນໄຂໃຫ້ຫົວໜ່ວຍທຸລະກິດ ທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟ ກຸ້ມຕົນເອງໃນການສ້າງສາງເກັບນ້ຳມັນ ເພື່ອ ແຮສຳຮອງໃຫ້ໄດ້ບໍ່ໃຫ້ຕ່ຳກວ່າ 10 ວັນ ແລະ ສັ່ງຈຳໜ່າຍໃຫ້ຕົວແທນປ໊ຳຈຳໜ່າຍຂອງຕົນເອງ.

ການສ້າງຄັງແຮສຳຮອງນ້ຳມັນ ໃຫ້ສາມາດສະໜອງກຸ້ມ 60 ວັນ ແລະ ການລົງທຶນເຂົ້າໃນການສ້າງລະບົບຂົນສົ່ງ ນ້ຳມັນທາງທໍ່ ໃນບາງເຂດທີ່ມີລັກສະນະ ພື້ນທີ່ທາງຍຸດທະສາດ ແມ່ນເພື່ອຫຼຸດຜ່ອນຕົ້ນທຶນການຂົນສົ່ງ ແລະ ຫຼຸດຜ່ອນ ຄວາມສ່ຽງດ້ານຄວາມປອດໄພ, ນອກຈາກນັ້ນຍັງຊຸກຍູ້-ສົ່ງເສີມ ການພັດທະນານ້ຳມັນຊີວະພາບຈາກພືດກະສິກຳໃຫ້ໄດ້ 10% ໃນປີ 2025.

2.7.2 ປະລິມານກຳລັງຜະລິດໄຟຟ້າສຳຮອງ

ປະລິມານກຳລັງຜະລິດໄຟຟ້າສຳຮອງ ຕ້ອງບັນລຸໃຫ້ໄດ້ 15% ຂອງປະລິມານຄວາມຕ້ອງການທັງໝົດ ເພື່ອສ້າງ ຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ແລະ ຮັບປະກັນໃຫ້ແກ່ການສະໜອງພະລັງງານໄຟຟ້າໄດ້ຢ່າງສະໝ່ຳສະເໝີ.

ການສຳຮອງພະລັງງານໄຟຟ້າ ແມ່ນເພື່ອການສະໜອງພະລັງງານໄຟຟ້າໃນລະບົບໃຫ້ມີຄວາມໝັ້ນຄົງ ແລະ ພຽງພໍ, ສ້າງຄວາມສະຖຽນລະພາບໃຫ້ກັບລະບົບ ໂດຍສະເພາະໃນກໍລະນີເກີດມີເຫດການສຸກເສີນເຊັ່ນ: ການນຳໃຊ້ໄຟຟ້າ ໃນຊ່ວງ ຄວາມຕ້ອງການສູງແບບຜິດປົກກະຕິ.

ກຳລັງການຜະລິດໄຟຟ້າສຳຮອງໄລຍະຍາວ ຕ້ອງມີການບໍລິຫານຈັດການບັນດາແຫຼ່ງໄຟຟ້ານ້ຳຕົກ ໂດຍສະເພາະ ແມ່ນເຂື່ອນທີ່ເປັນອ່າງເກັບນ້ຳ (Reservoir) ຈະຕ້ອງເກັບກັກນ້ຳໄວ້ ເພື່ອນຳໃຊ້ນ້ຳເຂົ້າໃນການຜະລິດພະລັງງານໄຟຟ້າໃນ ຍາມຈຳເປັນ, ຊ່ວງລະດູແລ້ງ ແລະ ຊ່ວງທີ່ມີຄວາມຕ້ອງການສູງແບບຜິດປົກກະຕິ.

ການວາງແຜນລົງທຶນພັດທະນາແຫຼ່ງຜະລິດ ຕ້ອງພິຈາລະນາເຖິງກຳລັງສຳຮອງ ໃຫ້ຢູ່ໃນຂອບເຂດ 15% ຂອງ ຄວາມຕ້ອງການສູງສຸດຕາມແຜນຄວາມຕ້ອງການພະລັງງານໄຟຟ້າ.

2.8 ການພັດທະນາຕະຫຼາດພະລັງງານ

ພັດທະນາຕະຫຼາດ ຊື້-ຂາຍໄຟຟ້າ ໃຫ້ກ້າວໄປສູ່ຮູບແບບ ການແຂ່ງຂັນ ປະມູນຊື້-ປະມູນຂາຍ ຕາມທ່າອ່ຽງຂອງສາກົນ ແລະ ຮັກສາຮູບແບບຜູ້ຮັບຊື້ຜູ້ດຽວ (Single buyer) ເພື່ອຮັກສາຜົນປະໂຫຍດຂອງພາກລັດ ແລະ ສ້າງໃຫ້ມີການແຂ່ງຂັນຕາມກົນໄກຕະຫຼາດ.

2.8.1 ຕະຫຼາດພາຍໃນ

ລັດຖະບານເປັນຜູ້ບໍລິຫານຄຸ້ມຄອງ ແລະ ອະນຸມັດ ລາຄາຊື້-ຂາຍໄຟຟ້າ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ເປັນທຳ ເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຂອງປະເທດໃນແຕ່ລະໄລຍະ, ມີນະໂຍບາຍ ຊຸກຍູ້ສົ່ງເສີມຜູ້ຜະລິດ ແລະ ຜູ້ນຳໃຊ້ໃຫ້ເໝາະສົມ ເພື່ອດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໂດຍສະ ເພາະການລົງທຶນໃນພາກ ການຜະລິດພະລັງງານທົດແທນ, ພາກຂົນສົ່ງ (ລົດໄຟຟ້າ), ພາກກະສິກຳ ແລະ ພາກອຸດສາຫະກຳທັນສະໄໝ.

ການຊື້ພະລັງງານໄຟຟ້າເພື່ອຮັບໃຊ້ພາຍໃນ ແມ່ນເພື່ອສົ່ງເສີມການພັດທະນາຂະແໜງການຕ່າງໆ ໃຫ້ມີພະລັງງານໄຟ ຟ້າພຽງພໍ ເພື່ອສະໜອງໃຫ້ແກ່ຜູ້ຊົມໃຊ້ ໂດຍສະເພາະແມ່ນສະໜອງໄຟຟ້າ ໃຫ້ແກ່ໂຮງງານອຸດສະຫະກຳ ຜູ້ສະໜອງຕ້ອງຮັບປະກັນໃນການຜະລິດ ແລະ ສົ່ງພະລັງງານໄຟຟ້າໃຫ້ມີຄຸນນະພາບ.

ສົ່ງເສີມການແຂ່ງຂັນໃນການພັດທະນາແຫຼ່ງຜະລິດໄຟຟ້າ ເພື່ອເຮັດໃຫ້ຄວາມອາດສາມາດໃນການຜະລິດພະລັງງານໄຟຟ້າສູງຂຶ້ນ ແລະ ມີລາຄາທີ່ເໝາະສົມ. ຊຸກຍູ້ພາກເອກະຊົນ ເຂົ້າມາມີບົດບາດໃນການພັດທະນາແຫຼ່ງຜະລິດໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນການລົງທຶນຂອງພາກລັດ.

ການກຳນົດລາຄາຊື້ໄຟຟ້າ ຈາກແຫຼ່ງຜະລິດໄຟຟ້າ ໂດຍສະເພາະແມ່ນວິສະຫະກິດຂອງລັດ ທີ່ໄດ້ຮັບການມອບໝາຍຈາກລັດຖະບານ ຕ້ອງໄດ້ຄຳນຶງເຖິງຄຸນນະພາບໃນການສະໜອງໄຟຟ້າໃຫ້ໄດ້ລະດັບ ແລະ ໝັ້ນຄົງ, ລາຄາຊື້ພະລັງງານໄຟຟ້າຕ້ອງບໍ່ສູງກວ່າ ລາຄາຕົ້ນທຶນການຜະລິດໄຟຟ້າ ທີ່ລັດລົງທຶນເອງ ຫຼື ທຽບເທົ່າຈາກຕົ້ນທຶນຂອງການຜະລິດໄຟຟ້າ ທີ່ໄດ້ຈາກແຫຼ່ງພະລັງງານດຽວກັນຢູ່ປະເທດໃກ້ຄຽງ.

ການຄິດໄລ່ລາຄາໄຟຟ້າທີ່ຊື້ຈາກຜູ້ຜະລິດໄຟຟ້າ ແມ່ນໃຫ້ຄິດໄລ່ຢູ່ຈຸດຮັບສົ່ງໄຟຟ້າ ເຊິ່ງແມ່ນຈຸດເຊື່ອມຕໍ່ລະຫວ່າງລະບົບກັບສາຍສົ່ງສະເພາະຂອງໂຄງການຜະລິດໄຟຟ້າ, ການຄິດໄລ່ລາຄາຈຳໜ່າຍຢູ່ພາຍໃນ ຕ້ອງຮັບປະກັນຄວາມສອດຄ່ອງກັບ ສະພາບເສດຖະກິດ-ສັງຄົມຂອງປະເທດ, ຕົ້ນທຶນ, ຄຸນນະພາບໄຟຟ້າ, ນະໂຍບາຍການສົ່ງເສີມການຜະລິດຂອງຂະແໜງການອື່ນໆ ຫຼື ເຂດຫ່າງໄກສອກຫຼີກທີ່ລັດກຳນົດ, ແທດເໝາະກັບເປົ້າໝາຍການຊົມໃຊ້, ຊ່ວງເວລາການຊົມໃຊ້ ແລະ ປະເພດການຊົມໃຊ້.

ລັດຖະບານ ມີນະໂຍບາຍສະໜັບສະໜູນ ກ່ຽວກັບລາຄາໄຟຟ້າ ສຳລັບເຂດຊົນນະບົດຫ່າງໄກສອກຫຼີກ ໃຫ້ກັບປະຊາຊົນ ແລະ ທຸລະກິດ. ໂດຍສະເພາະແມ່ນການຄ້ຳປະກັນສະບຽງອາຫານ, ການຂົນສົ່ງດ້ວຍລົດໄຟຟ້າ, ເຂດອຸດສະຫະກຳ, ໂຮງງານອຸດສະຫະກຳຂຸດຄົ້ນແຮ່ທາດ-ປຸງແຕ່ງແຮ່ທາດ.

2.8.2 ຕະຫຼາດພາກພື້ນ

ພັດທະນາຕະຫຼາດພະລັງງານເພື່ອການສົ່ງອອກ ສ້າງລາຍຮັບເຂົ້າປະເທດ ແລະ ເພີ້ມຄວາມຮ່ວມມືແລກປ່ຽນພະລັງງານໄຟຟ້າ ທັງເປັນການສ້າງບາດກ້າວເພື່ອຫັນໄປສູ່ການຊື້-ຂາຍ ຈາກລະບົບສູ່ລະບົບ.

ໂດຍປະຕິບັດຕາມກອບການຮ່ວມມື ທີ່ລັດຖະບານໄດ້ຕົກລົງກັບ ບັນດາປະເທດໃກ້ຄຽງກໍ່ຄືພາຍໃນ ປີ 2025 ຈະ ສົ່ງພະລັງງານໄຟຟ້າໃຫ້ກັບ ຣາຊະອານາຈັກ ໄທ ໃຫ້ບັນລຸຫຼາຍກວ່າ 9.000 MW, ສສ ຫວຽດນາມ 5.000 MW, ຣາຊະ ອານາຈັກ ກຳປູເຈຍ 3.000 MW, ສະຫະພາບ ມຽນມ້າ 500 MW ແລະ ປະເທດມາເລເຊຍ 300 MW.

ພັດທະນາບັນດາໂຄງການໄຟຟ້າເພື່ອການສົ່ງອອກ ຕ້ອງຈັດຕັ້ງປະຕິບັດຕາມ ແຜນພັດທະນາພະລັງງານໄຟຟ້າ ຂອງ ສປປລາວ ປີ 2021-2030, ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ແລະ ສະແດງໃຫ້ເຫັນເຖິງຜົນປະໂຫຍດທີ່ລັດຖະ ບານ ຈະໄດ້ຮັບຢ່າງຊັດເຈນ ແລະ ສົມເຫດສົມຜົນ ຈາກການນຳໃຊ້ຊັບພະຍາກອນທຳມະຊາດ. ເພື່ອເປັນການຊຸກຍູ້ການ ຂະຫຍາຍຕົວຂອງເສດຖະກິດສັງຄົມ, ຕ້ອງເອົາໃຈໃສ່ເປັນພິເສດຕໍ່ດ້ານເສດຖະກິດ ຂອງແຕ່ລະໂຄງການ ເພື່ອຮັບປະກັນ ປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ.

ການຊື້-ຂາຍໄຟຟ້າ ກັບປະເທດເພື່ອນບ້ານ ແລະ ຂ້າມຜ່ານໄປເຖິງປະເທດທີ່ສາມ ແມ່ນບົນພື້ນຖານການເຈລະຈາ, ຕົກລົງຮ່ວມກັນ ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ມີຄວາມສະດວກໃນການແລກປ່ຽນພະລັງງານ ແລະ ຍັງຊ່ວຍສ້າງ ຄວາມໝັ້ນຄົງໃຫ້ແກ່ຄວາມຕ້ອງການນຳໃຊ້ພາຍໃນໃຫ້ຫຼາຍຂຶ້ນ.

2.9 ນະໂຍບາຍລາຄາໄຟຟ້າ

ຫຼຸດຜ່ອນການເກື້ອກູນເທື່ອລະກ້າວ, ຫັນໄປສູ່ການຊຸກຍູ້ຂະແໜງການທີ່ເປັນບູລິມະສິດ ແລະ ໄລ່ລຽງເຕັມຮູບ ແບບຕາມກົນໄກຕະຫຼາດ. ການກຳນົດລາຄາໄຟຟ້າແມ່ນໃຫ້ຢູ່ໃນລະດັບທີ່ເໝາະສົມ ແລະ ເປັນທຳຕໍ່ຜູ້ນຳໃຊ້, ມີການກຳນົດ ໂຄງສ້າງລາຄາໄຟຟ້າທີ່ແທດເໝາະ ແລະ ສະທ້ອນເຖິງຕົ້ນທຶນຢ່າງແທ້ຈິງຕາມກົນໄກຕະຫຼາດ. ລາຄາໄຟຟ້າຕ້ອງມີກົນໄກ ສົ່ງເສີມໃຫ້ມີການນຳໃຊ້ຢ່າງປະຢັດ ແລະ ມີການແຂ່ງຂັນ ລວມທັງການພັດທະນາການໃຫ້ບໍລິການ.

ລັດຖະບານເປັນຜູ້ອະນຸມັດລາຄາໄຟຟ້າແຕ່ລະປະເພດ, ກຳນົດມາດຕະການໃນການຄຸ້ມຄອງ, ດັດສົມລາຄາໄຟຟ້າ ເພື່ອຊຸກຍູ້-ສົ່ງເສີມຜູ້ຜະລິດ ແລະ ຜູ້ນຳໃຊ້ໃຫ້ມີຄວາມເໝາະສົມ; ໃຫ້ນະໂຍບາຍທາງດ້ານລາຄາໄຟຟ້າ ແກ່ຂະແໜງການບູລິ ມະສິດຂອງລັດຖະບານ ເພື່ອສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ.

ການຊື້ໄຟຟ້າຈາກແຫຼ່ງຜະລິດ ໂດຍສະເພາະ ຟຟລ ທີ່ໄດ້ຮັບການມອບໝາຍຈາກລັດຖະບານ ຕ້ອງໄດ້ຄຳນຶງເຖິງຄຸນ ນະພາບໄຟຟ້າໃນການສະໜອງ, ລາຄາບໍ່ສູງກວ່າລາຄາຕົ້ນທຶນການຜະລິດໄຟຟ້າຂອງລະບົບທັງໝົດ ແລະ ຕ້ອງຕ່ຳກວ່າລັດ ລົງທຶນຜະລິດເອງ ຫຼື ທຽບເທົ່າຈາກຕົ້ນທຶນຂອງການຜະລິດໄຟຟ້າ ທີ່ໄດ້ຈາກແຫຼ່ງພະລັງງານດຽວກັນຢູ່ປະເທດໃກ້ຄຽງ.

ການຄິດໄລ່ລາຄາໄຟຟ້າທີ່ຊື້ຈາກຜູ້ຜະລິດໄຟຟ້າ ແມ່ນໃຫ້ຄິດໄລ່ຢູ່ຈຸດຮັບສົ່ງໄຟຟ້າ ເຊິ່ງແມ່ນຈຸດເຊື່ອມຕໍ່ລະຫວ່າງ ລະບົບກັບສາຍສົ່ງສະເພາະຂອງໂຄງການຜະລິດໄຟຟ້າ, ການຄິດໄລ່ລາຄາຈຳໜ່າຍຢູ່ພາຍໃນ ຕ້ອງຮັບປະກັນຄວາມສອດຄ່ອງ ກັບສະພາບເສດຖະກິດ-ສັງຄົມ ຂອງປະເທດ, ຕົ້ນທຶນ, ຄຸນນະພາບໄຟຟ້າ, ນະໂຍບາຍການສົ່ງເສີມການຜະລິດຂອງຂະແໜງ ການອື່ນ ຫຼື ເຂດຫ່າງໄກສອກຫຼີກທີ່ລັດກຳນົດ, ແທດເໝາະກັບເປົ້າໝາຍການຊົມໃຊ້, ຊ່ວງເວລາການຊົມໃຊ້ ແລະ ປະ ເພດການຊົມໃຊ້.

ລັດຖະບານມີນະໂຍບາຍ ລາຄາໄຟຟ້າ ເພື່ອການຄ້ຳປະກັນສະບຽງອາຫານ, ການຂົນສົ່ງດ້ວຍລົດໄຟຟ້າ, ເຂດອຸດສະ ຫະກຳ, ໂຮງງານອຸດສະຫະກຳຂຸດຄົ້ນທາດ-ປຸງແຕ່ງແຮ່ທາດ ແລະ ເພື່ອການສົ່ງເສີມການຂະຫຍາຍການນຳໃຊ້ໄຟຟ້າ ຂອງ ປະຊາຊົນຢູ່ເຂດຊົນນະບົດຫ່າງໄກສອກຫຼີກ.

2.9.1 ຂະແໜງອຸດສະຫະກຳ

ລັດຖະບານຮັບຮອງ, ຄຸ້ມຄອງ ແລະ ດັດສົມລາຄາໄຟຟ້າ ເພື່ອຮັບປະກັນ ໃນການພັດທະນາວຽກງານອຸດສະຫະກຳ ໃຫ້ໄດ້ຮັບການຂະຫຍາຍຢ່າງຕໍ່ເນື່ອງ ທາງດ້ານປະລິມານ ແລະ ຄຸນນະພາບ, ໃຫ້ລາຄາໄຟຟ້າຊຸກຍູ້ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ກາຍເປັນຂະແໜງການໜຶ່ງທີ່ປະກອບສ່ວນເຮັດໃຫ້ເສດຖະກິດ-ສັງຄົມ ຂອງປະເທດ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

ພະລັງງານໄຟຟ້າ ເປັນສ່ວນສຳຄັນຕໍ່ການພັດທະນາ ແລະ ການດຳເນີນກິດຈະການດັ່ງກ່າວ, ການກຳນົດລາຄາໄຟຟ້າ , ສະໜອງພະລັງງານໄຟຟ້າໃຫ້ພຽງພໍ, ການຮັບປະກັນຄວາມສະເຖຍລະພາບ, ມີຄວາມໝັ້ນຄົງ ແມ່ນມີຄວາມສຳຄັນຫຼາຍ ເພື່ອຊຸກຍູ້ໃຫ້ການພັດທະນາວຽກງານອຸດສະຫະກຳໄດ້ດຳເນີນຢ່າງຕໍ່ເນື່ອງ.

ເພື່ອຮັບປະກັນໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນ ໂດຍການຫັນໂຄງປະກອບເສດຖະກິດຕາມທິດຫັນເປັນອຸດສະຫະກຳ ແລະ ທັນສະໄໝ ເພື່ອສາມາດຕອບສະໜອງການບໍລິໂພກພາຍໃນ ແລະ ສົ່ງອອກ ,ກາຍເປັນຂະແໜງການຫຼັກ ໃນການປະກອບສ່ວນເຮັດໃຫ້ເສດຖະກິດຂອງປະເທດ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ໃນປີ 2020 ສູ້ຊົນເຮັດໃຫ້ໂຄງປະກອບເສດຖະກິດ ຂະແໜງອຸດສະຫະກຳ ໃຫ້ບັນລຸ 32% ຂອງລວມຍອດຜະລິດຕະພັນພາຍໃນ ຫຼື ໃຫ້ເພີ່ມຂຶ້ນສະເລ່ຍ 15% ຕໍ່ປີ ແລະ ເຮັດໃຫ້ມູນຄ່າການສົ່ງອອກຂະຫຍາຍຕົວສະເລ່ຍ 15% ຕໍ່ປີ.

ໄປຄຽງຄູ່ກັບການກຳນົດລາຄາໄຟຟ້າ ຈະຕ້ອງໄດ້ສ້າງຈິດສຳນຶກໃຫ້ປະຊາຊົນ ຊ່ວຍກັນປະຢັດພະລັງງານໄຟຟ້າ, ນຳໃຊ້ພະລັງງານໄຟຟ້າຢ່າງມີປະສິດທິພາບ, ບໍ່ໃຫ້ມີການເກື້ອກູນ, ໃຫ້ຜູ້ມີລາຍໄດ້ໜ້ອຍສາມາດເຂົ້າເຖິງ ແລະ ນຳໃຊ້ໄດ້ ແລະ ກະຕຸກຊຸກຍູ້ການຜະລິດກະສິກຳ ແລະ ການຜະລິດເປັນສິນຄ້າ. ຊຸກຍູ້ຮັບປະກັນການຜະລິດເປັນສິນຄ້າໃຫ້ມີຫຼາກຫຼາຍ ເພື່ອສ້າງມູນຄ່າເພີ່ມ ໃຫ້ຜະລິດຕະພັນ ແລະ ກາຍເປັນຂະແໜງພື້ນຖານຂອງເສດຖະກິດທີ່ໜັກແໜ້ນ ສາມາດສ້າງວຽກເຮັດ ງານທຳໃຫ້ປະຊາຊົນ ແລະ ສາມາດແຂ່ງຂັນກັບຕ່າງປະເທດ.

ລັດຖະບານມີນະໂຍບາຍລາຄາໄຟຟ້າ ເພື່ອສົ່ງເສີມຂະແໜງອຸດສະຫະກຳ, ຂະແໜງອຸດສະຫະກຳຂຸດຄົ້ນທາດ-ປຸງແຕ່ງແຮ່ທາດ. ໂດຍສະເພາະ ແມ່ນການສົ່ງເສີມເປັນພິເສດດ້ານນະໂຍບາຍລາຄາໄຟຟ້າ ໃນຊ່ວງລະດູຝົນ ລາຍລະອຽດຈະມີ ກົນໄກການກຳນົດສະເພາະໃຫ້ຕ່າງຫາກ.

2.9.2 ຂະແໜງກະສິກຳ ແລະ ການຄ້ຳປະກັນສະບຽງອາຫານ

ລັດຖະບານຮັບຮອງ, ຄຸ້ມຄອງ ແລະ ດັດສົມລາຄາພະລັງງານໄຟຟ້າ. ເພື່ອຮັບປະກັນການຜະລິດ ກະສິກຳ ແລະ ການຄ້ຳປະກັນສະບຽງອາຫານ ໃຫ້ມີຄວາມຫຼາກຫຼາຍໃນການຜະລິດ, ເພື່ອເປັນອາຫານ ແລະ ເປັນສິນຄ້າ, ເພື່ອໃຫ້ໄດ້ຮັບ ການຂະຫຍາຍຕົວຢ່າງຕໍ່ເນື່ອງ, ເພື່ອໃຫ້ລາຄາໄຟຟ້າສົ່ງເສີມການຜະລິດທີ່ທັນສະໄໝ ແລະ ຕອບສະໜອງການບໍລິໂພກພາຍ ໃນ ແລະ ສົ່ງອອກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງປະເທດ.

ເພື່ອສະໜັບສະໜູນພະລັງງານໄຟຟ້າ ໃຫ້ແກ່ແຜນງານກະສິກຳ ແລະ ການສ້າງຄວາມໝັ້ນຄົງທາງດ້ານສະບຽງ ອາຫານ ເພື່ອຜະລິດເປັນສິນຄ້າ, ຍົກສູງທາງດ້ານຄຸນນະພາບການຜະລິດຂອງຊາວກະສິກອນ ດ້ວຍການສ້າງເປັນຟາມ, ກຸ່ມ ການຜະລິດ, ວິສະຫະກິດ ແລະ ຄອບຄົວຕົວແບບ ນຳໃຊ້ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດໃນສະໜອງສິນຄ້າ ກະສິກຳ ໃຫ້ແກ່ອຸດສະຫະກຳປຸງແຕ່ງ ແລະ ຂະແໜງບໍລິການ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໃນການສ້າງມູນຄ່າ ເພີ່ມຜະລິດຕະພັນ ເພື່ອສາມາດຕອບສະໜອງການບໍລິໂພກພາຍໃນ ແລະ ສົ່ງອອກ, ຮັບປະກັນໃຫ້ ມີການຂະຫຍາຍຕົວຢ່າງ ຕໍ່ເນື່ອງ ແລະ ອັດຕາການເພີ່ມຂຶ້ນ 6,72% ຫຼື ກວມເອົາ 29,69% ໃນປີ 2020.

ຮັບປະກັນສະໜອງໄຟຟ້າໃຫ້ແກ່ການຜະລິດເຊັ່ນ: ການສະໜອງນ້ຳເຂົ້ານາ, ເຂດທີ່ບໍ່ມີຊົນລະປະທານ ແລະ ການຜະລິດເພື່ອຄ້ຳປະກັນສະບຽງອາຫານ ເພື່ອສະໜັບສະໜູນໃຫ້ການຈັດຕັ້ງປະຕິບັດບັນລຸເປົ້າໝາຍ ການຜະລິດເຂົ້າໃຫ້ໄດ້ ປະມານ 26 ລ້ານໂຕ່ນທົ່ວປະເທດໃນປີ 2020; ຮັບປະກັນອັດຕາການບໍລິໂພກ ຊີ້ນ, ປາ ແລະ ໄຂ່ ໃຫ້ໄດ້ໂດຍສະເລ່ຍ 65 ກິໂລຕໍ່ຄົນຕໍ່ປີ, ການຜະລິດຊີ້ນ ແລະ ໄຂ່ ໃຫ້ໄດ້ 258 ພັນໂຕ່ນ, ອັດຕາການຂະຫຍາຍຕົວຝູງສັດ ປະມານ 6% ຕໍ່ປີ ຕາມຄາດໝາຍທີ່ກຳນົດໄວ້.

ມີນະໂຍບາຍລາຄາໄຟຟ້າ ເພື່ອສົ່ງເສີມການຜະລິດກຳສິກຳ ແລະ ການປຸງແຕ່ງ ໂດຍນຳໃຊ້ໃນການຜະລິດກະສິກຳ ໃນຊ່ວງທີ່ມີຄວາມຕ້ອງການນຳໃຊ້ໄຟຟ້າຕ່ຳ ເພື່ອໃຫ້ເກີດຄວາມສະເຖຍລະພາບໃນລະບົບຈຳໜ່າຍໄຟຟ້າ ລາຍລະອຽດຈະມີກົນໄກການກຳນົດສະເພາະໃຫ້ຕ່າງຫາກ.

2.9.3 ຂະແໜງໂຍທາທິການ ແລະ ຂົນສົ່ງ

ລັດຖະບານມີນະໂຍບາຍ ຊຸກຍູ້-ສົ່ງເສີມ ລາຄາໄຟຟ້າຕໍ່ກັບ ການພັດທະນາລະບົບຄົມມະນາຄົມຂົນສົ່ງ ທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ໂດຍການນຳໃຊ້ລົດໄຟຟ້າເຂົ້າບໍລິການໃນຕົວເມືອງ ແລະ ສົ່ງເສີມການນຳໃຊ້ລົດໄຟຟ້າ ປ່ຽນແທນລົດໃຊ້ນ້ຳມັນ.

ການພັດທະນາກໍ່ສ້າງພື້ນຖານໂຄງລ່າງທີ່ທັນສະໄໝ ທາງດ້ານຄົມມະນາຄົມຂົນສົ່ງ ແມ່ນການສ້າງເງື່ອນໄຂໜຶ່ງທີ່ອຳນວຍຄວາມສະດວກ ໃຫ້ແກ່ການພັດທະນາຂອງຂະແໜງການອື່ນໆເຊັ່ນ: ຂົນສົ່ງສິນຄ້າ ແລະ ໂດຍສານພາຍໃນ. ຊຶ່ງສ່ວນໃຫ່ຍແມ່ນການນຳໃຊ້ນ້ຳມັນເຊື້ອໄຟສຳເລັດຮູບເປັນຫຼັກ ແລະ ນຳເຂົ້າຈາກຕ່າງປະເທດ 100%, ທີ່ມີທ່ວງທ່າການນຳໃຊ້ເພີ່ມຂຶ້ນເລື້ອຍໆ.

ຄຽງຄູ່ກັບຄວາມຕ້ອງການນຳໃຊ້ເພີ່ມຂຶ້ນ ລັດຖະບານໄດ້ມີມາດຕະການຄວບຄຸມ ໂດຍການໂຄສະນາ, ປູກຈິດສຳນຶກໃນການປະຢັດ, ສົ່ງເສີມການຜະລິດນ້ຳມັນເຊື້ອໄຟຊີວະພາບ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ສະໜັບສະໜູນ ການພັດທະນາລົດໄຟຄວາມໄວສູງ ລະຫວ່າງ ປະເທດ, ລົດໄຟຟ້ານຳໃຊ້ໃນຕົວເມືອງ, ລົດຈັກໄຟຟ້າ ແລະ ພາຫະນະທີ່ນຳໃຊ້ໄຟຟ້າອື່ນໆ ທີ່ມີຄວາມເໝາະສົມ.

ລັດຖະບານ ຊຸກຍູ້-ສົ່ງເສີມ ການລົງທຶນເຂົ້າໃນການພັດທະນາພື້ນຖານໂຄງລ່າງເຊັ່ນ: ກຳນົດເຂດບໍລິການ, ລານຈອດ, ສະຖານີສາກໄຟ, ມາດຕະການຫຼຸດຜ່ອນພາສີນຳເຂົ້າ ແລະ ກຳນົດນະໂຍບາຍດ້ານລາຄາໄຟຟ້າ ໃຫ້ກັບພາຫະນະທີ່ໃຊ້ໄຟຟ້າຢ່າງເໝາະສົມ ລາຍລະອຽດຈະມີກົນໄກການກຳນົດສະເພາະໃຫ້ຕ່າງຫາກ.

2.10 ການອະນຸລັກ ແລະ ປະຢັດພະລັງງານ

ສົ່ງເສີມ ການອານຸລັກ ແລະ ປະຢັດພະລັງງານໃຫ້ເປັນຮູບປະທຳ, ມີປະສິດທິພາບ, ມີປະສິດທິຜົນ, ຕາມທິດຍືນຍົງ ຕິດພັນກັບສິ່ງແວດລ້ອມ ແມ່ນເພື່ອແນໃສ່ຫຼຸດຜ່ອນການນຳໃຊ້ພະລັງງານຫຼຸດລົງ 10% ໃນປີ 2030 ຕາມຈັ່ງຫວະການຂະຫຍາຍຕົວຂອງເສດຖະກິດ.

ການອານຸລັກ ແລະ ປະຢັດພະລັງງານ ກວມເອົາບັນດາຂະແໜງການຄື: ພາກອຸດສະຫະກຳ, ພາກທີ່ຢູ່ອາໄສ, ພາກຕຶກອາຄານທຸລະກິດ ແລະ ສຳນັກງານ ແລະ ພາກຂົນສົ່ງ ເປັນຕົ້ນແມ່ນແນ່ໃສ່ ສົ່ງເສີມການນຳໃຊ້ອຸປະກອນໄຟຟ້າ, ເຄື່ອງຈັກພາຫະນະ ຫຼື ລະບົບການຜະລິດທີ່ປະຢັດພະລັງງານ ເພື່ອໃຫ້ສອດຄ່ອງກັບມາດຕະຖານສະມັດຕະພາບດ້ານພະລັງງານຕ່ຳສຸດ ໂດຍສະເພາະປະເພດມໍເຕີ ແລະ ອຸປະກອນເຄື່ອງໃຊ້ພະລັງງານອື່ນໆ.

ສຳລັບຂັ້ນຕອນ, ການຈັດຕັ້ງປະຕິບັດ ແລະ ບັນດາລາຍລະອຽດທີ່ກ່ຽວຂ້ອງ ແມ່ນໃຫ້ອີງໃສ່ “ນະໂຍບາຍແຫ່ງຊາດ ວ່າດ້ວຍການປະຢັດ ແລະ ອະນຸລັກພະລັງງານຂອງ ສປປ ລາວ” ສະບັບເລກທີ 209/ລບ, ລົງວັນທີ 4 ກໍລະກົດ 2016.

ພາກທີ III ການຄາດຄະເນຄວາມຕ້ອງການໄຟຟ້າ

3.1 ຫຼັກການຄາດຄະເນຄວາມຕ້ອງການໄຟຟ້າ


ການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ເປັນວຽກງານທີ່ມີຄວາມສຳຄັນຢ່າງຍິ່ງ ຕໍ່ການວາງຍຸດທະສາດ ການພັດທະນາພະລັງງານໄຟຟ້າຂອງ ສປປ ລາວ, ຄວາມລະອຽດ, ຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ ຂອງການຄາດຄະເນ ຄວາມຕ້ອງການພະລັງງານ ຈະເຮັດໃຫ້ການວາງແຜນແຫຼ່ງຜະລິດໄຟຟ້າ ແລະ ການວາງແຜນລະບົບສາຍສົ່ງ ມີຄວາມເໝາະ ສົມ ແລະ ສອດຄ່ອງກົມກຽວ. ການຄາດຄະເນຄວາມຕ້ອງການໄຟຟ້າ ໃນຍຸດທະສາດການພັດທະນາພະລັງງານໄຟຟ້າ ຂອງ ສປປ ລາວ 2021 ຫາ 2030 ແມ່ນໄດ້ພິຈາລະນາ ໃຊ້ 2 ຮູບແບບປະສົມປະສານ ຄື: ❶ ການຄາດຄະເນແບບແຕ່ເທິງລົງ ລຸ່ມ (Top down) ແມ່ນການຄາດການໂດຍອີງໃສ່ການຂະຫຍາຍຕົວຂອງ ເສດຖະກິດ-ສັງຄົມເປັນຫຼັກ, ❷ ການຄາດ ຄະເນແຕ່ລຸ່ມຂຶ້ນເທິງ (Bottom-Up) ແມ່ນການຄາດຄະເນໂດຍອີງໃສ່ການຂະຫຍາຍຕົວສະເພາະ ຂອງຂະແໜງການນຳ ໃຊ້ໄຟຟ້າຕ່າງໆຢ່າງລະອຽດ. ຂອບເຂດການຄາດຄະເນແມ່ນໄດ້ກວມເອົາການ 2 ດ້ານຄື: ດ້ານພະລັງງານໄຟຟ້າ (Energy) ແລະ ດ້ານກຳລັງໄຟຟ້າສູງສຸດ (Peak Demand), ໂດຍໄດ້ແບ່ງອອກເປັນ 18 ແຂວງ, 4 ພາກ (ເໜືອ, ນະຄອນຫຼວງ, ກາງ ແລະ ໃຕ້), 5 ຂະແໜງການ (ອຸດສາຫະກຳ, ທີ່ຢູ່ອາໄສ, ທຸລະກິດ, ຂົນສົ່ງ ແລະ ກະສິກຳ) ແລະ 5 ກໍລະນີສຶກສາ (BAU, EV, IN, EV+IN ແລະ COVID19). ວິທີການຄາດຄະເນແມ່ນ ໄດ້ມີການເກັບກຳ, ວິເຄາະວິໄຈຂໍ້ມູນສະຖິຕິ ຕ່າງໆນັບແຕ່ປີ 2000 ຫາ 2018 ເປັນຕົ້ນແມ່ນ ຂໍ້ມູນ ສະຖິຕິການນຳໃຊ້ໄຟຟ້າ, ຂໍ້ມູນ GDP ຂອງແຕ່ລະຂະແໜງການ, ຂໍ້ມູນປະຊາກອນ, ຂໍ້ມູນ ລາຄານ້ຳມັນດິບ, ຂໍ້ມູນລາຄາໄຟຟ້າ, ຂໍ້ມູນຈຳນວນຄົວເຮືອນ, ຂໍ້ມູນຈຳນວນລົດ, ຂໍ້ມູນແຜນ ຄວາມຕ້ອງການໄຟຂອງອຸດສາຫະກຳຂະໜາດໃຫ່ຍ ແລະ ອື່ນໆ, ຂໍ້ມູນເລົ່ານີ້ແມ່ນຈະໄດ້ນຳມາ ວິເຄາະພິດຕະກຳ ເພື່ອສ້າງ ເປັນສົມຜົນການຄາດຄະເນຄວາມຕ້ອງການຂອງແຕ່ລະຂະແໜງການໂດຍນຳໃຊ້ໂປຼແກຼມ Microfit ຫຼັງຈາກນັ້ນຈຶ່ງ ນຳໃຊ້ ໂປຼແກຼມ LEAP ແລະ ໂປຼແກຼມ MEAD-E ຄາດຄະເນຄວາມຕ້ອງການພະລັງງານ ແລະ ກຳລັງໄຟຟ້າຕາມລາດັບ. ນອກຈາກນັ້ນ, ຜົນການຄາດຄະເນຄວາມຕ້ອງການ ຍັງໄດ້ມີການປຽບທຽບກັບ ການຄາດຄະເນຂອງ ຟຟລ, IAEA, USAID, JICA ແລະ ບໍລິສັດທີ່ປຶກສາ PWC ເພື່ອເປັນທາງເລືອກໃນການພິຈາລະນາ ຂອບເຂດການຄາດຄະເນຄວາມ ຕ້ອງການໃຫ້ຖືກຕ້ອງທີ່ສຸດ.

3.1.1. ກໍລະນີພື້ນຖານ (BAU)

ການຄາດຄະເນຄວາມຕ້ອງການໄຟຟ້າໃນກໍລະນີພື້ນຖານ ແມ່ນການຄາດຄະເນໂດຍອີງໃສ່ການຂະຫຍາຍຕົວຂອງ ເສດຖະກິດເປັນຫຼັກເຊັ່ນ: ❶ ຂະແໜງອຸດສາຫະກຳ ແມ່ນອີງຕາມການຂະຫຍາຍຕົວຂອງ GDP ຂະແໜງອຸດສາຫະກຳ (Gross Domestric Production of Industry: INGDP) ສະເລ່ຍແລ້ວມີອັດຕາການຂະຫຍາຍຕົວ 7,2%/ປີ, ❷ ຂະແໜງຂົນສົ່ງ ແມ່ນອີງຕາມແຜນຄວາມຕ້ອງການໄຟຟ້າໃນການແລ່ນລົດໄຟຟ້າ ລາວ-ຈີນ, ແຕ່ປີ 2021 ຫາ 2030 ຄາດວ່າຈະຂະຫຍາຍຕົວຢູ່ທີ 10,2 %/ປີ, ❸ ຂະແໜງທີ່ຢູ່ອາໄສ, ❹ ຂະແໜງບໍລິການ ແລະ ❺ ຂະແໜງກະສິກຳ ແມ່ນ ອີງຕາມ ສະຖິຕິການຂະຫຍາຍຕົວຂອງການນຳໃຊ້ພະລັງງານໄຟຟ້າໃນໄລຍະຜ່ານມາ, ການຂະຫຍາຍຕົວ GDP ຂະແໜ ງການ,ປະຊາກອນ ແລະ ລາຄາໄຟຟ້າແຕ່ລະຂະແໜງການເປັນຫຼັກ.

3.1.2. ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ (EV)

ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ ແມ່ນອີງຕາມຍຸດທະສາດ ວ່າດ້ວຍການສົ່ງເສີມການນຳໃຊ້ພະລັງງານສະອາດ ໃນຂະແໜງຄົມມະນາຄົມ-ຂົນສົ່ງ ແຜນພັດທະນາຮອດປີ 2025, ຍຸດທະສາດຮອດປີ 2030 ແລະ ວິໄສທັດ ຮອດປີ 2050 ທີ່ຖືກຮັບຮອງ ແລະ ປະກາດໃຊ້ ຈາກລັດຖະບານ ໃນວັນທີ 11 ພຶດສະພາ 2020 ໂດຍສົມມຸດຖານໃຫ້ໃນເບື້ອງຕົ້ນ ມີການນຳໃຊ້ລົດໄຟຟ້າໃນ 4 ແຂວງ ຄື: ແຂວງນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງ ສະຫວັນນະເຂດ ແລະ ແຂວງຈຳປະສັກ, ປະເພດພາຫະນະລວມມີ ລົດຈັກໄຟຟ້າ, ລົດເກັ່ງໄຟຟ້າ, ລົດຈີບໄຟຟ້າ, ລົດເມໄຟຟ້າ ແລະ ລົດບັນທຸກໄຟຟ້າ ແລະ ຮອດປີ 2030 ໃຫ້ມີອັດຕາສ່ວນການນຳໃຊ້ລົດໄຟຟ້າກວມເອົາ 30% ຫຼື ເທົ່າກັບ 1.2 ລ້ານຄັນ ຂອງຈຳນວນພາຫະນະທີ່ໃຊ້ນຳມັນທັງໝົດ ດັ່ງເສັ້ນສະແດງ 3.1.



ຮູບທີ່ 3- 1: ເສັ້ນສະແດງອັດຕາສ່ວນການເພີ່ມຂຶ້ນຂອງພາຫະນະນຳໃຊ້ໄຟຟ້າ

(ລາຍລະອຽດການຄິດໄລ່ຕາມເອກະສານຊ້ອນທ້າຍ ຕາຕະລາງ A3-A13)

3.1.3. ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN)

ກໍລະນີນີ້ແມ່ນກໍລະນີສົມມຸດຖານໃຫ້ຂະແໜງອຸດສາຫະກຳຂະຫຍາຍຕົວສູງກວ່າປົກກະຕິ ໂດຍອີງຕາມແຜນຄວາມຕ້ອງການໄຟຟ້າຂອງເຂດອຸດສະຫະກຳ ແລະ ເຂດເສດຖະກິດຕ່າງໆ ທົ່ວປະເທດ ແລະ ການໃຫ້ນະໂຍບາຍ ດຶງດູດການລົງທຶນ ດ້ານລາຄາໄຟຟ້າ ແລະ ນະໂຍບາຍດ້ານຕ່າງໆຈາກລັດຖະບານ ເຫັນວ່າ ກໍລະນີສຶກສານີ ຈະເຮັດໃຫ້ຂະແໜງອຸດສາຫະກຳຂະຫຍາຍຕົວສະເລ່ຍ 13,7%/ປີ ສູງກ່ວາການຂະຫຍາຍຕົວໃນກໍລະນີພື້ນຖານ 6,5%.

3.1.4. ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ ແລະ ກໍລະນີອຸດສາຫະກຳເພີ່ມຂຶ້ນ (EV+IN)

ກໍລະນີນີ້ແມ່ນສົມມຸດຖານໃຫ້ ມີການສົ່ງເສີມການນຳໃຊ້ລົດໄຟຟ້າ ຕາມຍຸດທະສາດ ວ່າດ້ວຍການສົ່ງເສີມການນຳໃຊ້ພະລັງງານສະອາດໃນຂະແໜງຄົມມະນາຄົມ-ຂົນສົ່ງ ແຜນພັດທະນາຮອດປີ 2025, ຍຸດທະສາດຮອດປີ 2030 ແລະ ວິໄສທັດ ຮອດປີ 2050 ແລະ ສົ່ງເສີມອຸດສາຫະກຳຂະຫຍາຍຕົວສູງ ຕາມແຜນຄວາມຕ້ອງການໄຟຟ້າຂອງເຂດອຸດສະຫະກຳ ແລະ ເຂດເສດຖະກິດຕ່າງໆ ແລະ ການໃຫ້ນະໂຍບາຍ ດຶງດູດການລົງທຶນ ດ້ານລາຄາໄຟຟ້າ ແລະ ນະໂຍບາຍດ້ານຕ່າງໆ ຈາກລັດຖະບານ ພ້ອມໆກັນ ເຮັດໃຫ້ກໍລະນີນີ້ແມ່ນກໍລະນີທີ່ມີການຂະຫຍາຍຕົວສູງສຸດ.

3.1.5. ກໍລະນີເກີດພະຍາດລະບາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃຫ່ມ (COVID-19)

ການເກີດພະຍາດລະບາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃຫ່ມ COVID-19 ເຮັດໃຫ້ເສດຖະກິດທົ່ວໂລກ ກໍ່ຄືເສດຖະກິດຂອງປະເທດ ມີອັດຕາການຂະຫຍາຍຕົວຊ້າລົງ. ຕາມບົດລາຍງານຜົນກະທົບຂອງ COVID-19 ຕໍ່ເສດຖະກິດຂອງ ສປປ ລາວ ທັງໃນໄລຍະສັ້ນ ແລະ ໄລຍະຍາວ, ສະບັບເລກທີ 05/ສຄສຊ, ລົງວັນທີ 19 ເມສາ 2020 ໃຫ້ຮູ້ວ່າ ການເກີດພະຍາດດັ່ງກ່າວນີ້ ຈະກະທົບໂດຍກົງຕໍ່ການເຕີບໂຕຂອງເສດຖະກິດແຫ່ງຊາດ (GDP) ໂດຍສະເພາະແມ່ນ ຂະແໜງການ ທ່ອງທ່ຽວ, ການຄ້າ, ການລົງທຶນ ແລະ ຂະແໜງອື່ນ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຄາດຄະເນວ່າເສດຖະກິດແຫ່ງຊາດຂອງ ສປປ ລາວ ຂະຫຍາຍຕົວຕ່ຳລົງຈາກ 6,1% ໃນປີ 2019 ລົງມາໃນລະດັບ 3,3% ໃນປີ 2020 ເຊິ່ງຕ່ຳກວ່າທີ່ຄາດໄວ້ເບື້ອງຕົ້ນ (4,5%) ໃນເດືອນມີນາ 2020; ADB ໄດ້ຄາດຄະເນ ການເຕີບໂຕ GDP ຂອງ ສປປ ລາວ ສຳລັບ 2020 ແມ່ນ 3,5%, ທະນາຄານໂລກ (Work Bank) ຄາດຄະເນ 3,6 % (ແຕ່ຈະມີການປັບລົງຍັງເຫຼືອ -2,2% ຕາມການສົນທະນາບໍ່ເປັນທາງການຂອງຊ່ຽວຊານ WB) ກອງທຶນສາກົນ (IMF) ຄາດຄະເນ 0,7 % ສຳລັບປີ 2020. ສະນັ້ນ, ໃນການຄາດຄະເນຄວາມຕ້ອງການໄຟຟ້າກໍລະນີນີ້ແມ່ນໄດ້ມີການປັບຕົວເລກ GDP ໃຫ້ຫຼຸດລົງ ຕາມການວິເຄາະຂອງພາກສ່ວນຕ່າງໆຂ້າງເທິງໂດຍໃຫ້ GDP ປີ 2021 ຫາ 2023 ຂະຫຍາຍຕົວ 2,5 %, 2023 ຫາ 2025 ໃຫ້ຂະຫຍາຍຕົວ 4%, ປີ 2025 ຫາ 2030 ໃຫ້ຂະຫຍາຍຕົວ 6% ແລະ ປີ 2030 ຫາ 2050 ໃຫ້ຂະຫຍາຍຕົວ 5,7%.

3.2 ການຄາດຄະເນຄວາມຕ້ອງການໄຟຟ້າແບ່ງຕາມແຂວງ

3.2.1 ກໍລະນີພື້ນຖານ (BAU)

ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 15.464 ລ້ານກິໂລວັດໂມງ, ຂະຫຍາຍຕົວສະເລ່ຍ (AAGR) ແຕ່ປີ 2021 ຫາ 2030 ປະມານ 6,8%/ປີ. ແຂວງທີ່ນຳໃຊ້ໄຟຟ້າຫຼາຍກວ່າໝູ່ແມ່ນ ນະຄອນຫຼວງວຽງຈັນ ມີຄວາມຕ້ອງການພະລັງງານໄຟຟ້າປະມານ 3.835 ລ້ານກິໂລວັດໂມງ, ຂະຫຍາຍຕົວສະເລ່ຍ 5%/ປີ, ຕໍ່ມາແມ່ນແຂວງຫຼວງພະບາງ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງວຽງຈັນ ແລະ ແຂວງອື່ນຕາມລຳດັບ.

ຕາຕະລາງ 3- 1: ຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມແຂວງ ກໍລະນີ (BAU)

ຫົວໜ່ວຍ: (GWh)

ແຂວງ	2021	2022	2023	2024	2025	2030	AAGR (%) 2021-2030
ຜົ້ງສາລີ	39	46	52	59	66	108	12.0%
ບໍ່ແກ້ວ	429	466	500	531	560	696	5.5%
ຫຼວງນ້ຳທາ	94	111	128	146	165	278	12.8%
ອຸດົມໄຊ	257	293	329	366	404	619	10.2%
ຫຼວງພະບາງ	1.320	1.421	1.508	1.586	1.654	1.933	4.3%
ຫົວພັນ	60	69	78	88	98	155	11.1%
ຊຽງຂວາງ	103	122	141	161	182	309	13.0%
ໄຊສົມບຸນ	600	649	693	732	768	928	5.0%
ວຽງຈັນ	703	760	811	857	898	1.082	4.9%
ໄຊຍະບຸລີ	197	224	251	278	306	464	10.0%
ນະຄອນຫຼວງ	2.373	2.579	2.763	2.935	3.094	3.835	5.5%
ບໍລິຄຳໄຊ	369	413	455	498	540	773	8.6%
ຄຳມ່ວນ	600	681	761	842	924	1.392	9.8%
ສະຫວັນນະເຂດ	600	669	736	802	867	1.222	8.2%
ຈຳປາສັກ	514	571	625	677	729	1.005	7.7%
ສາລະວັນ	129	145	160	176	191	278	9.0%
ເຊກອງ	48	60	72	85	99	186	16.1%
ອັດຕະປື	129	139	149	157	165	201	5.1%
ລວມ	8.564	9.419	10.212	10.978	11.712	15.464	6.8%

ຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 2.541 MW, ຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 7%/ປີ, ແຂວງທີ່ມີຄວາມຕ້ອງການສູງກວ່າໝູ່ ແມ່ນນະຄອນຫຼວງວຽງຈັນ ມີຄວາມຕ້ອງການປະມານ 660 MW, ຕໍ່ມາແມ່ນແຂວງຫຼວງພະບາງ ມີຄວາມຕ້ອງການ ປະມານ 380 MW ເຊິ່ງສາເຫດແມ່ນມາຈາກ ໂຄງການ Wrap Data Technology Laos Sole LTD ທີ່ມີຄວາມ ຕ້ອງການ ກຳລັງໄຟຟ້າເຖິງ 260 MW ໃນປີ 2021 ແລະ ອາດມີຄວາມຕ້ອງການໄຟຟ້າຄືງທີ່ຈົນຮອດປີ 2030.

ຕາຕະລາງ 3- 2: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າແບ່ງຕາມແຂວງ (BAU)

ຫົວໜ່ວຍ: (MW)

ແຂວງ	2021	2022	2023	2024	2025	2030	AAGR (%) 2021 -2030
ຜົ້ງສາລີ	4	4	5	6	6	10	11%
ບໍ່ແກ້ວ	37	45	49	53	57	76	8%
ຫຼວງນ້ຳທາ	16	21	23	25	28	46	12%
ອຸດົມໄຊ	24	28	33	35	39	56	10%
ຫຼວງພະບາງ	255	270	283	296	308	380	5%
ຫົວພັນ	14	15	17	20	23	43	13%
ຊຽງຂວາງ	17	21	26	28	31	54	14%
ໄຊສົມບຸນ	81	91	100	108	117	166	8%
ວຽງຈັນ	92	97	107	115	120	152	6%
ໄຊຍະບຸລີ	45	52	56	61	65	90	8%
ນະຄອນຫຼວງ	410	447	481	510	537	660	5%
ບໍລິຄຳໄຊ	70	76	101	114	126	182	11%
ຄຳມ່ວນ	107	118	134	149	163	232	9%
ສະຫວັນນະເຂດ	78	85	94	102	110	148	7%
ຈຳປາສັກ	77	84	85	89	91	119	5%
ສາລະວັນ	24	29	32	36	41	68	12%
ເຊກອງ	6	8	10	12	15	32	21%
ອັດຕະປື	23	23	23	24	25	29	3%
ລວມ	1.380	1.514	1.659	1.783	1.902	2.541	7%

3.2.2 ກໍລະນີສິ່ງເສີມການນຳໃຊ້ລົດໄຟຟ້າ (EV)

ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 16.787 ລ້ານກິໂລວັດໂມງ, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 7,6%/ປີ, ສູງກວ່າການຂະຫຍາຍຕົວໃນກໍລະນີ BAU 0,8% ແລະ ມີຄວາມຕ້ອງການພະລັງງານໄຟຟ້າຈາກການນຳໃຊ້ລົດໄຟຟ້າປະມານ 1.322 ລ້ານກິໂລວັດໂມງ.

ຕາຕະລາງ 3- 3: ຄວາມຕ້ອງການພະລັງງານໄຟຟ້າ ກໍລະນີ (EV)

ຫົວໜ່ວຍ: (GWh)

ກໍລະນີ	2021	2022	2023	2024	2025	2030	AAGR (%) 2021 -2030
BAU	8.564	9.419	10.212	10.978	11.712	15.464	6,8%

EV	8.696	9.683	10.609	11.507	12.373	16.787	7,6%
ການສົມທຽບຄວາມແຕກຕ່າງ	132	264	397	529	661	1.322	0,8%

ຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 2.760 MW, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 7,9%/ປີ, ສູງກວ່າການຂະຫຍາຍຕົວໃນກໍລະນີ BAU 0,9% ແລະ ມີຄວາມຕ້ອງການກຳລັງໄຟຟ້າຈາກການນຳໃຊ້ລົດໄຟຟ້າປະມານ 219 MW.

ຕາຕະລາງ 3- 4: ຄວາມຕ້ອງການກຳລັງໄຟຟ້າສູງສຸດ ກໍລະນີ (EV)

ຫົວໜ່ວຍ: (MW)

ກໍລະນີ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021 -2030**
BAU	1.380	1.514	1.659	1.783	1.902	2.541	7%
EV	1.396	1.554	1.723	1.871	2.012	2.760	7,9%
ການສົມທຽບຄວາມແຕກຕ່າງ	16	41	65	88	111	219	0,9%

3.2.3 ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN)

ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 19.092 ລ້ານກິໂລວັດໂມງ, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 7,5%/ປີ, ສູງກວ່າການຂະຫຍາຍຕົວໃນກໍລະນີ BAU 0,7% ແລະ ມີຄວາມຕ້ອງການພະລັງງານໄຟຟ້າຈາກການສົ່ງເສີມອຸດສາຫະກຳ ປະມານ 3.628 ລ້ານກິໂລວັດໂມງ.

ຕາຕະລາງ 3- 5: ຄວາມຕ້ອງການພະລັງງານໄຟຟ້າ ກໍລະນີ (IN)

ຫົວໜ່ວຍ: (GWh)

ກໍລະນີ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021 -2030**
BAU	8.564	9.419	10.212	10.978	11.712	15.464	6,8%
IN	9.931	10.842	11.787	12.794	13.702	19.092	7,5%
ການສົມທຽບຄວາມແຕກຕ່າງ	1.367	1.423	1.576	1.816	1.990	3.628	0,7%

ຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 2.965 MW, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 8,7%/ປີ, ສູງກວ່າການຂະຫຍາຍຕົວໃນກໍລະນີ BAU 1,7% ແລະ ມີຄວາມຕ້ອງການກຳລັງ ໄຟຟ້າຈາກການສົ່ງເສີມອຸດສາຫະກຳ ປະມານ 424 MW.

ຕາຕະລາງ 3- 6: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ກໍລະນີ (IN)

ຫົວໜ່ວຍ: (MW)

ກໍລະນີ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021 -2030**
BAU	1.380	1.514	1.659	1.783	1.902	2.541	7%
IN	1.403	1.542	1.715	1.883	2.030	2.965	8,7%
ການສົມທຽບຄວາມແຕກຕ່າງ	23	28	57	99	129	424	1,7%

(ລາຍລະອຽດການຄິດໄລ່ຕາມເອກະສານຊ້ອນທ້າຍ ຕາຕະລາງ A14-A18)

3.2.4 ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ ແລະ ກໍລະນີອຸດສາຫະກຳເພີ່ມຂຶ້ນ (EV+IN)

ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 20.415 ລ້ານກິໂລວັດໂມງ, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 8,2%/ປີ, ສູງກວ່າການຂະຫຍາຍຕົວໃນກໍລະນີ BAU 1,4% ແລະ ມີຄວາມຕ້ອງການພະລັງງານໄຟຟ້າຈາກການນຳໃຊ້ລົດໄຟຟ້າ ແລະ ອຸດສາຫະກຳ ເພີ່ມຂຶ້ນປະມານ 4.951 ລ້ານກິໂລວັດໂມງ.

ຕາຕະລາງ 3- 7: ຄວາມຕ້ອງການພະລັງງານໄຟຟ້າ ກໍລະນີ (EV+IN)

ຫົວໜ່ວຍ: (GWh)

ກໍລະນີ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021 -2030**
BAU	8.564	9.419	10.212	10.978	11.712	15.464	6,8%
EV+IN	10.063	11.106	12.184	13.323	14.363	20.415	8.2%
ການສົມທຽບຄວາມແຕກຕ່າງ	1.499	1.687	1.972	2.345	2.650	4.951	1,4%

ຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 3.188 MW, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 9,5%/ປີ, ສູງກວ່າການຂະຫຍາຍຕົວໃນກໍລະນີ BAU 2,5% ແລະ ມີຄວາມຕ້ອງການກຳລັງໄຟຟ້າຈາກການນຳໃຊ້ລົດໄຟຟ້າ ແລະ ອຸດສາຫະກຳເພີ່ມຂຶ້ນ ປະມານ 647 MW.

ຕາຕະລາງ 3- 8: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ກໍລະນີ (EV+IN)

ຫົວໜ່ວຍ: (MW)

ກໍລະນີ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021 -2030**
BAU	1.380	1.514	1.659	1.783	1.902	2.541	7%
EV+IN	1.406	1.571	1.770	1.962	2.134	3.188	9,5%
ການສົມທຽບຄວາມແຕກຕ່າງ	26	57	111	178	232	647	2,5%

3.2.5 ກໍລະນີເກີດພະຍາດລະບາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃຫ່ມ (COVID-19)

ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 13.820 ລ້ານກິໂລວັດໂມງ, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 5,7%/ປີ, ຕ່ຳກວ່າການຂະຫຍາຍຕົວໃນກໍລະນີ BAU 1,1% ແລະ ມີຄວາມຕ້ອງການພະລັງງານໄຟຟ້າຫຼຸດລົງ ປະມານ 1.644 ລ້ານກິໂລວັດໂມງ.

ຕາຕະລາງ 3- 9: ການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າ ກໍລະນີ (COVID-19)

ຫົວໜ່ວຍ: (GWh)

ກໍລະນີ	2021	2022	2023	2024	2025	2030	AAGR (%) 2021-2030
BAU	8.564	9.419	10.212	10.978	11.712	15.464	6,8%
COVID-19	8.390	9.118	9.759	10.354	10.912	13.820	5,7%
ການສົມທຽບຄວາມແຕກຕ່າງ	-174	-301	-453	-624	-800	-1.644	-1,1%

ຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ຮອດປີ 2030 ສປປ ລາວ ຈະມີຄວາມຕ້ອງການທັງໝົດ ປະມານ 2.343 MW, ອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 6,1%/ປີ, ຕ່ຳກວ່າການຂະຫຍາຍຕົວໃນກໍລະນີ BAU 0,9% ແລະ ມີຄວາມຕ້ອງການກຳລັງໄຟຟ້າ ຫຼຸດລົງປະມານ 198 MW.

ຕາຕະລາງ 3- 10: ການຄາດຄະເນຄວາມຕ້ອງການກຳລັງໄຟຟ້າ ກໍລະນີ (COVID-19)

ຫົວໜ່ວຍ: (MW)

ກໍລະນີ	2021	2022	2023	2024	2025	2030	AAGR (%) 2021 -2030
BAU	1.380	1.514	1.659	1.783	1.902	2.541	7%
COVID-19	1.375	1.516	1.636	1.735	1.829	2.343	6,1%
ການສົມທຽບຄວາມແຕກຕ່າງ	-5	2	-23	- 48	-73	-198	-0,9%

3.3 ການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມຂະແໜງການ

3.3.1 ກໍລະນີພື້ນຖານ (BAU)

ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມຂະແໜງການ ຮອດປີ 2030, ຂະແໜງທີ່ມີຄວາມຕ້ອງການພະລັງງານໄຟຟ້າຫຼາຍກວ່າໝູ່ແມ່ນ ຂະແໜງອຸດສາຫະກຳ, ມີຄວາມຕ້ອງການພະລັງງານປະມານ 8.254 ລ້ານກິໂລວັດໂມງ ກວມເອົາ 53%, ມີອັດຕາການຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 7,6%/ປີ, ຕໍ່ມາແມ່ນຂະແໜງທີ່ຢູ່ອາໄສ, ຂະແໜງບໍລິການ, ຂະແໜງຂົນສົ່ງ ແລະ ຂະແໜງກະສິກຳ.

ຕາຕະລາງ 3- 11: ຄວາມຕ້ອງການພະລັງງານໄຟຟ້າແບ່ງຕາມຂະແໜງການ ກໍລະນີ (BAU)

ຫົວໜ່ວຍ: (GWh)

ຂະແໜງການ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021 -2030**
ອຸດສາຫະກຳ	4.257	4.764	5.231	5.671	6.096	8.254	7.6%
ບໍລິການ	1.546	1.653	1.758	1.865	1.975	2.604	6.0%
ທີ່ຢູ່ອາໄສ	2.543	2.727	2.903	3.071	3.233	4.001	5.2%
ຂົນສົ່ງ	143	165	187	209	231	342	10.2%
ກະສິກຳ	83	118	142	170	184	263	13.6%
ລວມ	8.572	9.427	10.220	10.986	11.718	15.464	6.8%

3.3.2 ກໍລະນີສົ່ງເສີມການນຳໃຊ້ລົດໄຟຟ້າ (EV)

ການສົ່ງເສີມໃຫ້ມີການນຳໃຊ້ລົດໄຟຟ້າຕາມຍຸດທະສາດ ຕາມຍຸດທະສາດ ວ່າດ້ວຍການສົ່ງເສີມການນຳໃຊ້ພະລັງງານສະອາດໃນຂະແໜງຄົມມະນາຄົມ-ຂົນສົ່ງ ເຮັດໃຫ້ ຮອດປີ 2030 ຂະແໜງຂົນສົ່ງມີຄວາມຕ້ອງການພະລັງງານໄຟຟ້າປະມານ 1.664 ລ້ານກິໂລວັດໂມງ, ມີອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 22,2%/ປີ ສູງກວ່າກໍລະນີ BAU, 12%.

ຕາຕະລາງ 3- 12: ຄວາມຕ້ອງການພະລັງງານໄຟຟ້າ ກໍລະນີ (EV)

ຫົວໜ່ວຍ: (GWh)

ຂະແໜງການ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021-2030**
ຂົນສົ່ງກໍລະນີພື້ນຖານ	143	165	187	209	231	342	10,2%
ກໍລະນີ ມີການນຳໃຊ້ລົດໄຟຟ້າ	275	429	583	738	892	1.664	22,2%
ການນຳໃຊ້ພະລັງງານເພີ່ມຂຶ້ນ	132	264	397	529	661	1.322	12%

3.3.3 ກໍລະນີອຸດສາຫະກຳເພີ່ມຂຶ້ນ (IN)

ການສົ່ງເສີມໃຫ້ຂະແໜງອຸດສາຫະກຳຂະຫຍາຍຕົວສູງ ໂດຍອີງຕາມແຜນຄວາມຕ້ອງການໄຟຟ້າຂອງເຂດອຸດສະຫະກຳ ແລະ ເຂດເສດຖະກິດຕ່າງໆ ທົ່ວປະເທດ ແລະ ການໃຫ້ນະໂຍບາຍ ດຶງດູດການລົງທຶນ ດ້ານລາຄາໄຟຟ້າ ແລະ ນະໂຍບາຍດ້ານຕ່າງໆຈາກລັດຖະບານ ເຮັດໃຫ້ ຮອດປີ 2030 ມີຄວາມຕ້ອງການພະລັງງານໄຟຟ້າປະມານ 11.883 ລ້ານກິໂລວັດໂມງ, ມີອັດຕາຂະຫຍາຍຕົວສະເລ່ຍ ແຕ່ປີ 2021 ຫາ 2030 ປະມານ 8,7%/ປີ ສູງກວ່າກໍລະນີ BAU, 1,1%.

ຕາຕະລາງ 3- 13: ຄວາມຕ້ອງການພະລັງງານໄຟຟ້າ ກໍລະນີ (IN)

ຫົວໜ່ວຍ: (GWh)

ຂະແໜງການ	2021	2022	2023	2024	2025	2030	AAGR (%) 2021-2030
ອຸດສາຫະກຳກໍລະນີພື້ນຖານ	4.257	4.764	5.231	5.671	6.096	8.254	7,6%
ກໍລະນີອຸດສາຫະກຳເພີ່ມຂຶ້ນ	5.626	6.189	6.807	7.488	8.087	11.883	8,7%
ການນຳໃຊ້ພະລັງງານເພີ່ມຂຶ້ນ	1.368	1.424	1.577	1.817	1.991	3.628	1,1%


3.4 ສະຫຼຸບ

ຈາກການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າໃນ 5 ກໍລະນີສຶກ ເຫັນວ່າ ຮອດປີ 2030 ຈະມີຄວາມຕ້ອງການພະລັງງານໄຟຟ້າໃນກໍລະນີຕ່ຳສຸດປະມານ 13.820 ລ້ານກິໂລວັດໂມງ ແລະ ກໍລະນີສູງສຸດ ປະມານ 20.415 ລ້ານກິໂລວັດໂມງ ຫຼື ອາດຈະຂະຫຍາຍຕົວສະເລ່ຍແຕ່ປີ 2021 ຫາ 2030 ປະມານ 5,7% ຫາ 8,2%/ປີ. ຄວາມຕ້ອງການກຳລັງໄຟຟ້າໃນກໍລະນີຕ່ຳສຸດ ປະມານ 2.343 MW ແລະ ກໍລະນີສູງສຸດປະມານ 3.188 MW ຫຼື ອາດຈະຂະຫຍາຍຕົວສະເລ່ຍ ແຕ່ 6,1% ຫາ 9,5%/ປີ.

ຕາຕະລາງ 3- 14: ສົມທຽບການຄາດຄະເນຄວາມຕ້ອງການພະລັງງານແຕ່ກໍລະນີສຶກສາ

ຫົວໜ່ວຍ: (GWh)

ກໍລະນີສຶກສາ	2021	2022	2023	2024	2025	2030	AAGR (%) 2021-2030
BAU	8.564	9.419	10.212	10.978	11.712	15.464	6.8%
EV	8.696	9.683	10.609	11.507	12.373	16.787	7.6%
IN	9.931	10.842	11.787	12.794	13.702	19.092	7.5%
EV+IN	10.063	11.106	12.184	13.323	14.363	20.415	8.2%
COVID-19	8.390	9.118	9.759	10.354	10.912	13.820	5.7%



ຮູບທີ່ 3- 2: ເສັ້ນສະແດງການເພີ່ມຂຶ້ນຂອງຄວາມຕ້ອງການໄຟຟ້າ.

ຕາຕະລາງ 3- 15: ສົມທຽບການຄາດຄະເນຄວາມຕ້ອງການກຳລັງໄຟຟ້າແຕ່ກໍລະນີສຶກສາ

ຫົວໜ່ວຍ: (MW)

ກໍລະນີສຶກສາ	**2021**	**2022**	**2023**	**2024**	**2025**	**2030**	**AAGR (%) 2021-2030**
BAU	1.380	1.514	1.659	1.783	1.902	2.541	7%
EV	1.396	1.554	1.723	1.871	2.012	2.760	7,9%
IN	1.403	1.542	1.715	1.883	2.030	2.965	8,7%
EV+IN	1.406	1.571	1.770	1.962	2.134	3.188	9,5%
COVID-19	1.375	1.516	1.636	1.735	1.829	2.343	6,1%

ຈາກຜົນການຄາດຄະເນຄວາມຕ້ອງການພະລັງງານ 5 ກໍລະນີຂ້າງເທິງ ໄດ້ມາສົມທຽບກັບ ຜົນການສຶກສາການຄາດຄະເນຜ່ານມາ ຂອງ ພາກສ່ວນຕ່າງໆ ສະແດງໃຫ້ເຫັນດັ່ງ ຕາຕະລາງລຸ່ມນີ້ ເຫັນວ່າ ຮອດປີ 2030 ການຄາດຄະເນຄວາມຕ້ອງການໃນກໍລະນີ EV+IN ແມ່ນມີຄວາມຕ້ອງການຫຼາຍກວ່າໝູ່, ຕໍ່ມາແມ່ນກໍລະນີ IN ແລະ ກໍລະນີ ຂອງ JICA. ແຕ່ຖ້າທຽບກໍລະນີ BAU ກັບ ກໍລະນີທີ່ພາກສ່ວນອື່ນຄາດຄະເນແມ່ນ ຂ້ອນຂ້າງມີຄວາມໃກ້ຄຽງກັນ.

ຕາຕະລາງ 3- 16: ສົມທຽບການຄາດຄະເນຄວາມຕ້ອງການພະລັງງານໄຟຟ້າກັບພາກສ່ວນຕ່າງໆ

	DEPP/MEM									ຫົວໜ່ວຍ: (GWh)
Year	BAU	EV	IN	EV+IN	COVID-19	EDL	USAID	IAEA	JICA	PWC
2021	8.564	8.696	9.931	10.063	8.390	9.063	7.377	5.877	10.317	6.950
2022	9.419	9.683	10.842	11.106	9.118	9.685	7.978	6.230	11.171	7.479
2023	10.212	10.609	11.787	12.184	9.759	10.181	8.755	6.584	11.834	8.120
2024	10.978	11.507	12.794	13.323	10.354	10.794	9.496	6.937	12.637	8.835
2025	11.712	12.373	13.702	14.363	10.912	11.428	10.218	7.291	13.463	9.624
2026	12.441	13.235	14.658	15.452	11.466	12.072	11.060	7.753	14.261	10.495
2027	13.175	14.101	15.670	16.596	12.028	12.757	11.756	8.216	15.035	11.425
2028	13.922	14.980	16.744	17.802	12.607	13.470	12.574	8.679	15.830	12.447
2029	14.688	15.878	17.886	19.076	13.206	14.230	13.351	9.142	16.632	13.568
2030	15.464	16.787	19.092	20.415	13.820	15.032	13.982	9.605	17.597	14.795
AAGR	6.8%	7.6%	7.5%	8.2%	5.7%	5.8%	7.4%	5.6%	6.1%	8.8%

ພາກທີ IV ການພັດທະນາແຫຼ່ງຜະລິດໄຟຟ້າ

4.1. ສະພາບລວມ

ປະຈຸບັນບັນດາແຫຼ່ງຜະລິດໄຟຟ້າໃນຂອບເຂດທົ່ວປະເທດ (ລວມທັງສົ່ງອອກ) ແມ່ນມາຈາກໄຟຟ້ານ້ຳຕົກກວມເອົາເກືອບທັງໝົດ ຂອງຈຳນວນແຫຼ່ງຜະລິດໄຟຟ້າ ຫຼື ຫຼາຍກວ່າ 80,41%, ໄຟຟ້າຄວາມຮ້ອນຖ່ານຫີນກວມເອົາ 18,61% ແລະ ໄຟຟ້າຈາກແສງຕາເວັນ ແລະ ຊີວະມວນກວມເອົາ 0,98% ຂອງກຳລັງຕິດຕັ້ງໄຟຟ້າທັງໝົດ. ໃນນັ້ນ, ໂຄງການຜະລິດໄຟຟ້າຮັບໃຊ້ພາຍໃນ ໄຟຟ້ານ້ຳຕົກ 91,49%, ໄຟຟ້າຖ່ານຫີນ 3,17% ແລະ ໄຟຟ້າຈາກພະລັງງານທົດແທນ 5,34%, ໄຟຟ້ານ້ຳຕົກແບບຝ່າຍນ້ຳລົ້ນ (Run of the River) ແລະ ມີອ່າງເກັບຂະໜາດນ້ອຍ ກວມເອົາປະມານ 70% ຂອງຈຳນວນແຫຼ່ງຜະລິດໄຟຟ້ານ້ຳຕົກທັງໝົດ, ຈຳນວນໂຄງການທີ່ມີກຳລັງຕິດຕັ້ງໄຟຟ້າ 15 MW ລົງໄປ ຫຼາຍກວ່າ 53% ຫຼື ຫຼາຍກວ່າ 21 % ຂອງກຳລັງຕິດຕັ້ງໄຟຟ້າທັງໝົດ, ເປັນໂຄງການສະໜອງໃຫ້ແກ່ການຊົມໃຊ້ພາຍໃນປະເທດ ການຜະລິດພະລັງງານໄຟຟ້າໃນລະດູແລ້ງຕ່ຳ, ນອກຈາກນັ້ນທີ່ຕັ້ງຂອງໂຄງການດັ່ງກ່າວແມ່ນນອນຢູ່ໃນເຂດພາກເໜືອ ແລະ ພາກໃຕ້ເປັນຈຳນວນຫຼາຍ, ແຕ່ເຂດທີ່ມີຄວາມຕ້ອງການໄຟຟ້າສູງແມ່ນເຂດນະຄອນຫຼວງວຽງຈັນ ແລະ ບັນດາແຂວງພາກກາງ ຊຶ່ງເຮັດໃຫ້ແຜນການນຳໃຊ້ພະລັງງານໄຟຟ້າ ມີຄວາມຫຍຸ້ງຍາກ ແລະ ມີຄ່າສິ້ນເປືອງຫຼາຍ, ເນື່ອງຈາກແຫຼ່ງຜະລິດຢູ່ຫ່າງໄກຈາກເຂດຊົມໃຊ້ໄຟຟ້າ ຊຶ່ງຈຳເປັນຕ້ອງສ້າງສາຍສົ່ງໄຟຟ້າຍາວ. ສະນັ້ນ, ການຄັດເລືອກໂຄງການທີ່ຈະເອົາເຂົ້າໃນແຜນພັດທະນາ ຈຶ່ງເຫັນວ່າຈຸດທີ່ຕັ້ງຂອງໂຄງການມີຄວາມສຳຄັນ ແລະ ມີຄວາມຈຳເປັນຕ້ອງເລືອກແຫຼ່ງຜະລິດໄຟຟ້າຈາກຫຼາຍປະເພດ ເພື່ອຮັບປະກັນຄວາມໝັ້ນຄົງໃນການສະໜອງພະລັງງານໄຟຟ້າໃຫ້ພຽງພໍຕະຫຼອດປີ, ທັງເອົາໃຈໃສ່ການບໍລິຫານຈັດການ ການນຳໃຊ້ພະລັງງານໄຟຟ້າຢ່າງມີປະສິດທິພາບ ທັງດັດສົມການພັດທະນາແຫຼ່ງຜະລິດໄຟຟ້າສອດຄ່ອງກັບຄວາມຕ້ອງການຊົມໃຊ້ທີ່ເພີ່ມຂຶ້ນໃນແຕ່ລະໄລຍະ, ຮັບປະກັນທາງດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມຂອງໂຄງການ ແລະ ພັດທະນາຕາມທິດສີຂຽວຍືນຍົງ.

ການພັດທະນາແຫຼ່ງຜະລິດໄຟຟ້າໃນໄລຍະຜ່ານມາ ເຫັນວ່າ ຍັງມີຫຼາຍດ້ານທີ່ເປັນອຸປະສັກ ແລະ ສິ່ງທ້າທາຍ ຕໍ່ກັບການບໍລິຫານ-ຈັດການ ແລະ ຄຸ້ມຄອງການຜະລິດໄຟຟ້າ ເປັນຕົ້ນແມ່ນ ການຜະລິດໄຟຟ້າໃນລະດູແລ້ງ ບໍ່ພຽງພໍກັບຄວາມຕ້ອງການຊົມໃຊ້, ແຕ່ກົງກັນຂ້າມ ໃນລະດູຝົນແມ່ນສາມາດຜະລິດພະລັງງານໄຟຟ້າໄດ້ຫຼາຍ ເກີນຄວາມຕ້ອງການຊົມໃຊ້ພາຍໃນ; ເຊິ່ງຮຽກຮ້ອງໃຫ້ມີກົນໄກ ແລະນະໂຍບາຍທີ່ເໝາະສົມ ເປັນຕົວຂັບເຄື່ອນ, ສິ່ງເສີມໃຫ້ບັນດາເຂື່ອນໄຟຟ້າຕ່າງໆ ມີກົນໄກໃນການບໍລິຫານນ້ຳໃຫ້ເໝາະສົມ ເພື່ອການຜະລິດພະລັງງານໄຟຟ້າໃນຊ່ວງລະດູແລ້ງເພີ່ມຂຶ້ນ, ໂດຍ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ສະເໜີຕໍ່ລັດຖະບານໃຫ້ອອກຂໍ້ກຳນົດ ທາງດ້ານລາຄາ ຮັບຊື້ໄຟຟ້າຈາກໂຄງການເຂື່ອນໄຟຟ້ານ້ຳຕົກ ເປັນ 2 ລະດູຄື: ລະດູແລ້ງ ແລະ ລະດູຝົນ ໂດຍກຳນົດໃຫ້ລາຄາໄຟໃນຊ່ວງລະດູແລ້ງສູງກວ່າລະດູຝົນ ຊຸກຍູ້ຮັບຊື້ໄຟຟ້າຈາກໂຄງການເຂື່ອນໄຟຟ້າ ທີ່ມີອ່າງເກັບນ້ຳຂະໜາດກາງ ແລະ ໃຫຍ່ ກັກເກັບນ້ຳເພື່ອການຜະລິດໄຟຟ້າ ໃນລະດູແລ້ງ. ເນື່ອງຈາກຄຸນລັກສະນະທາງດ້ານອຸທົກກະສາດໃນເຂດບ້ານເຮົາທີ່ເປັນສອງລະດູຄື: ລະດູແລ້ງ ແລະ ລະດູຝົນ ຈຶ່ງເຮັດໃຫ້ການຜະລິດໄຟຟ້າໃນລະດູການຈາກເຂື່ອນມີຄວາມແຕກໂຕນກັນຫຼາຍ, ສະນັ້ນ, ເພື່ອເປັນການແກ້ໄຂບັນຫາດັ່ງກ່າວ ຈະຕ້ອງໄດ້ຊຸກຍູ້ ສົ່ງເສີມໃຫ້ມີການພັດທະນາແຫຼ່ງຜະລິດ ໄຟຟ້າທີ່ຫຼາກຫຼາຍ ໂດຍນຳໃຊ້ທ່າແຮງທີ່ເຮົາມີ ເປັນຕົ້ນແມ່ນ ເຂື່ອນໄຟຟ້າທີ່ມີອ່າງເກັບນ້ຳ, ໄຟຟ້າຄວາມຮ້ອນຈາກຖ່ານຫີນ, ແສງຕາເວັນ ເພື່ອເປັນການປະສົມປະສານການຜະລິດ ຮັບປະກັນໃນການສະໜອງໄຟຟ້າໃຫ້ມີຄວາມໝັ້ນຄົງ. ນອກຈາກນັ້ນ, ເພື່ອເປັນການຮັບປະກັນໃນການສະໜອງໄຟຟ້າໃຫ້ມີຄວາມໝັ້ນຄົງຂຶ້ນຕື່ມ, ການແລກປ່ຽນພະລັງງານໄຟຟ້າກັບປະເທດເພື່ອນບ້ານ ຍັງມີຄວາມຈຳເປັນ ເພື່ອເປັນການດຸ່ນດຽ່ງພະລັງງານໄຟຟ້າພາຍໃນປະເທດ ເປັນຕົ້ນເຂດພື້ນທີ່ທີ່ຕິດກັບຊາຍແດນ ຫ່າງໄກຈາກແຫຼ່ງຜະລິດ, ຊຶ່ງການລົງທຶນສ້າງລະບົບສາຍສົ່ງໄຟຟ້າໄປຫາເຂດດັ່ງກ່າວ ແມ່ນບໍ່ມີປະສິດທິຜົນທາງດ້ານເສດຖະກິດ.

4.2. ທິດທາງ:

1) ຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫ່ຍຄັ້ງທີ່ XI ຂອງພັກ; ວິໄສທັດ ຮອດປີ 2030, ຍຸດທະສາດພັດທະນາ 2025 ແລະ ແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ IX (2021-2025).
2) ສືບຕໍ່ພັດທະນາແຫຼ່ງຜະລິດໄຟຟ້າ ໃຫ້ສອດຄ່ອງກັບຄວາມຕ້ອງການໃຊ້ໄຟຟ້າ ພາຍໃນປະເທດ ແລະ ສົ່ງອອກຂາຍຕ່າງປະເທດ ພ້ອມທັງຮັບປະກັນການສະໜອງພະລັງງານໄຟຟ້າໃຫ້ມີຄວາມໝັ້ນຄົງເທື່ອລະກ້າວ.
3) ດັດສົມໃນການພັດທະນາແຫຼ່ງຜະລິດໄຟຟ້າທີ່ມີການພັດທະນາແຫຼ່ງພະລັງງານດຽວຫຼາຍເກີນໄປ ເພື່ອເຮັດໃຫ້ການພັດທະນາມີການປະສົມປະສານຫຼາກຫຼາຍແຫຼ່ງຜະລິດ, ຍົກສູງການຜະລິດໄຟຟ້າໃນລະດູແລ້ງໄດ້ຫຼາຍ ທີ່ສອດຄ່ອງກັບເງື່ອນໄຂ ໄຟຟ້ານ້ຳຕົກ [1] 75% (ໃນນັ້ນ ພັດທະນາເຂື່ອນແບບມີອ່າງເກັບນ້ຳໃຫ້ກວມເປີເຊັນຫຼາຍຂຶ້ນ), ໄຟຟ້າຖ່ານຫີນ [1]14% ແລະ ໄຟຟ້າພະລັງງານທົດແທນອື່ນ [1]11%.
4) ປັບປຸງການບໍລິຫານ ຈັດການການຜະລິດເຂື່ອນໄຟຟ້າສາມາດນຳໃຊ້ຊັບພະຍາກອນນ້ຳ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ຍົກສູງການຜະລິດພະລັງງານໄຟຟ້າສະໜອງໃຫ້ພຽງພໍໃນລະດູແລ້ງ.
5) ສືບຕໍ່ປັບປຸງ ບັນດາອຸປະສັກ ແລະ ສິ່ງທ້າທາຍຕ່າງໆ ທີ່ມີຕໍ່ການພັດທະນາແຫຼ່ງຜະລິດໄຟຟ້າ ທັນ ເຂົ້າສູ່ລະບຽບກົດໝາຍຢ່າງເປັນລະບົບຄົບຊຸດ ເທື່ອລະກ້າວ.

[1] ຕົວເລກດັດແກ້ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 22/ສພຊ, ລົງວັນທີ 16/11/2021]

4.3. ເປົ້າໝາຍ

ການພັດທະນາແຫຼ່ງຜະລິດໄຟຟ້າ ບົນພື້ນຖານ 3 ຫຼັກການໃຫ່ຍ, 12 ເງື່ອນໄຂ ໃນການຂັດເລືອກໂຄງການ ທີ່ສອດຄ່ອງກັບສະພາບການຄຸ້ມຄອງການພັດທະນາພະລັງງານ ບົນເງື່ອນໄຂການຫັນປ່ຽນໃໝ່ ທີ່ມີການກຳນົດຫຼັກການ, ເງື່ອນໄຂ, ການບັນຈຸໂຄງການ, ການວິເຄາະ, ການປຽບທຽບ-ຊັ່ງຊາ, ການສະໜັບ-ຕີລາຄາ ແລະ ມີກົນໄກຈັດຕັ້ງປະຕິບັດ ລາຍລະອຽດມີດັ່ງນີ້:

4.3.1. ຫຼັກການໃນການພັດທະນາໂຄງການຮັບໃຊ້ພາຍໃນ

1) ສ້າງຄວາມໝັ້ນຄົງທາງດ້ານພະລັງງານ (Power Supply Security)

- ໃຫ້ຄວາມສຳຄັນກັບຄວາມໝັ້ນຄົງລະບົບໄຟຟ້າຂອງ ສປປ ລາວ ຄວບຄຸມທັງລະບົບຜະລິດໄຟຟ້າ, ລະບົບສົ່ງໄຟຟ້າ ແລະ ລະບົບຈຳໜ່າຍໄຟຟ້າ ໃນແຕ່ລະເຂດ ແຕ່ລະພາກ ເພື່ອຕອບສະໜອງປະລິມານຄວາມຕ້ອງການໄຟຟ້າ ຮອງຮັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ສອດຄ່ອງກັບການເຕີບຕົວທາງດ້ານເສດ ຖະກິດ ອັດຕາການເພີ່ມຂຶ້ນຂອງປະຊາກອນ ແລະ ອັດຕາການຂະຫຍາຍຕົວຂອງຕົວເມືອງ ແລະ ມີໂຮງໄຟຟ້າເພື່ອຄວາມໝັ້ນຄົງໃນລະດັບທີ່ເໝາະສົມ ເພື່ອຮອງຮັບກໍລະນີເກີດເຫດວິກິດດ້ານພະລັງງານ.
- ສົ່ງເສີມການນຳໃຊ້ລະບົບໄຟຟ້າແສງຕາເວັນເທິງຫຼັງຄາ ໃນເຂດຊົນນະບົດຫ່າງໄກສອກຫຼີກ ທີ່ລະບົບສາຍສົ່ງໄຟຟ້າບໍ່ທັນເຂົ້າເຖິງ ແລະ ລະບົບເຊື່ອມຕໍ່ກັບຕາຂ່າຍໄຟຟ້າສາທາລະນະ ເພື່ອຜະລິດປະສົມປະສານກັບແຫຼ່ງຜະລິດພະລັງງານປະເພດອື່ນໆ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບຄວາມຕ້ອງການຊົມໃຊ້ໄຟຟ້າ ໃນແຕ່ລະພື້ນທີ່.
- ສົ່ງເສີມປະສິດທິພາບໃນລະບົບໄຟຟ້າ ທັງດ້ານການຜະລິດໄຟຟ້າ ແລະ ດ້ານການນຳໃຊ້ໄຟຟ້າ ໃຫ້ເກີດການຕອບສະໜອງດ້ານການໃຊ້ໄຟຟ້າ ເພື່ອເພີ່ມປະສິດທິພາບໃນການຫຼຸດຄວາມຕ້ອງການໄຟຟ້າສູງສຸດ ທີ່ຈະເປັນ

ປະໂຫຍດຕໍ່ການບໍລິຫານຈັດການ ສະພາວະວິກິດການດ້ານພະລັງ ງານໄຟຟ້າ ສາມາດສະລໍການກໍ່ສ້າງໂຮງໄຟຟ້າ ແລະ ການຫຼຸດຜ່ອນຄ່າໃຊ້ຈ່າຍເງິນຕານຳເຂົ້າພະລັງງານຈາກຕ່າງປະເທດ.

2) ດ້ານເສດຖະກິດ (Economy)

- ຕ້ອງຄຳນຶງເຖິງຕົ້ນທຶນການຜະລິດໄຟຟ້າທີ່ເໝາະສົມ ສົ່ງເສີມການພັດທະນາແຫຼ່ງຜະລິດໄຟຟ້າທີ່ມີຕົ້ນທຶນຕ່ຳເພື່ອ ຫຼຸດພາລະຂອງຜູ້ໃຊ້ໄຟຟ້າ ແລະ ບໍ່ເປັນອຸປະສັກຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດໄລຍະຍາວ.
- ປັບປຸງການບໍລິຫານຈັດການຕົ້ນທຶນການຜະລິດໄຟຟ້າ ຂອງປະເທດຢ່າງມີປະສິດທິພາບ ການຜະລິດໄຟຟ້າ ສະທ້ອນຕົ້ນທຶນທີ່ແທ້ຈິງ.

3) ດ້ານສິ່ງແວດລ້ອມ (Environment)

- ທຸກໆໂຄງການລົງທຶນພັດທະນາແຫຼ່ງຜະລິດໄຟຟ້າ ໃນ ສປປ ລາວ ຕ້ອງໄດ້ປະຕິບັດຕາມລະບຽບ, ກົດໝາຍ ລວມທັງຂະບວນການພັດທະນາຕ່າງໆ.
- ທຸກໆໂຄງການພັດທະນາແຫຼ່ງຜະລິດໄຟຟ້າ ຕ້ອງມີການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອໃຫ້ສອດຄ່ອງກັບບົດລາຍງານການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ສັງຄົມ (FS) ຕາມຂັ້ນ ຕອນຢ່າງຄົບຖ້ວນ.
- ທຸກໆຂັ້ນຕອນການພັດທະນາແຫຼ່ງຜະລິດໄຟຟ້າ ເຊັ່ນ: ໄລຍະສຶກສາຄວາມເປັນໄປໄດ້ (FS), ໄລຍະພັດທະນາ ໂຄງການ (PDA), ໄລຍະສັນຍາສຳປະທານ (CA) ແລະ ໄລຍະດຳເນີນງານ (COD) ຕ້ອງໄດ້ຮັບການປະເມີນ ຜົນໂດຍນຳໃຊ້ມາດຕະການ ຂອງນະໂຍບາຍພັດທະນາໄຟຟ້ານ້ຳຕົກແບບຍືນຍົງ ຂອງ ສປປ ລາວ.

4.3.2. ເງື່ອນໄຂຄັດເລືອກໂຄງການຮັບໃຊ້ພາຍໃນ

ການພັດທະນາແຫຼ່ງຜະລິດໄຟຟ້າ ແມ່ນການຄັດເລືອກ, ການເລືອກເຟັ້ນ ແລະ ຈັດລຽງເອົາບັນດາໂຄງການເຂົ້າ ໃນຍຸດທະສາດພັດທະນາ ເພື່ອສະໜອງພະລັງງານໄຟຟ້າໃຫ້ແກ່ການຊົມໃຊ້ພາຍໃນປະເທດ ໃຫ້ພຽງພໍໃນແຕ່ລະໄລຍະ ເພື່ອ ຍົກສູງການຜະລິດໄຟຟ້າໃນລະດູແລ້ງໃຫ້ໄດ້ພຽງພໍກັບຄວາມຕ້ອງການ ມີດັ່ງນີ້:

1) ໂຮງໄຟຟ້າຕາມນະໂຍບາຍພະລັງງານຂອງ ສປປ ລາວ ໄດ້ກຳນົດສັດສ່ວນໄຟຟ້ານ້ຳຕົກ ກວມເອົາ [1]75%, ໄຟຟ້າຖ່ານຫີນ [1]14% ແລະ ພະລັງງານທົດແທນ [1]11%, ໃນນັ້ນ ປະເພດມີອ່າງເກັບນ້ຳກວມເອົາ 70%. ຕ້ອງສົ່ງເສີມການພັດທະນາໄຟຟ້ານ້ຳຕົກ ທີ່ມີອ່າງເກັບນ້ຳໂຄງການທີ່ສາມາດຜະລິດໄຟຟ້າໄດ້ໃນລະດູແລ້ງ, ໂຄງການທີ່ມີປະສິດທິພາບ ໃນການສົ່ງພະລັງງານໄຟຟ້າ ແກ່ນະຄອນຫຼວງວຽງຈັນ ແລະ ເຂດພາກກາງ ທີ່ມີ ຄວາມຕ້ອງການພະລັງງານໄຟຟ້າຫຼາຍ.
2) ໂຮງໄຟຟ້າຄວາມຮ້ອນຖ່ານຫີນ ເພື່ອສະໜອງພະລັງງານໄຟຟ້າ ໃຫ້ແກ່ລະບົບໄຟຟ້າ ໃຫ້ມີຄວາມສະຖຽນລະພາບ ແລະ ຄວາມໝັ້ນຄົງ, ໂດຍສະເພາະແມ່ນການສະໜອງໄຟຟ້າລະດູແລ້ງ.
3) ໂຮງໄຟຟ້າພະລັງງານທົດແທນ ຕາມນະໂຍບາຍຜະລິດໄຟຟ້າ ໄດ້ແກ່ ພະລັງງານໄຟຟ້າແສງຕາເວັນ, ຊີວະມວນ ຕ້ອງເປັນລາຄາທີ່ສາມາດແຂ່ງຂັນໄດ້, ສາມາດຮັກສາລາຄາຂາຍຍ່ອຍໄດ້ ແລະ ຕ້ອງຮັບປະກັນໄດ້ທາງດ້ານ ເຕັກນິກໃນການເຊື່ອມຕໍ່ເຂົ້າລະບົບ.

ພື້ນຖານໃນການພັດທະນາແຫຼ່ງຜະລິດໄຟຟ້າ ຈະຕ້ອງພິຈາລະນາຕາມຄວາມເປັນຈິງ ຕໍ່ກັບ ການສະເໜີອະນຸມັດ ໂຄງການແຕ່ລະປີ ໂດຍຄຳນຶງເຖິງແຫຼ່ງງົບປະມານ, ຕະຫຼາດ, ລາຄາຊື້-ຂາຍ, ຈຸດເຊື່ອມຕໍ່ສາຍສົ່ງ ແລະ ກຳລັງຊື້ທີ່ຈະແຈ້ງ,

ຫຼຸດຜ່ອນການນຳເຂົ້າໄຟຟ້າຈາກຕ່າງປະເທດ ແລະ ຫັນມາເພີ່ມການນຳໃຊ້ໄຟຟ້າທີ່ຜະລິດຈາກພາຍໃນ ທີ່ມີການຊັ່ງຊາດ້ານເສດຖະກິດ ແລະ ກ້າວໄປເຖິງຢຸດການນຳເຂົ້າບາງຈຸດໂດຍພື້ນຖານ.

4) ຖືເອົາໂຄງການທີ່ດຳເນີນການຜະລິດໄຟຟ້າໃນປະຈຸບັນເປັນພື້ນຖານໃນການສະໜອງພະລັງງານໄຟຟ້າ.
5) ໂຄງການເຂື່ອນໄຟຟ້ານ້ຳຕົກທີ່ກຳລັງກໍ່ສ້າງ, ໂຄງການກະກຽມກໍ່ສ້າງ, ໂຄງການມີຄວາມຄືບໜ້າຫຼາຍ ແລະ ໂຄງການອື່ນໆ ທີ່ເຫັນວ່າມີຄວາມອາດສາມາດສູງໃນການສະໜອງພະລັງງານໄຟຟ້າລະດູແລ້ງ.
6) ການຄັດເລືອກແຫຼ່ງຜະລິດຈາກເຂື່ອນໄຟຟ້ານ້ຳຕົກ ແບບມີອ່າງເກັບນ້ຳຂະໜາດໃຫຍ່, ກາງ, ນ້ອຍ ແລະ ແບບຝາຍນ້ຳລົ້ນຕາມລຳດັບທີ່ຈຳເປັນ ເພື່ອຮັບປະກັນໃຫ້ແກ່ການຜະລິດໄຟຟ້າລະດູແລ້ງ, ສາມາດຕ້ານແລ້ງ, ຕ້ານຖ້ວມ, ສາມາດນຳໃຊ້ນ້ຳເຂົ້າໃນຂະແໜງການອື່ນໆ ຢ່າງມີປະສິດທິຜົນ.
7) ການຄັດເລືອກແຫຼ່ງຜະລິດໄຟຟ້າຈາກເຂື່ອນໄຟຟ້ານ້ຳຕົກ ແມ່ນໄດ້ກຳນົດບົນພື້ນຖານຄ່າ “ Regulating Capacity Factor ຫຼື RCF ” ໃຊ້ເພື່ອກຳນົດ ແລະ ໃຈ້ແຍກ ປະເພດຂອງໂຄງການແບບມີອ່າງເກັບນ້ຳຂະໜາດໃຫຍ່, ກາງ, ນ້ອຍ ແລະ ແບບຝາຍນ້ຳລົ້ນ (Run of the River) ແລະ ຄວາມແຕກຕ່າງພະລັງງານທີ່ໄດ້ຮັບມີດັ່ງນີ້:
   - ເຂື່ອນໄຟຟ້າແບບຝາຍນ້ຳລົ້ນ (Run of the River “RoR”) ໝາຍຄວາມວ່າ ແມ່ນເຂື່ອນທີ່ບໍ່ມີຄວາມເປັນໄປໄດ້ທີ່ຈະຄວບຄຸມການໄຫຼຂອງກະແສນ້ຳເປັນລາຍວັນ, ອາທິດ ແລະ ສາມາດຮັກສານ້ຳໄດ້ໄລຍະ 2 ຊົ່ວໂມງ ລົງມາ (~ 0,1 ວັນ) ຫຼື ມີຄ່າ RCF ຕ່ຳກວ່າ 2% (ສະເພາະເຂື່ອນໄຟຟ້າຂະໜາດນ້ອຍ).
   - ເຂື່ອນໄຟຟ້າທີ່ມີອ່າງເກັບນ້ຳຂະໜາດນ້ອຍ (Poundage type) ໝາຍຄວາມວ່າ ແມ່ນເຂື່ອນທີ່ມີຄວາມສາມາດເກັບນ້ຳໄວ້ໃຊ້ໃນຊ່ວງເວລາ ຄວາມຕ້ອງການປົກກະຕິ ມີຄ່າໃນລະຫວ່າງ 2%<RCF<5%.
   - ເຂື່ອນໄຟຟ້າທີ່ມີອ່າງເກັບນ້ຳ (Reservoir type) ໝາຍຄວາມວ່າ ແມ່ນເຂື່ອນທີ່ມີຄວາມສາມາດບັນຈຸນ້ຳເພື່ອໃຊ້ຜະລິດໄຟຟ້າ ມີຄ່າ RCF ໃຫຍ່ກວ່າ > 5%.
8) ການພັດທະນາໄຟຟ້າຄວາມຮ້ອນຖ່ານຫີນ ຕ້ອງນຳໃຊ້ຂະບວນການທີ່ສະອາດ (Clean Coal Technology) ເລີ່ມຕັ້ງແຕ່ຂະບວນກ່ອນເຜົາໄໝ້ (Pre-Combustion), ໄລຍະເຜົາໄໝ້ (Combustion) ແລະ ຫຼັງການເຜົາໄໝ້ (Post Combustion) ທີ່ລັດຖະບານ ສປປ ລາວປະກາດນຳໃຊ້ ແລະ ຕາມຄູ່ມືແນະນຳຂອງ ອາຊ່ຽນ ASEAN CLEAN TECHNOLOGY (CCT) HANDBOOK FOR POWER PLANT ເປັ ນ ບ່ອນອີງພື້ນຖານ.
9) ການຂັດເລືອກໂຄງການໄຟຟ້າແສງຕາເວັນ, ລົມ ເພື່ອສະໜອງໃຫ້ແກ່ການນຳໃຊ້ພາຍໃນປະເທດ ຕ້ອງຮັບປະກັນຄວາມເໝາະສົມໃນແຕ່ລະພື້ນທີ່ ຕາມຜົນການສຶກສາຕົວຈິງຂອງລະບົບ, ຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າ, ຮັບປະກັນທາງດ້ານເສດຖະກິດ-ເຕັກນິກ ແລະ ສອດຄ່ອງຕາມເງື່ອນໄຂການເຊື່ອມຕໍ່ລະບົບຂອງໄຟຟ້າ ລາວ.
10) ທຸກປະເພດເຂື່ອນໄຟຟ້ານ້ຳຕົກ ຄວາມສາມາດໃນການຜະລິດພະລັງງານໄຟຟ້າຕ່ຳສຸດຕ້ອງບໍ່ໃຫ້ຫຼຸດ 30% ຂອງການຜະລິດພະລັງງານໄຟຟ້າສູງສຸດ. ຄັດເລືອກເອົາໂຄງການແຫຼ່ງຜະລິດໄຟຟ້າ ໂດຍຜ່ານ ຂັ້ນຕອນການພັດທະນາ ທີ່ໄດ້ລະບຸໄວ້ໃນ ກົດໝາຍໄຟຟ້າສະບັບປັບປຸງປີ 2017 ມາດຕາ 57, ມາດຕາ 58.

11) ຄັດເລືອກແຫຼ່ງຜະລິດໄຟຟ້າ ເຂົ້າໃນຍຸດທະສາດພັດທະນາໄຟຟ້າຂອງແຂວງ, ນະຄອນຫຼວງ ແມ່ນໃຫ້ພິຈາລະນາໃນແຕ່ລະດ້ານດັ່ງນີ້:

- ການກຳນົດແຫຼ່ງຜະລິດໄຟຟ້າໃໝ່ (ຂະໜາດ 5 MW ລົງມາ) ຕາມແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແມ່ນໃຫ້ສອດຄ່ອງກັບຄວາມຕ້ອງການໄຟຟ້າພາຍໃນແຂວງ ເຊັ່ນ: ເຂດທີ່ມີພະລັງງານໄຟຟ້າຊົມໃຊ້ບໍ່ພຽງພໍ, ເຂດທີ່ບໍ່ມີພະລັງງານໄຟຟ້າຊົມໃຊ້ ຫຼື ໃນເຂດທີ່ລະບົບຈຳໜ່າຍຂອງໄຟຟ້າລາວບໍ່ທັນເຂົ້າເຖິງ.
- ຕ້ອງມີການດຸ່ນດ່ຽງ ພະລັງງານໄຟຟ້າໃນແຕ່ລະເມືອງ/ນະຄອນ, ທົ່ວແຂວງ ແລະ ນະຄອນຫຼວງໃຫ້ສອດຄ່ອງກັບການ ດຸ່ນດ່ຽງພະລັງງານ ທົ່ວປະເທດ.

12) ທຸກໆໂຄງການພັດທະນາໄຟຟ້າ ທີ່ເຂົ້າໃນຍຸດທະສາດການພັດທະນາພະລັງງານໄຟຟ້າ ຂອງ ສປປ ລາວ ສາມາດປັບປຸງປ່ຽນແປງໄດ້ ຖ້າເຫັນວ່າຜ່ານການສຶກສາຢ່າງລະອຽດ ຖ້າບໍ່ສອດຄ່ອງກັບເງື່ອນໄຂທີ່ກ່າວມາຂ້າງເທິງ ແລະ ລະບຽບກົດ ໝາຍທີ່ກ່ຽວຂ້ອງກຳນົດໄວ້ ແມ່ນສາມາດຄັດເລືອກ ແລະ ປ່ຽນແທນໂຄງການໄດ້ ເພື່ອໃຫ້ໄດ້ໂຄງການທີ່ໃຫ້ ຜົນປະໂຫຍດສູງສຸດ, ເປັນຕົ້ນແມ່ນໃຫ້ພະລັງງານໃນລະດູແລ້ງສູງ, ລາຄາໄຟຟ້າສົມເຫດສົມຜົນ ແລະ ສອດຄ່ອງກັບຄວາມຕ້ອງການທີ່ຈຳເປັນຂອງລັດຖະບານແຕ່ລະໄລຍະ.

[[1] ຕິວເລກດັດແກ້ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 22/ສພຊ, ລົງວັນທີ 16/11/2021]

4.3.3. ຜົນການວິເຄາະ ແລະ ການບັນຈຸ ໂຄງການເຂົ້າໃນແຜນ

1) ທາງເລືອກທີ່ໜຶ່ງ (ກໍລະນີພື້ນຖານ "BAU")

ໂດຍຖືເອົາໂຄງການທີ່ດຳເນີນການຜະລິດໄຟຟ້າໃນປະຈຸບັນເປັນພື້ນຖານໃນການ ດຸ່ນດ່ຽງ, ເອົາໂຄງການທີ່ກຳລັງກໍ່ສ້າງ, ໂຄງການທີ່ມີຄວາມຄືບໜ້າມີ (PPA) ຈຳນວນໜຶ່ງທີ່ຜ່ານເງື່ອນ ແລະ ໂຄງການທີ່ກຳລັງສຶກສາ ເພື່ອປະສົມປະສານແຫຼ່ງຜະລັງງານ ຍົກສູງການສະໜອງພະລັງງານໄຟຟ້າໃນລະດູແລ້ງ ເຂົ້າໃນການວິເຄາະໃນການດຸ່ນດ່ຽງ ໃນແຕ່ລະທາງເລືອກດັ່ງນີ້.

» ກຳນົດເອົາໂຄງການເຂົ້າແຜນຮັບໃຊ້ພາຍໃນ

✓ ໂຮງໄຟຟ້າທີ່ດຳເນີນການຜະລິດ ຮອດປີ 2020

ລ/ດ	ແຫຼ່ງຜະລິດໄຟຟ້າ	ກຳລັງຕິດຕັ້ງ (MW)	ກຳລັງການຜະລິດ (GWh)	ອັດຕາສ່ວນກຳລັງຕິດຕັ້ງໄຟຟ້າ	ອັດຕາສ່ວນກຳລັງການຜະລິດໄຟຟ້າ
1)	ໄຟຟ້ານ້ຳຕົກ > 5MW	2.846	13.011	92,26%	91,60%
2)	ໄຟຟ້ານ້ຳຕົກ<=5MW	40	191	1,30%	1,35%
3)	ໄຟຟ້າຖ່ານຫີນ	100	670	3,24%	4,72%
4)	ໄຟຟ້າແສງຕາເວັນ	57	92	1,83%	0,65%
5)	ໄຟຟ້າຊີວະມວນ	42	239	1,36%	1,68%
	ລວມ	**3.085**	**14.203**	**100%**	**100%**

ຕາຕະລາງ 4- 1: ສັດສ່ວນພະລັງງານໄຟຟ້າ ຮອດປີ 2020 (BAU)

✓ ໂຮງໄຟຟ້າທັງໝົດທີ່ຈະດຳເນີນການຜະລິດ ຮອດປີ 2025

ລ/ດ	ແຫຼ່ງຜະລິດໄຟຟ້າ	ກຳລັງຕິດຕັ້ງ(MW)	ກຳລັງການຜະລິດ (GWh)	ອັດຕາສ່ວນກຳລັງຕິດຕັ້ງໄຟຟ້າ	ອັດຕາສ່ວນກຳລັງການຜະລິດໄຟຟ້າ
1)	ໄຟຟ້ານ້ຳຕົກ > 5MW	3.858	17.039	78,87%	80,52%
2)	ໄຟຟ້ານ້ຳຕົກ<=5MW	60	283	1,23%	1,34%
3)	ໄຟຟ້າຖ່ານຫີນ	445	3.037	9,10%	14,35%
4)	ໄຟຟ້າແສງຕາເວັນ	487	563	9,95%	2,66%
5)	ໄຟຟ້າຊີວະມວນ	42	239	0,86%	1,13%
